ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ

PHOUTHEN PASAXON

ສຳນັກງານຕັ້ງຢູ່ອາຄານລະບະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

08 - 14 ພະຈິກ 2023
ປີທີ 12
ສະບັບທີ 945
ລາຍສັປປະດາ

## ສສຊ ປະກອບຄຳເຫັນໃສ່ບົດລາຍງານຂອງອົງການກວດກາແຫ່ງລັດ ແລະ ອົງການກວດສອບແຫ່ງລັດ





(ສພຊ) ໃນລະຫວ່າງ ວັນທີ 6-7 ພະຈິກ 2023 ກອງປະຊຸມສະໄໝສາມັນເທື່ອ 6 ຂອງສະພາແຫ່ງຊາດ ຊຸດທີ IX ເຊິ່ງໄດ້ດຳເນີນມາເປັນມື້ທີ 6 ໂດຍການເປັນປະທານຂອງ ທ່ານ ປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ. ໃນວາລະກອງປະຊຸມວັນທີ 6 ພະຈິກ ກອງປະຊຸມໄດ້ຮັບຟັງບົດລາຍງານຂອງກະຊວງປ້ອງກັນປະເທດ ກ່ຽວກັບການດຳເນີນຜົນການຈັດຕັ້ງປະຕິບັດກົດໝາຍ ຈຳນວນ 2 ສະບັບຄື: ກົດໝາຍວ່າດ້ວຍການປ້ອງກັນຊາດ, ກົດໝາຍວ່າດ້ວຍນາຍທະຫານກອງທັບປະຊາຊົນລາວ; ບົດລາຍງານຂອງກະຊວງປ້ອງກັນຄວາມສະຫງົບ ກ່ຽວກັບການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍກຳລັງປ້ອງກັນຄວາມສະຫງົບປະຊາຊົນ; ບົດປະກອບຄຳເຫັນຂອງຄະນະປະຈຳສະພາແຫ່ງຊາດ ຕໍ່ບົດລາຍງານການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍຂົງເຂດປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຈຳນວນ 3 ສະບັບດັ່ງກ່າວ; ຮັບຟັງການສະເໜີຮ່າງມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາບົດລາຍງານການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍຂົງເຂດປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຈຳນວນ 3 ສະບັບດັ່ງກ່າວ.

ໃນວັນທີ 7 ພະຈິກ ກອງປະຊຸມໄດ້ຮັບຟັງບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວອົງການ ກາງສະໄໝ 5 ປີ (2021-2025) ແລະ ທິດທາງແຜນການທ້າຍສະໄໝ ຮອດປີ 2025, ການຈັດຕັ້ງປະຕິບັດແຜນການ ປະຈຳປີ 2023 ແລະ ແຜນການປະຈຳປີ 2024 ຂອງອົງການກວດກາແຫ່ງລັດແລະບົດລາຍ

ອ່ານຕໍ່ໜ້າ 8

### ຂ່າວໜ້າໃນ



ລາຍຮັບງົບປະມານເກີນແຜນ... (ໜ້າ 9)



ສະມັດຊາໃຫຍ່ UN... (ໜ້າ 11)



ການເສຍສະລະ ເພື່ອເພື່ອນມະນຸດ... (ໜ້າ 12)

## ປະທານສະພາແຫ່ງຊາດ ຕ້ອນຮັບການເຂົ້າຢ້ຽມຢາມພົບປະຂອງປະທານາທິບໍດີ ແຫ່ງ ມົງໂກລີ



(ສພຊ)ວັນທີ6ພະຈິກ 2023 ທີ່ນະຄອນຫຼວງວຽງຈັນ, ພະນະທ່ານ ປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ ແຫ່ງ ສປປ ລາວ ໄດ້ຕ້ອນຮັບການຢ້ຽມຢາມພົບປະຂອງພະນະທ່ານ ຄູເຣລສຸກຄ໌ ໂອຄະນາ (UKHNAA KHURELSUKH) ປະທານາທິບໍດີແຫ່ງມົງໂກລີໃນໂອກາດເດີນທາງມາຢ້ຽມຢາມລັດຖະກິດ ທີ່ ສປປ ລາວ ໃນລະຫວ່າງວັນທີ 5-6 ພະຈິກ 2023.

ໃນໂອກາດນີ້, ພະນະທ່ານ ປອ. ໄຊສົມພອນ ພົມວິຫານ ໄດ້ຕີລາຄາສູງຕໍ່ການເດີນທາງມາຢ້ຽມຢາມ ສປປ ລາວ ຂອງຄະນະຜູ້ແທນຂັ້ນສູງຂອງມົງໂກລີ ເຊິ່ງໄດ້ກາຍເປັນເຫດການທາງດ້ານປະຫວັດສາດອັນສຳຄັນອີກບາດກ້າວໜຶ່ງແຫ່ງການພົວພັນ ລະຫວ່າງ ສປປ

ອ່ານຕໍ່ໜ້າ 2

## ຕາງໜ້າຄະນະປະຈຳສະພາແຫ່ງຊາດ ປະກອບຄຳເຫັນຕໍ່ບົດລາຍງານຂອງກະຊວງປ້ອງກັນປະເທດ ແລະ ກະຊວງປ້ອງກັນຄວາມສະຫງົບ



(ສພຊ) ວັນທີ 6 ພະຈິກ 2023 ທ່ານ ປອ. ວົງສັກ ພັນທະວົງ ກຳມະການຄະນະປະຈຳ, ປະທານກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໄດ້ຕາງໜ້າໃຫ້ຄະນະປະຈຳສະພາແຫ່ງຊາດ ປະກອບຄຳເຫັນຕໍ່ບົດລາຍງານ ຂອງກະຊວງປ້ອງກັນປະເທດ ແລະ ກະຊວງປ້ອງກັນຄວາມສະຫງົບ ກ່ຽວກັບການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ຂົງເຂດປ້ອງກັນຊາດ-ປ້ອງກັນຄວາມສະຫງົບ 3 ສະບັບ ໃນກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX ວ່າ: ຜ່ານການຕິດຕາມກວດກາຂອງຄະນະປະຈຳສະພາແຫ່ງຊາດ ແລະ ການລາຍງານຂອງກະຊວງປ້ອງກັນປະເທດ ແລະ ກະຊວງປ້ອງກັນຄວາມສະຫງົບ, ຄະນະປະຈຳສະພາແຫ່ງຊາດ ຕີລາຄາສູງຕໍ່ທັງສອງກະຊວງ ທີ່ໄດ້ເປັນເຈົ້າການດຳເນີນການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການປ້ອງກັນຊາດ, ກົດໝາຍວ່າດ້ວຍນາຍທະຫານກອງທັບປະຊາຊົນລາວ ແລະ ກົດໝາຍວ່າດ້ວຍກຳລັງປ້ອງກັນຄວາມສະຫງົບປະຊາຊົນ

ອ່ານຕໍ່ໜ້າ 2

## ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ໃນຂົງເຂດປ້ອງກັນຊາດ



(ສພຊ)ທ່ານພົທ.ປອ. ທອງລອຍ ສີລິວົງ ຮອງລັດຖະມົນຕີກະຊວງປ້ອງກັນປະເທດ ໄດ້ຕາງໜ້າກະຊວງປ້ອງກັນປະເທດ ລາຍງານຕໍ່ກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX ໃນວັນທີ 6 ພະຈິກ 2023 ກ່ຽວກັບການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍໃນຂົງເຂດປ້ອງກັນຊາດ ວ່າ: ໂດຍປະຕິບັດຕາມກົດໝາຍວ່າດ້ວຍການສ້າງນິຕິກຳ, ມະຕິ ສະບັບເລກທີ 51/ຄປຈ, ລົງວັນທີ 20 ມິນາ 2023 ແລະ ຄຳແນະນຳສະບັບເລກທີ 14/ຄປຈ, ລົງວັນທີ 10 ພຶດສະພາ 2023

ອ່ານຕໍ່ໜ້າ 4

## ລາຍງານການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍກຳລັງປ້ອງກັນຄວາມສະຫງົບປະຊາຊົນ



(ສພຊ) ວັນທີ 6 ພະຈິກ 2023 ທ່ານ ພົຕ. ຄຳກິ່ງ ຜຸຍຫຼ້າມະນີວົງ ຮອງລັດຖະມົນຕີກະຊວງປ້ອງກັນຄວາມສະຫງົບ ໄດ້ຕາງໜ້າໃຫ້ກະຊວງປ້ອງກັນຄວາມສະຫງົບ ລາຍງານການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍກຳລັງປ້ອງກັນຄວາມສະຫງົບປະຊາຊົນ ຕໍ່ກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດຊຸດທີ IX ດັ່ງນີ້:

I. ສະພາບລວມ ແລະ ຄວາມເປັນມາຂອງກົດໝາຍວ່າດ້ວຍກຳລັງປ້ອງກັນຄວາມສະຫງົບປະຊາຊົນ.

1. ສະພາບລວມ

ອ່ານຕໍ່ໜ້າ 4

## ປະຊາຊົນເປັນຫ່ວງ ແຫຼ່ງລາຍຮັບ ແລະ ການສັງລວມບ້ວງທຶນຕ່າງໆ ຈະທັນສະຫຼຸບເຂົ້າໃນແຜນ 2024 ຫຼື ບໍ່?



(ສພຊ) ທ່ານ ທັນຕາ ກອງຜາລີ ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 18 ແຂວງໄຊສົມບູນ ທັງເປັນຮອງປະທານກຳມາທິການແຜນການການເງິນ ແລະ ການກວດສອບ ໄດ້ປະກອບຄຳເຫັນຕໍ່ບົດລາຍງານແຜນພັດທະນາເສດຖະກິດ-ສັງຄົມ ທີ່ລັດຖະບານສະເໜີໃນກອງປະຊຸມສະໄໝສາມັນເທື່ອທີ 6 ສະພາແຫ່ງຊາດ ຊຸດທີ IX ໃນວັນທີ 31 ຕຸລາ 2023 ໂດຍທ່ານໄດ້ປະກອບຄຳເຫັນຕາມຄຳເຈາະຈີ້ມຂອງທ່ານປະທານສະພາແຫ່ງຊາດ ທີ່ວ່າການຜ່ານແຜນງົບປະມານຄັ້ງນີ້ ຕ້ອງເຮັດໃຫ້ມັນໄວ ເຮັດ

ອ່ານຕໍ່ໜ້າ 8

**ຊົມເຊີຍກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX ຢ່າງສຸດໃຈ!**

## ປະທານສະພາ...

(ຕໍ່ຈາກໜ້າ 1)

ລາວ-ມົງໂກລີ ຕະຫຼອດໄລຍະ 6 ທົດສະວັດຜ່ານມາ. ພ້ອມນີ້, ສອງຝ່າຍ ໄດ້ສະແດງຄວາມຍິນດີທີ່ເຫັນວ່າສາຍພົວພັນມິດຕະພາບ ແລະ ການຮ່ວມມືອັນເປັນມູນເຊື້ອທີ່ດີງາມລະຫວ່າງ ສປປ ລາວ-ມົງໂກລີ ກໍຄືການພົວພັນຮ່ວມມື ລະຫວ່າງສະພາແຫ່ງຊາດລາວ ແລະ ສະພາຄູຣານໃຫຍ່ ແຫ່ງມົງໂກລີ ແມ່ນໄດ້ຮັບການເສີມຂະຫຍາຍຂຶ້ນເປັນກ້າວໆ, ສະແດງອອກຄືໄດ້ມີການພົບປະແລກປ່ຽນການຢ້ຽມຢາມຂອງບັນດາການນຳຂັ້ນສູງຂອງສອງປະເທດ, ການສະໜັບສະໜູນ ແລະ ຊ່ວຍເຫຼືອເຊິ່ງກັນ ແລະ ກັນ ໃນເວທີພາກພື້ນ ແລະ ສາກົນ.

ພິເສດ, ໃນປີ 2022 ຜ່ານມາ, ສອງຝ່າຍໄດ້ຮ່ວມກັນສະເຫຼີມສະຫຼອງວັນສ້າງຕັ້ງສາຍພົວພັນການທູດ ລາວ-ມົງໂກລີ ຄົບຮອບ 60 ປີ (12/09/1962-12/09/2022) ໃຫ້ມີບັນຍາກາດຄຶກຄື້ນ ໂດຍການຈັດບັນດາກິດຈະກຳຕ່າງໆ. ໃນຂະນະດຽວກັນ ຄະນະຜູ້ແທນຂັ້ນສູງຂອງສອງສະພາແຫ່ງຊາດ ກໍໄດ້ມີການແລກປ່ຽນການຢ້ຽມຢາມເຊິ່ງກັນ ແລະ ກັນ ພ້ອມທັງໄດ້ມີການລົງນາມບົດບັນທຶກຄວາມເຂົ້າໃຈຮ່ວມກັນ ລະຫວ່າງສະພາແຫ່ງຊາດລາວ ແລະ ສະພາຄູຣານໃຫຍ່ມົງໂກລີ ເພື່ອສົ່ງເສີມການຮ່ວມມືໃນຂົງເຂດວຽກງານສະພາ ໃນໄລຍະປີ 2023-2028. ພ້ອມດຽວກັນ, ສອງຝ່າຍກໍໄດ້ຕີລາຄາສູງຕໍ່ການຮ່ວມມືໃນຂົງເຂດການສຶກສາ, ສາທາລະນະສຸກ ແລະ ກະສິກຳ-ລ້ຽງສັດ; ໃນນີ້ ລັດຖະບານມົງໂກລີໄດ້ໃຫ້ທຶນການສຶກສາແກ່ ສປປ ລາວ ໃນແຕ່ລະປີ ໂດຍສະເພາະໃນປີ 2022, ທ່ານປະທານາທິບໍດີມົງໂກລີໄດ້ໃຫ້ທຶນຕື່ມອີກ 5 ທຶນ, ໄດ້ປຸກສ້າງ ແລະ ສ້ອມແປງໂຮງໝໍມິດຕະພາບລາວ-ມົງໂກລີ ຢູ່ແຂວງຊຽງຂວາງ ພ້ອມທັງໄດ້ສົ່ງຊ່ຽວຊານແພດໝໍມາປະຈຳຢູ່ລາວ ແລະ ໄດ້ມອບແກະ ຈຳນວນ 1.050 ໂຕ ໃຫ້ແກ່ລັດຖະບານລາວ.

ໃນໂອກາດນີ້, ພະນະທ່ານ ປອ. ໄຊສົມພອນ ພົມວິຫານ ໄດ້ສະແດງຄວາມຂອບໃຈຢ່າງສູງຕໍ່ການຊ່ວຍເຫຼືອຂອງລັດຖະບານ ແລະ ປະຊາຊົນມົງໂກລີ ຕະຫຼອດໄລຍະຜ່ານມາ ເຊິ່ງໄດ້ປະກອບສ່ວນສຳຄັນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງ ສປປ ລາວ ພ້ອມທັງໄດ້ແຈ້ງໃຫ້ຊາບວ່າ: ສປປ ລາວ ຈະເປີດປີທ່ອງທ່ຽວລາວ ໄປພ້ອມກັບການເປັນປະທານອາຊຽນ ແລະ ເຈົ້າພາບກອງປະຊຸມລັດຖະສະພາ ລະຫວ່າງປະເທດອາຊຽນ AIPA ຄັ້ງທີ 45 ໃນປີ 2024 ທີ່ຈະມາເຖິງນີ້ ເຊິ່ງຈະເປັນໂອກາດດີໃນການສົ່ງເສີມການຮ່ວມມືໃນຂົງເຂດສະພາ, ການທ່ອງທ່ຽວ ແລະ ການໄປມາຫາສູ່ກັນຂອງປະຊາຊົນສອງຊາດໃຫ້ຫຼາຍຂຶ້ນ.

ໃນຂະນະດຽວກັນ, ພະນະທ່ານ ຄູເຣລສຸກ໌ ໂອຄະນາ ໄດ້ສະແດງຄວາມຂອບໃຈ ແລະ ຍິນດີຈະຊຸກຍູ້ໃຫ້ພາກສ່ວນກ່ຽວຂ້ອງຂອງຕົນສືບຕໍ່ປະສານສົມທົບກັບຝ່າຍລາວຢ່າງໃກ້ຊິດເພື່ອຂະຫຍາຍການຮ່ວມມືໃນຂະແໜງ ອື່ນໆ ທີ່ມີທ່າແຮງຮ່ວມກັນໃຫ້ຫຼາຍຂຶ້ນໃນຕໍ່ໜ້າ ໂດຍສະເພາະການຂົນສົ່ງຜ່ານເສັ້ນທາງລົດໄຟລາວ-ຈີນ ແລະ ໄດ້ອວຍພອນໃຫ້ສາຍພົວພັນມິດຕະພາບ ແລະ ການຮ່ວມມືອັນເປັນມູນເຊື້ອທີ່ດີງາມ ລະຫວ່າງ ມົງໂກລີ-ສປປ ລາວ ຈົ່ງໄດ້ຮັບການເພີ່ມພູນຄູນສ້າງຍິ່ງໆຂຶ້ນ ແລະ ນຳເອົາໝາກຜົນຕົວຈິງມາສູ່ປະຊາຊົນສອງປະເທດ ໃນອະນາຄົດ.

## ຕາງໜ້າ...

(ຕໍ່ຈາກໜ້າ 1)

ມີຜົນສຳເລັດ ແລະ ສາມາດນຳມາລາຍງານຕໍ່ໃນກອງປະຊຸມສະພາແຫ່ງຊາດ ໃນຄັ້ງນີ້.

ຄະນະປະຈຳສະພາແຫ່ງຊາດ ເຫັນດີໂດຍພື້ນຖານຕໍ່ເນື້ອໃນບົດລາຍງານຂອງກະຊວງປ້ອງກັນປະເທດ ແລະ ກະຊວງປ້ອງກັນຄວາມສະຫງົບ ກ່ຽວກັບການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍຂົງເຂດປ້ອງກັນຊາດ-ປ້ອງກັນຄວາມສະຫງົບ 3 ສະບັບ ດັ່ງກ່າວ ເຊິ່ງເຫັນວ່າບັນດາກົດໝາຍເຫຼົ່ານັ້ນ ໄດ້ກາຍເປັນນິຕິກຳພື້ນຖານໃຫ້ແກ່ການເຄື່ອນໄຫວປະຕິບັດໜ້າທີ່ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ເຮັດໃຫ້ວຽກງານດັ່ງກ່າວ ເປັນຄວາມຮັບຜິດຊອບທົ່ວປວງຊົນລາວ ເພື່ອປົກປັກຮັກສາປະເທດຊາດໃຫ້ມີສະຖຽນລະພາບທາງການເມືອງຢ່າງໜັກແໜ້ນ, ສັງຄົມມີປອດໄພ ແລະ ເປັນລະບຽບຮຽບຮ້ອຍ, ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ ທັງເປັນເຄື່ອງມືອັນສຳຄັນໃນການຍົກສູງປະສິດທິພາບ ເຂົ້າໃນການຊີ້ນຳ-ບັນຊາຄຸ້ມຄອງແລະກວດກາການເຄື່ອນໄຫວໃນການປະຕິບັດໜ້າທີ່ຂອງກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ເວົ້າລວມ, ເວົ້າສະເພາະແມ່ນນາຍ ແລະ ພົນທະຫານ, ນາຍ ແລະ ພົນຕຳຫຼວດ ໃຫ້ມີຄວາມໜັກແໜ້ນທາງດ້ານການເມືອງແນວຄິດ, ເຂັ້ມແຂງທາງດ້ານການຈັດຕັ້ງ, ມີລະບຽບວິໄນເຂັ້ມງວດ, ມີແບບແຜນທັນສະໄໝ, ເປັນກຳລັງຫຼັກແຫຼ່ງໃນການຈັດຕັ້ງປະຕິບັດແນວທາງປ້ອງກັນຊາດ-ປ້ອງກັນຄວາມສະຫງົບທົ່ວປວງຊົນຮອບດ້ານ, ເປັນເຈົ້າການປະຕິບັດສອງໜ້າທີ່ຍຸດທະສາດຄື: ປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ; ປະກອບສ່ວນຍົກສູງຄຸນນະພາບໃນການຄຸ້ມຄອງລັດ, ຄຸ້ມຄອງສັງຄົມດ້ວຍກົດໝາຍໃຫ້ມີຄວາມເຂັ້ມງວດ, ຍຸຕິທຳ ແລະ ສັກສິດເປັນກ້າວໆມາ.

ຄຽງຄູ່ກັບດ້ານດີທີ່ພົ້ນເດັ່ນຂ້າງເທິງ ກໍຍັງເຫັນວ່າ, ການຈັດຕັ້ງປະຕິບັດກົດໝາຍເຫຼົ່ານັ້ນ ຍັງມີດ້ານອ່ອນ, ຂໍ້ຄົງຄ້າງຈຳນວນໜຶ່ງທີ່ເລັ່ງທວງໃຫ້ພວກເຮົາຕ້ອງໄດ້ແກ້ໄຂ ເປັນຕົ້ນ ການໂຄສະນາເຜີຍແຜ່ກົດໝາຍທັງ 3 ສະບັບ ຍັງບໍ່ທັນກວ້າງຂວາງ, ເລິກເຊິ່ງ ແລະ ເຫັນວ່າ ກົດໝາຍ 3 ສະບັບນີ້ ຍັງມີລັກສະນະຈຳກັດຢູ່ແຕ່ຂອບເຂດ 2 ກຳລັງ, ຍ້ອນມີລັກສະນະສະເພາະ ແລະ ຈຸດພິເສດທີ່ບໍ່ສາມາດເຜີຍແຜ່ທົ່ວໄປໄດ້, ການສະໜອງຂໍ້ມູນຂ່າວສານ, ປຶ້ມກົດໝາຍໃຫ້ພາກສ່ວນກ່ຽວຂ້ອງ ນຳໄປຄົ້ນຄ້ວາຍັງຈຳກັດ ຍ້ອນງົບປະມານບໍ່ພຽງພໍ; ນາຍແລະພົນທະຫານ, ນາຍແລະພົນຕຳຫຼວດຈຳນວນໜຶ່ງ ຍັງບໍ່ທັນຍົກສູງຄວາມຮັບຜິດຊອບໃນການຊອກຮູ້ ເຊື່ອມຊຶມກົດໝາຍ ແລະ ລະບຽບການ, ຍັງບໍ່ທັນເຂົ້າໃຈເປັນເອກະພາບຕໍ່ກັບເນື້ອໃນກົດໝາຍບາງມາດຕາ ເຮັດໃຫ້ການກຳແໜ້ນທີ່ຕັ້ງ, ພາລະບົດບາດ, ສິດ, ໜ້າທີ່ ແລະ ຂໍ້ຫ້າມ ບໍ່ໄດ້ເລິກເຊິ່ງຈຶ່ງເຮັດໃຫ້ການເຄື່ອນໄຫວປະຕິບັດໜ້າທີ່ວຽກງານວິຊາສະເພາະຈຳນວນໜຶ່ງບໍ່ໄປຕາມກົດໝາຍກຳນົດ, ເກີດມີປະກົດການຫຍໍ້ທໍ້ໃນກຳລັງ ແລະເປັນທາງສຽງຂອງສັງຄົມ; ເນື້ອໃນບາງມາດຕາ ຂອງກົດໝາຍທັງ 3 ສະບັບ ຍັງບໍ່ທັນຈະແຈ້ງ, ຮັດກຸມ, ຄົບຖ້ວນ ພາໃຫ້ມີຊ່ອງວ່າງໃນການຕີຄວາມໝາຍໄດ້ຫຼາຍແງ່, ມີບາງມາດຕາບໍ່ທັນສອດຄ່ອງກັບສະພາບຕົວຈິງ ເຮັດໃຫ້ບໍ່ສາມາດປະຕິບັດໄດ້, ບາງກົດໝາຍຄວນຜັນຂະຫຍາຍບາງມາດຕາ ເປັນນິຕິກຳໃຕ້ກົດໝາຍ ແຕ່ຊໍ້າພັດບໍ່ໄດ້ກຳນົດໄວ້ໃນກົດໝາຍ, ສ່ວນກົດໝາຍທີ່ມີບາງມາດຕາຜັນຂະຫຍາຍອອກເປັນນິຕິກຳໃຕ້ກົດໝາຍ ແຕ່ມີບາງດ້ານບໍ່ທັນສອດຄ່ອງຕາມເນື້ອໃນຂອງກົດໝາຍ ແລະ ຂອດການຈັດຕັ້ງປະຕິບັດຕົວຈິງຍັງເຮັດບໍ່ທັນໄດ້ດີເທົ່າທີ່ຄວນ.

ສຳລັບທິດທາງໃນຕໍ່ໜ້າ ແລະ ມາດຕະການແກ້ໄຂທີ່ພົວພັນເຖິງການຈັດຕັ້ງປະຕິບັດກົດໝາຍຂົງເຂດ ປກຊ-ປກສ 3 ສະບັບ ດັ່ງນີ້:

1. ທິດທາງ ແລະ ມາດຕະການລວມ

1). ກະຊວງປ້ອງກັນປະເທດ ແລະ ກະຊວງປ້ອງກັນຄວາມສະຫງົບ ໃຫ້ສືບຕໍ່ເພີ່ມທະວີການໂຄສະນາເຜີຍແຜ່ເນື້ອໃນກົດໝາຍ ວ່າດ້ວຍການປ້ອງກັນຊາດ, ກົດໝາຍ ວ່າດ້ວຍນາຍທະຫານກອງທັບປະຊາຊົນລາວ ແລະ ກົດໝາຍວ່າດ້ວຍກຳລັງປ້ອງກັນຄວາມສະຫງົບປະຊາຊົນ ໃຫ້ກວ້າງຂວາງເລິກເຊິ່ງ, ທົ່ວເຖິງ ແລະ ແທດເໝາະກັບແຕ່ລະເປົ້າໝາຍ ແນໃສ່ເຮັດໃຫ້ຖັນແຖວກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ທົ່ວສັງຄົມ ມີຄວາມຮັບຮູ້ເຂົ້າໃຈທີ່ຖືກຕ້ອງກັບເນື້ອໃນກົດໝາຍ ເພື່ອຍົກສູງສະຕິເຄົາລົບ ແລະ ປະຕິບັດກົດໝາຍໃຫ້ສູງຂຶ້ນ ໂດຍຕິດພັນກັບມາດຕະການສະກັດກັ້ນ ແກ້ໄຂບັນດາປະກົດການ ແລະ ພຶດຕິກຳທີ່ເປັນການລະເມີດກົດໝາຍຢ່າງເຂັ້ມງວດ;

2). ກະຊວງປ້ອງກັນປະເທດ ແລະ ກະຊວງປ້ອງກັນຄວາມສະຫງົບ ໃຫ້ສືບຕໍ່ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງຄົ້ນຄວ້າຜັນຂະຫຍາຍບັນດາມາດຕາຂອງ 3 ກົດໝາຍອອກເປັນນິຕິກຳໃຕ້ກົດໝາຍຕື່ມ ໂດຍສະເພາະມາດຕາທີ່ເຫັນວ່າມີຄວາມຈຳເປັນຕ້ອງໄດ້ມີນິຕິກຳໃຕ້ກົດໝາຍ ເພື່ອແນະນຳການຈັດຕັ້ງປະຕິບັດລະອຽດ ຈະແຈ້ງຕື່ມ; ພ້ອມກັນນັ້ນ, ກໍໃຫ້ສືບຕໍ່ຄົ້ນຄວ້າ ແລະ ປັບປຸງເນື້ອໃນບາງພາກ, ບາງໝວດ ແລະ ບາງມາດຕາ ແຕ່ລະກົດໝາຍທີ່ເຫັນວ່າບໍ່ສອດຄ່ອງ ຫຼື ຊໍ້າຊ້ອນກັບມາດຕາອື່ນເພື່ອເຮັດໃຫ້ເນື້ອໃນກົດໝາຍທັງ 3 ສະບັບນີ້ ມີເນື້ອໃນຮັດກຸມ, ຈະແຈ້ງ, ສອດຄ່ອງ, ກົມກຽວ ແລະ ສາມາດຈັດຕັ້ງປະຕິບັດໄດ້;

3). ກະຊວງປ້ອງກັນປະເທດ ແລະ ກະຊວງປ້ອງກັນຄວາມສະຫງົບ ສືບຕໍ່ທົບທວນ ແລະ ປະເມີນການຈັດຕັ້ງປະຕິບັດກົດໝາຍທັງ 3 ສະບັບນີ້ ເປັນແຕ່ລະໄລຍະ ແນໃສ່ເພື່ອສ້າງສະຕິເຄົາລົບ ແລະ ປະຕິບັດກົດໝາຍຂອງນາຍ ແລະ ພົນທະຫານ, ນາຍ ແລະ ພົນຕຳຫຼວດ ກໍຄືໃນທົ່ວສັງຄົມໃຫ້ສູງຂຶ້ນ ພ້ອມທັງແກ້ໄຂປະກົດການທີ່ເກີດຂຶ້ນໃຫ້ທັນສະພາບການ ແລະ ແທດເໝາະກັບຕົວຈິງ;

4). ລັດຖະບານເພີ່ມທະວີການຊີ້ນຳອົງການ, ຂະແໜງການທີ່ກ່ຽວຂ້ອງ ຍົກສູງພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ 3 ສະບັບນີ້ ໃຫ້ມີປະສິດທິພາບ, ປະສິດທິຜົນ, ຄົ້ນຄວ້າເພີ່ມຈຳນວນງົບປະມານ, ອຸປະກອນ ແລະ ພາຫະນະເຕັກນິກທີ່ຈຳເປັນໃຫ້ແກ່ກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ສາມາດຕອບສະໜອງໃນການເຄື່ອນໄຫວປະຕິບັດໜ້າທີ່ການເມືອງໃນໄລຍະໃໝ່;

5). ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ເພີ່ມທະວີການຕິດຕາມກວດກາການເຄົາລົບ ແລະ ປະຕິບັດກົດໝາຍວ່າດ້ວຍການປ້ອງກັນຊາດ, ກົດໝາຍ ວ່າດ້ວຍນາຍທະຫານກອງທັບປະຊາຊົນລາວ ແລະ ກົດໝາຍວ່າດ້ວຍກຳລັງປ້ອງກັນຄວາມສະຫງົບປະຊາຊົນ ໃຫ້ເປັນລະບົບຕໍ່ເນື່ອງ ຕິດຕາມ, ກວດກາ ແລະ ຊຸກຍູ້ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ເພື່ອລາຍງານຕໍ່ກອງປະຊຸມສະໄໝສາມັນ ຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງໃນແຕ່ລະໄລຍະ.

2. ທິດທາງ ແລະ ມາດຕະການສະເພາະ ຂອງແຕ່ລະກົດໝາຍ

1). ກົດໝາຍວ່າດ້ວຍການປ້ອງກັນຊາດ

- ສ້າງແຜນການປັບປຸງກົດໝາຍ ວ່າດ້ວຍການປ້ອງກັນຊາດ ແລະ ນຳສະເໜີເອົາເຂົ້າແຜນການສ້າງ ແລະ ປັບປຸງກົດໝາຍ 5 ປີ ( 2025-2030 ) ຂອງສະພາແຫ່ງຊາດ ຊຸດທີ X;

- ປັບປຸງດ້ານໂຄງສ້າງຂອງກົດໝາຍສະບັບນີ້ ທີ່ເຫັນວ່າບໍ່ທັນຄົບຖ້ວນ ແລະ ເນື້ອໃນບາງມາດ ຕາ ຂອງກົດໝາຍທີ່ຍັງບໍ່ສອດຄ່ອງກັບສະພາບຄວາມເປັນຈິງໃນປັດຈຸບັນ, ເປັນຕົ້ນເຊັ່ນ: ມາດຕາ 3, 6, 15, 41, 42, 43, 44, 45, 46, 47, 48, 49 ແລະ ມາດຕາອື່ນໆ ທີ່ເຫັນວ່າບໍ່ທັນສອດຄ່ອງ;

2). ກົດໝາຍ ວ່າດ້ວຍນາຍທະຫານກອງທັບປະຊາຊົນລາວ

- ຄົ້ນຄ້ວາປັບປຸງກົດໝາຍວ່າດ້ວຍນາຍທະຫານກອງທັບປະຊາຊົນລາວ ຕາມແຜນການສ້າງ ແລະ ປັບປຸງກົດໝາຍຂອງສະພາແຫ່ງຊາດ ຊຸດທີ IX;

- ປັບປຸງເນື້ອໃນບາງມາດຕາຂອງກົດໝາຍສະບັບນີ້ ທີ່ຍັງບໍ່ສອດຄ່ອງກັບສະພາບຄວາມເປັນຈິງໃນປັດຈຸບັນ ເປັນຕົ້ນເຊັ່ນ: ມາດຕາ 5, 18, 20, 21, 22, 25, 26, 34, 36 ແລະ ມາດຕາອື່ນໆ ທີ່ເຫັນວ່າບໍ່ທັນສອດຄ່ອງ; ພ້ອມນີ້, ສະເໜີເພີ່ມມາດຕາໃໝ່ທີ່ກ່ຽວພັນກັບລະບົບສອງຫົວໜ້າ ແລະ ໜ້າທີ່ຂອງນາຍທະຫານຂົງເຂດຕ່າງໆໃຫ້ຄົບຖ້ວນລະອຽດຈະແຈ້ງ.

3. ກົດໝາຍວ່າດ້ວຍກຳລັງປ້ອງກັນຄວາມສະຫງົບປະຊາຊົນ

1). ສ້າງແຜນການປັບປຸງກົດໝາຍ ວ່າດ້ວຍກຳລັງປ້ອງກັນຄວາມສະຫງົບປະຊາຊົນ ແລະ ນຳສະເໜີເອົາເຂົ້າແຜນການສ້າງ ແລະ ປັບປຸງກົດໝາຍ 5 ປີ (2025-2030) ຂອງສະພາແຫ່ງຊາດ ຊຸດທີ X;

2). ຄົ້ນຄວ້າປັບປຸງມາດຕາ 16, 17, 21, 30, 31, 32 ຂອງກົດໝາຍສະບັບນີ້ ທີ່ຕິດພັນກັບການປັບປຸງກົງຈັກ ຂອງກະຊວງປ້ອງກັນຄວາມສະຫງົບ ແລະ ບາງມາດຕາຂອງກົດໝາຍ ທີ່ຍັງບໍ່ສອດຄ່ອງກັບສະພາບຄວາມເປັນຈິງໃນປັດຈຸບັນ ຄື: 3,4,5,13,15,16, 21,23,25, 26,27,28,29, 32, 33,34,38,40,45,50, 52 ແລະ ມາດຕາອື່ນໆ ທີ່ເຫັນວ່າບໍ່ທັນສອດຄ່ອງ.

# ນາຍົກລັດຖະມົນຕີ ລາຍງານສະພາບການເຄື່ອນໄຫວວຽກງານ ທີ່ພົ້ນເດັ່ນກາງສະໄໝ 5 ປີ ຄັ້ງທີ IX

ຕໍ່ຈາກສະບັບກ່ອນ...

ຈາກຕ່າງປະເທດ ແນໃສ່ຄຸ້ມຄອງໃຫ້ກະແສເງິນຕາຕ່າງປະເທດເຂົ້າສູ່ລະບົບທະນາຄານໃຫ້ຫຼາຍຂຶ້ນ. ໄປຄຽງຄູ່ກັບການສົ່ງເສີມການນຳໃຊ້ເງິນສະກຸນທ້ອງຖິ່ນ ເພື່ອສົ່ງເສີມການຊຳລະສະສາງເຂົ້າໃນກິດຈະກຳການຄ້າ-ການບໍລິການ ແລະ ການລົງທຶນລະຫວ່າງ ສປປ ລາວ ກັບຕ່າງປະເທດ.

ຜ່ານການປະຕິບັດມາດຕະການເຫຼົ່ານີ້ ເຮັດໃຫ້ມີກະແສເງິນຕາຕ່າງປະເທດຈາກການສົ່ງອອກໄຫຼເຂົ້າປະເທດຫຼາຍຂຶ້ນ (ຈາກອັດຕາສ່ວນປະມານ 31 ໃນໄລຍະປີ 2020 ມາເປັນ 41,32 ໃນ 9 ເດືອນປີ 2023 (ຄາດວ່າໝົດປີ 2023 ຈະສາມາດບັນລຸໄດ້ກາຍ 50 ) ໄດ້ເປັນການປະກອບສ່ວນໃຫ້ຄັງສຳຮອງເງິນຕາຕ່າງປະເທດຂອງ ສປປ ລາວ ເພີ່ມຂຶ້ນ ສາມາດກຸ້ມການນຳເຂົ້າໄດ້ເປັນ 4,3 ເດືອນໃນທ້າຍເດືອນ 9/2023 ຈາກ 3,6 ເດືອນໃນທ້າຍປີ 2020 (ແຜນການ 5 ປີ: ໃຫ້ໄດ້ຢ່າງໜ້ອຍ 3 ເດືອນ), ຊ່ວຍຫຼຸດຜ່ອນການເໜັງຕີງຂອງອັດຕາແລກປ່ຽນບໍ່ໃຫ້ຜັນຜວນໜັກໜ່ວງ ແລະ ທັງເປັນການຊ່ວຍໃຫ້ອັດຕາເງິນເຟີ້ຫຼຸດລົງຈາກລະດັບ 40 ໃນກາງປີ 2022 ມາເປັນ 25,69 ໃນເດືອນ 9/2023. ແຕ່ເຖິງຢ່າງໃດກໍຕາມ, ໃນຕົວຈິງລາຄາສິນຄ້າໃນທ້ອງຕະຫຼາດຍັງສູງແລະອັດຕາແລກປ່ຽນຍັງມີຄວາມບອບບາງຕໍ່ຜົນກະທົບຂອງການປ່ຽນແປງສະພາບເສດຖະກິດໂລກ ແລະ ຍ້ອນຄວາມຕ້ອງການເງິນຕາຕ່າງປະເທດໃນສັງຄົມຢູ່ພາຍໃນປະເທດເຮົາຍັງສູງກວ່າຄວາມອາດສາມາດໃນການສະໜອງຈາກການນຳເຂົ້າ; ພ້ອມນັ້ນ, ກໍຍັງມີພັນທະຊຳລະໜີ້ສິນຕໍ່ຕ່າງປະເທດ. ສະນັ້ນ, ການແກ້ໄຂບັນຫາດັ່ງກ່າວນີ້ທຸກພາກສ່ວນ, ຂະແໜງການນັບແຕ່ສູນກາງ, ທ້ອງຖິ່ນ ແລະ ນິຕິບຸກຄົນ-ບຸກຄົນ ທົ່ວສັງຄົມຕ້ອງເປັນເຈົ້າການຈັດຕັ້ງປະຕິບັດຮ່ວມກັນ ໃນການຫຼຸດຜ່ອນຄວາມຕ້ອງການໃນການຊົມໃຊ້ເງິນຕາຕ່າງປະເທດທີ່ບໍ່ຈຳເປັນໃຫ້ຫຼຸດລົງຢ່າງເປັນຮູບປະທຳ, ຖືເອົາການປະພຶດດັ່ງກ່າວເປັນການສະແດງອອກເຖິງຄວາມຮັກຊາດຂອງຕົນ.



4). ການປັບປຸງສະພາບແວດລ້ອມ ໃນການດຳເນີນທຸລະກິດ ແລະ ການລົງທຶນ:

- ໄດ້ສືບຕໍ່ປັບປຸງກົນໄກອຳນວຍຄວາມສະດວກ ແລະ ສົ່ງເສີມການລົງທຶນ ພາຍຫຼັງມີການຍຸບກົນໄກຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຂັ້ນສູນກາງ ແລະ ຂັ້ນແຂວງແລ້ວ, ລັດຖະບານກໍໄດ້ອອກລະບຽບ ແລະ ກົນໄກໃນການພິຈາລະນາການລົງທຶນໃໝ່ ໂດຍໄດ້ຕັດຂັ້ນຕອນ ແລະ ເອກະສານທີ່ບໍ່ຈຳເປັນອອກ ເພື່ອເຮັດໃຫ້ການອະນຸຍາດລົງທຶນວ່ອງໄວ ແລະ ສະດວກຂຶ້ນ. ໄດ້ສຸມໃສ່ຊຸກຍູ້ ແລະ ຕິດຕາມການຈັດຕັ້ງປະຕິບັດບັນດາໂຄງການລົງທຶນທີ່ໄດ້ອະນຸມັດຜ່ານມາ ແລະ ໄດ້ໂຈະການອະນຸມັດໃຫມ່ສຳລັບໂຄງການບໍ່ແຮ່ ເພື່ອສຸມໃສ່ການກວດກາ,ປະເມີນຄືນຕົວຈິງຢ່າງຮອບດ້ານໃນການປະຕິບັດໂຄງການຕາມກົດໝາຍແລະລະບຽບການກຳນົດ ເປັນຕົ້ນບັນດາໂຄງການເຮັດທົດລອງ. ພ້ອມກັນນັ້ນ, ກໍໄດ້ຊຸກຍູ້ ແລະ ກ້າວໄປເຖິງການນຳໃຊ້ມາດຕະການໃຫ້ບັນດາໂຄງການລົງທຶນຕ່າງປະເທດ ເປີດບັນຊີຢູ່ທະນາຄານທຸລະກິດທີ່ຢູ່ພາຍໃນປະເທດ ແລະ ໃຫ້ໂອນເງິນເຂົ້າມາລົງທຶນຜ່ານບັນຊີທະນາຄານ; ໄດ້ສຸມໃສ່ກວດກາຄືນບັນຊີລາຍການວັດຖຸອຸປະກອນ, ພາຫະນະ, ກົນຈັກຕ່າງໆຂອງບັນດາໂຄງການລົງທຶນ, ອັນໃດພາຍໃນສາມາດສະໜອງໃຫ້ແລ້ວແມ່ນບໍ່ໃຫ້ນຳເຂົ້າຈາກຕ່າງປະເທດ ຖ້າຈະນຳເຂົ້າກໍຕ້ອງໄດ້ເສຍພາສີຕາມກົດໝາຍ ແລະ ລະບຽບການ. ປັດຈຸບັນ, ລັດຖະບານພວມສຸມໃສ່ປັບປຸງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນໃຫ້ຮັດກຸມ.

5). ການປະຕິຮູບລັດວິສາຫະກິດ ແລະ ການລົງທຶນ

- ລັດຖະບານ ໄດ້ອອກເປັນມະຕິໃນການແບ່ງຄວາມຮັບຜິດຊອບໃນການປັບປຸງລັດວິສາຫະກິດ ທັງໄດ້ກຳນົດບັນຊີລັດວິສາຫະກິດທີ່ຈະປັບປຸງຢ່າງລະອຽດ. ການປັບປຸງແມ່ນສຸມໃສ່ປັບປຸງປະສິດທິຜົນຂອງການບໍລິຫານ, ບໍລິການ, ການຄຸ້ມຄອງ ໂດຍໂຮມບັນດາພະແນກ ຫຼື ໜ່ວຍງານເຂົ້າກັນ. ພະແນກ ຫຼື ໜ່ວຍງານໃດທີ່ບໍ່ຈຳເປັນກໍໄດ້ລົບລ້າງ, ປັບໂຄງສ້າງໜີ້ສິນຂອງລັດວິສາຫະກິດ ແລະ ປັບປຸງໂຄງສ້າງການຖືຮຸ້ນເພື່ອໃຫ້ການບໍລິຫານຈັດການເປັນມືອາຊີບ ແລະ ມີຄວາມໂປ່ງໃສ, ໃນນັ້ນ: ໄດ້ສຸມໃສ່ປັບປຸງ 5 ຫົວໜ່ວຍວິສາຫະກິດທີ່ເປັນຍຸດທະສາດ: ລັດວິສາຫະກິດໄຟຟ້າລາວ, ບໍລິສັດຜະລິດ-ໄຟຟ້າມະຫາຊົນ,ລັດວິສາຫະກິດການບິນລາວ, ລັດວິສາຫະກິດນ້ຳມັນເຊື້ອໄຟລາວ ແລະ ລັດວິສາຫະກິດພັດທະນາກະສິກຳ, ອຸດສາຫະກຳ ແລະ ການບໍລິການ ຂາອອກ-ຂາເຂົ້າ; ນອກຈາກ 5 ຫົວໜ່ວຍວິສາຫະກິດຍຸດທະສາດດັ່ງກ່າວແລ້ວ ກໍຍັງໄດ້ດຳເນີນການປະຕິຮູບບັນດາລັດວິສາຫະກິດອື່ນອີກຈຳນວນໜຶ່ງ.

6). ການຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການ

ໄດ້ສຸມໃສ່ຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການ ທີ່ມີຜົນກະທົບຕໍ່ການດຳລົງຊີວິດປະຈຳວັນ ເປັນຕົ້ນ: ເຂົ້າ, ຊີ້ນ, ປາ ແລະ ໄຂ່ ໂດຍໄດ້ມີນະໂຍບາຍທາງດ້ານການສະໜອງແຫຼ່ງທຶນອັດຕາດອກເບ້ຍຕ່ຳຜ່ານ ທທກ ແລະ ຖົມຊຸມອັດຕາດອກເບ້ຍ (ຕາມຂໍ້ຕົກລົງ 93/ນຍ) ໃຫ້ບັນດາຜູ້ປະກອບການທຸລະກິດໃນຂະແໜງການຜະລິດ ແລະ ບໍລິການທີ່ເປັນບູລິມະສິດດຳເນີນທຳການຜະລິດ ແລະ ສະໜອງສິນຄ້າລາຄາຖືກໃຫ້ພາຍໃນ ແລະ ໃນບາງໄລຍະທີ່ລາຄາສິນຄ້າໃນທ້ອງຕະຫຼາດເພີ່ມຂຶ້ນສູງ ລັດຖະບານກໍໄດ້ມີການແຊກແຊງລາຄາ ໂດຍສະເພາະໄດ້ແຊກແຊງລາຄາເຂົ້າ; ໄດ້ກຳນົດໂຄງສ້າງຕົ້ນທຶນລາຄາສິນຄ້າຈຳນວນໜຶ່ງ ເພື່ອເປັນບ່ອນອີງໃນການຄຸ້ມຄອງ ແລະ ກຳນົດລາຄາຂາຍສິນຄ້າເຫຼົ່ານັ້ນ ແລະ ບໍ່ໃຫ້ມີການສວຍໂອກາດຂຶ້ນລາຄາແບບບໍ່ສົມເຫດສົມຜົນ.

ອ່ານຕໍ່ສະບັບໜ້າ

# ການຈັດຕັ້ງປະຕິບັດແຜນເງິນຕາໃນໄລຍະກາງສະໄໝ ຕໍ່ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ

ຕໍ່ຈາກສະບັບກ່ອນ...

ປ່ຽນເງິນຕາຕົວແທນຂອງຕົນທັງໝົດ 113 ຮ້ານ. ພາຍຫຼັງຢຸດຕິການດຳເນີນທຸລະກິດຮ້ານແລກປ່ຽນເງິນຕາຕົວແທນທັງໝົດ, ກໍໄດ້ອອກຂໍ້ຕົກລົງຄຸ້ມຄອງການແລກປ່ຽນເງິນຕາ, ສະບັບເລກທີ 553/ທຫລ, ລົງວັນທີ 19 ມິຖຸນາ 2023 ແລະ ໄດ້ຊຸກຍູ້ບັນດາທະນາຄານທຸລະກິດຂະຫຍາຍການບໍລິການແລກປ່ຽນເງິນຕາ ດ້ວຍຫຼາຍຮູບແບບທັງໜ່ວຍບໍລິການແລກປ່ຽນ, ຕູ້ແລກປ່ຽນເງິນຕາຕ່າງປະເທດ ແລະ ຕູ້ກົດເງິນສົດເງິນຕາຕ່າງປະເທດອັດຕະໂນມັດ ຕາມຈຸດຍຸດທະສາດຕ່າງໆ; ລວມທັງອອກລະບຽບການເປີດໃຫ້ທະນາຄານທຸລະກິດນຳໃຊ້ເຄື່ອງມືທັນສະໄໝ ເພື່ອອຳນວຍຄວາມສະດວກໃຫ້ປະຊາຊົນສາມາດສະເໜີແລກປ່ຽນເງິນຕາຜ່ານເຄື່ອງມືດັ່ງກ່າວ.

2) ການຄຸ້ມຄອງເງິນຕາຕ່າງປະເທດ.

ຄຽງຄູ່ກັບການຈັດຕັ້ງປະຕິບັດນະໂຍບາຍເງິນຕາ, ອັດຕາແລກປ່ຽນ. ໃນໄລຍະກາງສະໄໝຕົ້ນ ຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX, ທຫລ ໄດ້ເລັງເຫັນບັນຫາຄວາມບໍ່ສົມດູນຂອງສະພາບເສດຖະກິດມະຫາພາກໂດຍສະເພາະແມ່ນການຂາດດຸນການຊຳລະກັບຕ່າງປະເທດ (ລາຍຮັບຈາກການສົ່ງອອກບໍ່ໄດ້ນຳກັບມາ ສປປ ລາວ ຫຼາຍເທົ່າທີ່ຄວນ), ບັນຫາໜີ້ສິນຕໍ່ຕ່າງປະເທດສະສົມ ແຕ່ຄັງສຳຮອງຢູ່ໃນລະດັບຕ່ຳ ເປັນແຮງກົດດັນໃຫ້ອັດຕາແລກປ່ຽນຜັນຜວນ, ມີປະກົດການປັ່ນປ່ວນອັດຕາແລກປ່ຽນຢູ່ພາຍໃນ ທຫລ ໄດ້ມີມາດຕະການດັ່ງນີ້:

- ໄດ້ສຳເລັດການປັບປຸງກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ສະບັບເລກທີ 15/ສພຊ ອອກເປັນນິຕິກຳໃຕ້ກົດໝາຍ ຈຳນວນ 23 ສະບັບ ໄດ້ຖືກຮັບຮອງແລ້ວ 8 ສະບັບ ອັນພົ້ນເດັ່ນແມ່ນຄຳສັ່ງວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ສະບັບເລກທີ 10/ນຍ ທີ່ກຳນົດເອົາການມີສ່ວນຮ່ວມຂອງທຸກຂະແໜງການໃນການຄຸ້ມຄອງເງິນຕາຕ່າງປະເທດ; ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດກ່ຽວກັບການນຳເຂົ້າ-ສົ່ງອອກສິນຄ້າ ແລະ ການບໍລິການ ສະບັບເລກທີ 677/ທຫລ, ລົງວັນທີ 24 ກໍລະກົດ 2023; ແລະ



ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ຢູ່ເຂດເສດຖະກິດພິເສດ ສະບັບເລກທີ 1039/ທຫລ, ລົງວັນທີ 25 ຕຸລາ 2023;

- ໄດ້ສຳເລັດການສ້າງຕັ້ງກົມຄຸ້ມຄອງເງິນຕາຕ່າງປະເທດ ເພື່ອຈັດຕັ້ງປະຕິບັດວຽກງານຄຸ້ມຄອງເງິນຕາຕ່າງປະເທດ ເພື່ອຊຸກຍູ້ສົ່ງເສີມການນຳໃຊ້ເງິນກີບ, ການຄຸ້ມຄອງກະແສເງິນເຂົ້າ-ອອກປະເທດຈາກການຄ້າ, ການບໍລິການ, ການລົງທຶນໃຫ້ມີປະສິດທິພາບ ແລະ ປະສິດທິຜົນ. ພ້ອມນັ້ນ, ກໍ່ໄດ້ສ້າງຕັ້ງຫ້ອງການຕົວແທນ ທຫລ ປະຈຳເຂດເສດຖະກິດພິເສດບໍ່ເຕັນ ແລະ ສາມຫຼ່ຽມຄຳ ເພື່ອປະຕິບັດພາລະບົບບາດໃນການຄຸ້ມຄອງເງິນຕາຕ່າງປະເທດຢູ່ສອງເຂດດັ່ງກ່າວ;

- ໄດ້ຄຸ້ມຄອງຄັງສຳຮອງເງິນຕາຕ່າງປະເທດຢ່າງມີຍຸດທະສາດ ແລະ ແບບແຜນຫຼາຍຂຶ້ນກວ່າເກົ່າ ໂດຍໄດ້ປັບປຸງໂຄງສ້າງຄັງສຳຮອງເງິນຕາຕ່າງປະເທດໃຫ້ຫຼາຍສະກຸນເງິນ ແລະ ເພີ່ມອົງປະກອບຄຳ ເພື່ອຮອງຮັບກັບຄວາມຜັນຜວນຂອງຕະຫຼາດການເງິນໃນສາກົນ ແລະ ສອດຄ່ອງກັບໂຄງສ້າງການຄ້າຕ່າງປະເທດ ແລະ ການລົງທຶນຂອງ ສປປ ລາວ;ໄດ້ມີມາດຕະການໃນການບຸກຫຼາຍຂຶ້ນກັບຫົວໜ່ວຍຜູ້ປະກອບການປະເພດຕ່າງໆ ໂດຍສະເພາະຜູ້ນຳເຂົ້າ-ສົ່ງອອກ ແລະ ການລົງທຶນໂດຍກົງຈາກຕ່າງປະເທດທັງໝົດ 50 ເທື່ອບໍລິສັດຈາກເປົ້າໝາຍ 100 ບໍລິສັດ ດ້ວຍການລົງເກັບກຳຂໍ້ມູນ ແລະ ເຮັດວຽກຕົວຈິງ ເພື່ອຊຸກຍູ້ໃຫ້ນຳລາຍຮັບເງິນຕາຕ່າງປະເທດຈາກການສົ່ງອອກ ເຂົ້າມາ ສປປ ລາວ ໃຫ້ຫຼາຍຂຶ້ນກວ່າໄລຍະຜ່ານມາ; ຊຸກຍູ້ຜູ້ນຳເຂົ້າ-ສົ່ງອອກ ໃຫ້ນຳລາຍຮັບກັບເຂົ້າປະເທດ ແລະ ເຮັດວຽກກັບກະຊວງອຸດສາຫະກຳການຄ້າ ເພື່ອລົງທະບຽນການຄ້າ, ອອກໃບຢັ້ງຢືນແຈ້ງການລົງທະບຽນຜູ້ນຳເຂົ້າ-ສົ່ງອອກ ເພື່ອເປີດບັນຊີເງິນຝາກສະເພາະຈຳນວນ 210 ບໍລິສັດ (ບໍລິສັດນຳເຂົ້າ 77 ບໍລິສັດ, ສົ່ງອອກ 19 ບໍລິສັດ ແລະ ບໍລິສັດນຳເຂົ້າ-ສົ່ງອອກ 144 ບໍລິສັດ), ມີບໍລິສັດເປີດບັນຊີເງິນຝາກນຳເຂົ້າ-ສົ່ງອອກນຳ ທທກ ແລ້ວ ຈຳນວນ 40 ບໍລິສັດ;

- ພັດທະນາລະບົບຄຸ້ມຄອງກະແສເງິນເຂົ້າ-ອອກປະເທດຈາກຂະແໜງການຄ້າ ແລະ ການລົງທຶນ ໂດຍໃຫ້ສາມາດເຊື່ອມໂຍງຮ່ວມກັນລະຫວ່າງຂະແໜງການ (ລະບົບຕິດຕາມກະແສເງິນຂອງ ທຫລ, ລະບົບຕິດຕາມການສົ່ງອອກ-ນຳເຂົ້າຂອງກະຊວງການເງິນ ແລະ ລະບົບຂໍ້ມູນຜູ້ລົງທະບຽນນຳເຂົ້າ-ສົ່ງອອກ) ແລະ ສາມາດທົດລອງນຳໃຊ້ໄດ້ໄຕມາດ 4/2023;

-ໄດ້ສົ່ງເສີມການນຳໃຊ້ເງິນກີບ ແລະ ຊຸກຍູ້ການນຳໃຊ້ເງິນຕາຕ່າງປະເທດໃຫ້ຜ່ານລະບົບທະນາຄານ ໂດຍຜ່ານມາໄດ້ຄົ້ນຄວ້າໃຫ້ບາງເປົ້າໝາຍທີ່ຂໍອະນຸຍາດນຳໃຊ້ເງິນຕາ ໂດຍສະເພາະຫົວໜ່ວຍທີ່ມີລາຍຮັບເປັນເງິນຕາຈາກການສົ່ງອອກ ພ້ອມທັງສົ່ງເສີມການນຳໃຊ້ສະກຸນເງິນທ້ອງຖິ່ນ (ກີບ-ດົງ, ກີບ-ຢວນ, ກີບ-ບາດ ແລະ ກີບ-ຣຽວ) ເຂົ້າໃນການຊຳລະທາງດ້ານການຄ້າ ແລະ ການລົງທຶນ;ໄດ້ຈັດຕັ້ງຈັດກອງປະຊຸມເຜີຍແຜ່ນິຕິກຳວຽກງານຄຸ້ມຄອງເງິນຕາຕ່າງປະເທດ 13 ຄັ້ງ ຢູ່ສູນກາງ ແລະ ທ້ອງຖິ່ນ (ສະເພາະຢູ່ເຂດເສດຖະກິດ ພິເສດ 2 ຄັ້ງ).

1) ການຮັກສາສະຖຽນລະພາບທາງດ້ານການເງິນ.

ທຫລ ໄດ້ຄຸ້ມຄອງ, ຕິດຕາມ ແລະ ກວດກາການເຄື່ອນໄຫວຂອງບັນດາທະນາຄານທຸລະກິດ (ທທກ) ແລະ ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ຕາມລະບຽບວ່າດ້ວຍຄວາມໝັ້ນຄົງທີ່ໄດ້ວາງອອກ, ໂດຍການລົງກວດກາກັບທີ່, ກວດກາຕາມເອກະສານລາຍງານຢ່າງເຂັ້ມງວດ ໄປຄຽງຄູ່ກັບການຄຸ້ມຄອງຕາມລະບຽບການ ເຊິ່ງໄດ້ເຮັດໃຫ້ວຽກງານຄຸ້ມຄອງຄວາມໝັ້ນຄົງຂອງສະຖາບັນການເງິນ ມີຄວາມຮັບປະກັນ

ອ່ານຕໍ່ສະບັບໜ້າ

## ການປະເມີນ...

(ຕໍ່ຈາກໜ້າ 1)

ຂອງຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍການຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ໃນຂົງເຂດ ປກຊ-ປກສ ເຊິ່ງໃນນີ້ກະຊວງປ້ອງກັນປະເທດມີ 2 ກົດໝາຍທີ່ຈະຕ້ອງໄດ້ປະເມີນຄື: ກົດໝາຍວ່າດ້ວຍ ການປ້ອງກັນຊາດ ສະບັບເລກທີ 67/ສພຊ, ລົງວັນທີ 11 ທັນວາ 2015 ແລະ ກົດໝາຍວ່າດ້ວຍນາຍທະຫານກອງທັບປະຊາຊົນລາວ ສະບັບເລກທີ 43/ສພຊ, ລົງວັນທີ 14 ມິຖຸນາ 2018.

I. ສະພາບການເຄື່ອນໄຫວດຳເນີນການປະເມີນການຈັດຕັ້ງປະເມີນກົດໝາຍ.

ພາຍຫຼັງໄດ້ຮັບມະຕິ ແລະ ຄຳແນະນຳ ຂອງຄະນະປະຈຳສະພາແຫ່ງຊາດ ກະຊວງປ້ອງກັນປະເທດ ໄດ້ຮີບຮ້ອນແຕ່ງຕັ້ງຄະນະຮັບຜິດຊອບປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ຕາມຂໍ້ຕົກລົງຂອງກະຊວງປ້ອງກັນປະເທດ ສະບັບເລກທີ 2998/ກປທ, ລົງວັນທີ 25 ເມສາ 2023 ໂດຍແມ່ນຮອງລັດຖະມົນຕີກະຊວງປ້ອງກັນປະເທດ ເປັນຫົວໜ້າຄະນະ. ຈາກນັ້ນ, ໄດ້ສົ່ງຮ່າງແບບສອບຖາມໃຫ້ບັນດາກົມກອງກຳລັງຫຼວງ-ກຳລັງທ້ອງຖິ່ນ ຈັດຕັ້ງກອງປະຊຸມປະເມີນຜົນການຈັດຕັ້ງປະຕິບັດກົດໝາຍດັ່ງກ່າວ ເຊິ່ງມີນາຍທະຫານຢູ່ບັນດາກົມກອງ ເຂົ້າຮ່ວມປະກອບຄຳເຫັນ ແລະ ຕອບແບບສອບຖາມ ລວມທັງໝົດມີ 46 ກົມກອງ, ມີ 8.850 ສະບັບ. ຈາກນັ້ນ, ກໍໄດ້ສັງລວມຄຳເຫັນ, ຮ່າງບົດປະເມີນຜົນການຈັດຕັ້ງປະຕິບັດກົດໝາຍເບື້ອງຕົ້ນ. ຮອດທ້າຍເດືອນສິງຫາ 2023 ໄດ້ລົງຈັດຕັ້ງກອງປະຊຸມທາບທາມປະກອບຄຳເຫັນຕໍ່ຮ່າງບົດປະເມີນຜົນດັ່ງກ່າວ ຢູ່ 4 ຈຸດຄື: ແຂວງອຸດົມໄຊ, ແຂວງວຽງຈັນ, ແຂວງຊຽງຂວາງ ແລະ ແຂວງຈຳປາສັກ; ມາຮອດວັນທີ 10 ຕຸລາ 2023 ກະຊວງປ້ອງກັນປະເທດ ໄດ້ສົມທົບກັບກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ສະພາແຫ່ງຊາດ ຈັດກອງປະຊຸມຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍ ການປ້ອງກັນຊາດ ແລະ ກົດໝາຍວ່າດ້ວຍນາຍທະຫານກອງທັບປະຊາຊົນລາວຂຶ້ນ ພາຍໃຕ້ການເປັນປະທານຂອງທ່ານຮອງປະທານສະພາແຫ່ງຊາດ ແລະ ມີຜູ້ເຂົ້າຮ່ວມຈາກພາກສ່ວນຕ່າງໆ ຈຳນວນ 230 ສະຫາຍ ເຂົ້າຮ່ວມ.

II. ຜົນການປະເມີນການຈັດຕັ້ງປະຕິບັດກົດໝາຍ

1. ກົດໝາຍວ່າດ້ວຍການປ້ອງກັນຊາດ

1.1. ຄວາມເປັນມາຂອງກົດໝາຍ

ກົດໝາຍວ່າດ້ວຍ ການປ້ອງກັນຊາດ ສະບັບເລກທີ 67/ສພຊ, ລົງວັນທີ 11 ທັນວາ 2015 ຖືກຮັບຮອງໃນກອງປະຊຸມສະໄໝສາມັນເທື່ອທີ 10 ຂອງສະພາແຫ່ງຊາດຊຸດທີ VII ເຊິ່ງເປັນກົດໝາຍສະບັບທຳອິດ ແລະ ນຳໃຊ້ມາຈົນເຖິງປັດຈຸບັນ (ຍັງບໍ່ໄດ້ຮັບການປັບປຸງ).

1.2 ການໂຄສະນາເຜີຍແຜ່ກົດໝາຍ

ພາຍຫຼັງທີ່ກົດໝາຍໄດ້ຖືກຮັບຮອງ ແລະ ປະກາດໃຊ້ໃນປີ 2015 ກະຊວງປ້ອງກັນປະເທດ ກໍໄດ້ຈັດພິມປຶ້ມກົດໝາຍ ເພື່ອແຈກຢາຍໃຫ້ບັນດາກົມກອງ ແລະ ບຸກຄົນຈຳນວນໜຶ່ງ; ພ້ອມກັນນັ້ນ, ກໍໄດ້ມີການເຄື່ອນໄຫວລົງໂຄສະນາເຜີຍແຜ່ກົດໝາຍໃຫ້ນາຍ ແລະ ພົນທະຫານ ຢູ່ບັນດາກົມກອງກຳລັງຫຼວງ-ກຳລັງທ້ອງຖິ່ນ ເພື່ອສ້າງຄວາມຮັບຮູ້ ແລະ ເຂົ້າໃຈຕໍ່ກົດໝາຍດັ່ງກ່າວ ໄດ້ 47 ກົມກອງ, ມີຈຳນວນພົນເຂົ້າຮ່ວມ 7.900 ກວ່າສະຫາຍ, ຍິງ 1.147 ສະຫາຍ.

1.3. ການຜັນຂະຫຍາຍເປັນນິຕິກຳໃຕ້ກົດໝາຍ

ໃນກົດໝາຍດັ່ງກ່າວ ມາດຕາທີ່ກຳນົດໃຫ້ຜັນຂະຫຍາຍອອກເປັນນິຕິກຳໃຕ້ກົດໝາຍມີທັງໝົດ 6 ມາດຕາ ຄື: ມາດ ຕາ 14, 15, 30, 33, 36 ແລະ ມາດຕາ 61 ໄດ້ຜັນຂະໜາຍສຳເລັດທັງໝົດ ຊຶ່ງມີນິຕິກຳໃຕ້ກົດໝາຍ 8 ສະບັບ.

1.4 ຕີລາຄາການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການປ້ອງກັນຊາດ.

ກ. ຂໍ້ສະດວກ:

- ກົດໝາຍວ່າດ້ວຍການປ້ອງກັນຊາດ ເປັນເຄື່ອງມືອັນສຳຄັນໃນການຄຸ້ມຄອງ, ການເຄື່ອນໄຫວ, ຕິດຕາມກວດກາວຽກງານປ້ອງກັນຊາດ ເຮັດໃຫ້ວຽກງານດັ່ງກ່າວ ເປັນຄວາມຮັບຜິດຊອບຂອງທົ່ວປວງຊົນລາວແນໃສ່ຮັບປະກັນໃຫ້ປະເທດຊາດມີສະຖຽນລະພາບທາງດ້ານການເມືອງຢ່າງໜັກແໜ້ນ, ມີຄວາມໝັ້ນຄົງ ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ ປະກອບສ່ວນເຂົ້າໃນພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ;

- ເປັນບ່ອນອີງພື້ນຖານໃຫ້ແກ່ການຊີ້ນຳ-ບັນຊາ, ການປະຕິບັດໜ້າທີ່ຂອງກຳລັງປ້ອງກັນຊາດ ເຮັດໃຫ້ວຽກງານປ້ອງກັນຊາດ ເປັນຄວາມຮັບຜິດຊອບຂອງທົ່ວປວງຊົນລາວ ແລະ ການເຄື່ອນໄຫວເຮັດໜ້າທີ່ວຽກງານປ້ອງກັນຊາດທົ່ວປວງຊົນຮອບດ້ານ ໂດຍແມ່ນກຳລັງປະກອບອາວຸດປະຊາຊົນເປັນຫຼັກແຫຼ່ງ;

- ພ້ອມດຽວກັນນີ້ ກົດໝາຍສະບັບດັ່ງກ່າວ ຍັງເປັນພື້ນຖານໃຫ້ແກ່ວຽກງານການສຶກສາອົບຮົມວຽກງານປ້ອງກັນຊາດໃຫ້ແກ່ແຕ່ລະເປົ້າໝາຍ ສະແດງອອກໃນໄລຍະຜ່ານມາໄດ້ຈັດຕັ້ງການຮຽນ-ການສອນວຽກງານປ້ອງກັນຊາດໃຫ້ແກ່ການນຳພັກ-ລັດ ເປົ້າໝາຍ 1, 2, 3 ແລະ ນັກຮຽນນັກສຶກສາຢູ່ຕາມສະຖາບັນການສຶກສາທັງພາກລັດ ແລະ ເອກະຊົນ ຈຳນວນໜຶ່ງ.

ຂ. ຂໍ້ຫຍຸ້ງຍາກ

- ການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍ ການປ້ອງກັນຊາດ ໃນໄລຍະຜ່ານມາ ເຫັນວ່າຍັງພົບຄວາມຫຍຸ້ງຍາກບາງດ້ານ ເປັນຕົ້ນ:

- ການກຳນົດເນື້ອໃນບາງພາກ, ໝວດ ແລະ ມາດຕາ ຍັງບໍ່ທັນຄົບຖ້ວນ, ຮັດກຸມ, ລະອຽດຈະແຈ້ງ, ມີບາງຄຳສັບເຂົ້າໃຈຍາກໂດຍສະເພາະຄຳສັບທາງການທະຫານ;

- ນະໂຍບາຍຂອງລັດກ່ຽວກັບວຽກງານປ້ອງກັນຊາດ: ເຫັນວ່າ ຜ່ານການປະຕິບັດຕົວຈິງ ແມ່ນຍັງບໍ່ໄດ້ຮັບການຕອບສະໜອງເທົ່າທີ່ຄວນຈາກລັດຖະບານ ແລະ ພາກສ່ວນອື່ນຂອງສັງຄົມ;

- ການສ້າງທ່າສະໜາມທົ່ວປວງຊົນ ແລະ ການຈັ່ງທ່າທົ່ວປວງຊົນ: ເຫັນວ່າ ການຈັດຕັ້ງປະຕິບັດແມ່ນບໍ່ທັນບັນລຸໄດ້ຕາມແຜນຍຸດທະສາດທີ່ກະຊວງປ້ອງກັນປະເທດກຳນົດໄວ້ ເປັນຕົ້ນແມ່ນການກໍ່ສ້າງຮາກຖານການເມືອງ, ການສ້າງທ່າສະໜາມປະຊາຊົນ 3 ຂັ້ນ, ການສ້າງບ້ານປ້ອມໝັ້ນກຸ່ມບ້ານສູ້ຮົບຕິດລຽນຍັງບໍ່ທັນບັນລຸຕາມລະດັບ ແລະ ເປົ້າໝາຍທີ່ວາງໄວ້;

- ການຮັບປະກັນການເຄື່ອນໄຫວຂອງກຳລັງປະກອບອາວຸດ: ເຫັນວ່າ ຂອດການຈັດຕັ້ງປະຕິບັດຍັງບໍ່ສາມາດຕອບສະໜອງໄດ້ເທົ່າທີ່ຄວນ ໂດຍ

ອ່ານຕໍ່ສະບັບໜ້າ

## ລາຍງານ...

(ຕໍ່ຈາກໜ້າ 1)

ໂດຍປະຕິບັດຕາມມະຕິຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 51/ຄປຈ, ລົງວັນທີ 20 ມີນາ 2023 ກ່ຽວກັບການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍກຳລັງປ້ອງກັນຄວາມສະຫງົບປະຊາຊົນ ທີ່ຢູ່ໃນຄວາມຮັບຜິດຊອບຂອງກະຊວງປ້ອງກັນຄວາມສະຫງົບ ເພື່ອກຽມພ້ອມລາຍງານໃນກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX ຢ່າງມີປະສິດທິຜົນ ກະຊວງປ້ອງກັນຄວາມສະຫງົບ ໄດ້ກະກຽມດ້ານຕ່າງໆ ເປັນຕົ້ນໄດ້ມີການອອກຂໍ້ຕົກລົງແຕ່ງຕັ້ງຄະນະຮັບຜິດຊອບ, ສ້າງແຜນການເຄື່ອນໄຫວ, ໄດ້ອອກແຈ້ງການໃຫ້ບັນດາກົມກອງອ້ອມຂ້າງກະຊວງ ແລະ ກອງບັນຊາການ ປກສ ແຂວງ ທົ່ວປະເທດ ຈັດຕັ້ງປະເມີນຜົນ ແລະ ຄະນະຮັບຜິດຊອບກໍໄດ້ລົງປະເມີນຜົນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍກຳລັງປ້ອງກັນຄວາມສະຫງົບປະຊາຊົນ ຢູ່ 4 ຈຸດ ຕາມແຜນການຂອງສະພາແຫ່ງຊາດໄດ້ກຳນົດ; ຈັດກອງປະຊຸມຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍສະບັບດັ່ງກ່າວຂອງສະພາແຫ່ງຊາດ ທີ່ກະຊວງປ້ອງກັນຄວາມສະຫງົບ ຄັ້ງວັນທີ 11 ຕຸລາ 2023 ແລະ ກອງປະຊຸມຍົກສູງຄຸນນະພາບທາງດ້ານເນື້ອໃນ ໃຫ້ແກ່ກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX ຄັ້ງວັນທີ 20 ຕຸລາ 2023 ແລະ ລ່າສຸດ ຜ່ານກອງປະຊຸມຄະນະປະຈຳສະພາແຫ່ງຊາດ ຄັ້ງວັນທີ 28 ຕຸລາ 2023 ແລ້ວຄະນະຮັບຜິດຊອບປະເມີນຜົນ ໄດ້ຮີບໂຮມບັນດາຄຳເຫັນການປະເມີນຜົນກົດໝາຍສະບັບດັ່ງກ່າວ ພ້ອມທັງປັບປຸງຮ່າງບົດປະເມີນຜົນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍກຳລັງປ້ອງກັນຄວາມສະຫງົບປະຊາຊົນ ສຳເລັດໂດຍພື້ນຖານ.

2. ຄວາມເປັນມາຂອງກົດໝາຍວ່າດ້ວຍກຳລັງປ້ອງກັນຄວາມສະຫງົບປະຊາຊົນ

ກົດໝາຍວ່າດ້ວຍກຳລັງປ້ອງກັນຄວາມສະຫງົບປະຊາຊົນ ໄດ້ຖືກຮັບຮອງໂດຍສະພາແຫ່ງຊາດ ສະບັບເລກທີ 03/ສພຊ, ລົງວັນທີ 02 ກໍລະກົດ 2007 ແລະ ມີການປັບປຸງໜຶ່ງຄັ້ງ ໃນປີ 2017 ເຊິ່ງກົດໝາຍສະບັບດັ່ງກ່າວ ເພື່ອເປັນການບູລະນະກິງຈັກລັດ ໃຫ້ມີຄວາມເຂັ້ມແຂງ, ມີປະສິດທິຜົນ ເປັນຕົ້ນການປັບປຸງແບບແຜນວິທີເຮັດວຽກ, ແບບແຜນການນຳພາ-ຊີ້ນຳ, ການເຄື່ອນໄຫວປະຕິບັດໜ້າທີ່ວຽກງານ ແລະ ການຍົກສູງບົດບາດຂອງກຳລັງປ້ອງກັນຄວາມສະຫງົບປະຊາຊົນ ໃຫ້ມີຄວາມຄ່ອງຕົວ, ເຕີບໃຫຍ່ເຂັ້ມແຂງ ແລະ ທັນສະໄໝ ໃຫ້ເທົ່າທຽມກັບກຳລັງຕຳຫຼວດໃນພາກພື້ນ, ສາກົນ ແລະ ຫັນເຂົ້າສູ່ກົດໝາຍ ແລະ ລະບຽບການຢ່າງເຂັ້ມງວດເທື່ອລະກ້າວ ເພື່ອຮັບປະກັນໃຫ້ປະເທດຊາດມີຄວາມສະຖຽນລະພາບທາງດ້ານການເມືອງ, ມີຄວາມສະຫງົບຄວາມເປັນລະບຽບຮຽບຮ້ອຍໃນສັງຄົມ.

II. ເນື້ອໃນການປະເມີນຜົນກົດໝາຍວ່າດ້ວຍກຳລັງປ້ອງກັນຄວາມສະຫງົບປະຊາຊົນ

1. ການປະເມີນຜົນໂດຍລວມຕໍ່ກັບກົດໝາຍວ່າດ້ວຍກຳລັງປ້ອງກັນຄວາມສະຫງົບປະຊາຊົນ

1.1 ການໂຄສະນາເຜີຍແຜ່ກົດໝາຍ

ກະຊວງປ້ອງກັນຄວາມສະຫງົບ ຖືເປັນສຳຄັນວຽກງານໂຄສະນາເຜີຍແຜ່ກົດໝາຍໃນທົ່ວສັງຄົມ ລວມທັງກຳລັງປ້ອງກັນຄວາມສະຫງົບປະຊາຊົນ ເພື່ອໃຫ້ມີຄວາມຮັບຮູ້, ເຂົ້າໃຈ, ເຄົາລົບ ແລະ ຈັດຕັ້ງປະຕິບັດກົດໝາຍວ່າດ້ວຍກຳລັງປ້ອງກັນຄວາມສະຫງົບປະຊາຊົນ ຢ່າງຖືກຕ້ອງ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ ໂດຍໄດ້ຈັດພິມປຶ້ມກົດໝາຍວ່າດ້ວຍກຳລັງປ້ອງກັນຄວາມສະຫງົບປະຊາຊົນ ຈຳນວນ 3.000 ຫົວ, ໄດ້ຈັດກອງປະຊຸມໂຄສະນາເຜີຍແຜ່ ຈຳນວນ 62 ຄັ້ງ, 33 ຈຸດ, ເຊິ່ງມີຜູ້ເຂົ້າຮ່ວມ 15.506 ເທື່ອຄົນ; ນອກນັ້ນ, ຍັງໄດ້ໂຄສະນາເຜີຍແຜ່ທາງຈົດໝາຍເຫດທາງລັດຖະການ, ໂທລະພາບ, ວິທະຍຸ ແລະ ໜັງສືພິມຂອງ ປກສ ເຮັດໃຫ້ນາຍ ແລະ ພົນຕຳຫຼວດໃນຂອບເຂດທົ່ວປະເທດ ແລະ ພໍ່ແມ່ປະຊາຊົນທົ່ວສັງຄົມມີຄວາມຮັບຮູ້ ແລະ ເຂົ້າໃຈ ກ່ຽວກັບກົດໝາຍວ່າດ້ວຍກຳລັງປ້ອງກັນຄວາມສະຫງົບປະຊາຊົນ ເປັນຢ່າງດີ.

1.2 ການຜັນຂະຫຍາຍເປັນນິຕິກຳໃຕ້ກົດໝາຍ

+ ກົດໝາຍວ່າດ້ວຍກຳລັງປ້ອງກັນຄວາມສະຫງົບປະຊາຊົນ ສະບັບປັບປຸງ ປີ 2017 ໄດ້ກຳນົດໃຫ້ຜັນຂະຫຍາຍເປັນນິຕິກຳໃຕ້ກົດໝາຍ ມີ 5 ມາດຕາຄື: 16, 20, 22, 50 ແລະ 52.

2. ການປະເມີນຜົນເນື້ອໃນບາງມາດຕາຂອງກົດໝາຍວ່າດ້ວຍກຳລັງປ້ອງກັນຄວາມສະຫງົບປະຊາຊົນ

+ ຜ່ານການຈັດຕັ້ງປະເມີນຜົນກົດໝາຍສະບັບດັ່ງກ່າວ ຕາມແຜນການຂອງສະພາແຫ່ງຊາດໄດ້ກຳນົດ ເຫັນວ່າມາດຕາທີ່ຄວນປັບປຸງ ມີ 34 ມາດຕາ ເປັນຕົ້ນບັນຫາກ່ຽວກັບຊື່ຂອງກົດໝາຍສະບັບດັ່ງກ່າວ, ຫຼັກການຈັດຕັ້ງ ແລະ ການເຄື່ອນໄຫວ, ຂອບເຂດສິດ ແລະ ໜ້າທີ່ ຂອງກຳລັງປ້ອງກັນຄວາມສະຫງົບ ອາຊີບ, ໂຄງປະກອບການຈັດຕັ້ງ ແລະ ໂຄງປະກອບບຸກຄະລາກອນນຳພາ ບັນຊາແຕ່ລະຂັ້ນ, ມາດຕະຖານຂອງນາຍ ແລະ ພົນຕຳຫຼວດ, ຂັ້ນ ແລະ ຊັ້ນຂອງນາຍຕຳຫຼວດ, ກຳນົດເວລາການເລື່ອນຊັ້ນ, ເງື່ອນໄຂການເລື່ອນຊັ້ນນາຍ ແລະ ພົນຕຳຫຼວດ, ການກຳນົດຊັ້ນໃສ່ຕຳແໜ່ງຜູ້ບັນຊາແຕ່ລະຂັ້ນ, ການທຽບຂັ້ນຕຳແໜ່ງຂອງນາຍຕຳຫຼວດ ລວມທັງການແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງຂອງນາຍຕຳຫຼວດ ແລະ ການແຕ່ງຕັ້ງນາຍຕຳຫຼວດໄປປະຕິບັດໜ້າທີ່ຢູ່ຂະແໜງການອື່ນ.

III. ຕີລາຄາການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍກຳລັງປ້ອງກັນຄວາມສະຫງົບປະຊາຊົນ

ຜ່ານການຈັດຕັ້ງປະຕິບັດຕົວຈິງ ກໍຄືການລົງປະເມີນຜົນການຈັດຕັ້ງປະຕິບັດກົດໝາຍດັ່ງກ່າວໃນຂອບເຂດທົ່ວປະເທດ ດັ່ງນີ້:

1. ຂໍ້ສະດວກ, ດ້ານດີ ແລະ ສາເຫດທີ່ພາໃຫ້ດີ

- ໄດ້ຮັບການນຳພາ-ຊີ້ນຳຂອງສູນກາງພັກ, ການຕິດຕາມ ຊຸກຍູ້ຂອງສະພາແຫ່ງຊາດ, ສະພາປະຊາຊົນແຂວງ, ນະຄອນຫຼວງ, ລັດຖະບານ, ອົງການປົກຄອງທ້ອງຖິ່ນ, ການສະໜັບສະໜູນຂອງຂະແໜງການທີ່ກ່ຽວຂ້ອງ ແລະ ທົ່ວສັງຄົມ;

- ຄະນະພັກ-ຄະນະບັນຊາ ກະຊວງປ້ອງກັນຄວາມສະຫງົບ, ບັນດາກົມກອງອ້ອມຂ້າງກະຊວງ ແລະ ກອງບັນຊາການ ປກສ ທ້ອງຖິ່ນ ໃນຂອບເຂດທົ່ວປະເທດ ໄດ້ເອົາໃຈໃສ່ນຳພາ-ຊີ້ນຳ, ບັນຊາ ຄຸ້ມຄອງ ຕິດຕາມ, ກວດກາ ແລະ ຫັນທຸກການເຄື່ອນໄຫວຂອງວຽກງານວິຊາສະເພາະຂອງກຳລັງປ້ອງກັນຄວາມສະຫງົບປະຊາຊົນ

ອ່ານຕໍ່ສະບັບໜ້າ

# 2 ສະພາປະຊາຊົນ ແຂວງສາລະວັນ ແລະ ນະຄອນດາໜັງ ພົບປະແລກປ່ຽນບົດຮຽນ




(ສພຊ) ກອງປະຊຸມພົບປະແລກປ່ຽນບົດຮຽນ ລະຫວ່າງສະພາປະຊາຊົນແຂວງສາລະວັນ ແຫ່ງ ສປປ ລາວ ກັບສະພາປະຊາຊົນນະຄອນດານັງ ແຫ່ງ ສສ ຫວຽດນາມ ໄດ້ມີຂຶ້ນໃນຕອນເຊົ້າຂອງວັນທີ 3 ພະຈິກ 2023 ທີ່ຫ້ອງປະຊຸມສະພາປະຊາຊົນແຂວງສາລະວັນ ໂດຍຝ່າຍຄະນະຜູ້ແທນສະພາປະຊາຊົນແຂວງສາລະວັນ ນຳໂດຍສະຫາຍ ສີເຮັ້ງ ທອມສິມບັດ ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງສາລະວັນ ພ້ອມດ້ວຍຄະນະ ແລະ ຝ່າຍຄະນະຜູ້ແທນສະພາປະຊາຊົນນະຄອນດານັງ ນຳໂດຍສະຫາຍ ນາງ ຫວຽນ ທິ ແອັງ ທິ ກຳມະການພັກນະຄອນ, ຮອງປະທານສະພາປະຊາຊົນນະຄອນດານັງ ແຫ່ງ ສສ ຫວຽດນາມ ພ້ອມດ້ວຍຄະນະ, ມີພະແນກການຂອງແຂວງສາລະວັນ, ພະນັກງານ-ລັດຖະກອນ ສະພາປະຊາຊົນແຂວງເຂົ້າຮ່ວມ.

ສະຫາຍ ສີເຮັ້ງ ທອມສິມບັດ ໄດ້ສະແດງຄວາມຕ້ອນຢ່າງອົບອຸ່ນ ແລະ ຕີລາຄາສູງຕໍ່ການມາຢ້ຽມຢາມ ແລະ ເຮັດວຽກຂອງຄະນະຜູ້ແທນສະພາປະຊາຊົນນະຄອນດານັງ ແຫ່ງ ສສ ຫວຽດນາມ ໃນຄັ້ງນີ້ ເຊິ່ງມີຄວາມໝາຍສຳຄັນ ແລະ ເລິກເຊິ່ງ, ສະແດງເຖິງການຮັດແໜ້ນຄວາມສາມັກຄີ, ການພົບປະລະຫວ່າງສະພາປະຊາຊົນແຂວງສາລະວັນ ແຫ່ງ ສປປ ລາວ ກັບສະພາປະຊາຊົນນະຄອນດານັງ ແຫ່ງ ສສ ຫວຽດນາມ ຄັ້ງນີ້ ແມ່ນເປັນປີທຳອິດທີ່ໄດ້ມີການແລກປ່ຽນບົດຮຽນຮ່ວມກັນ.

ໂອກາດດັ່ງກ່າວ, ສະຫາຍ ນາງ ສູນໄຖ ໄຊຍະແສງ ກຳມະການພັກແຂວງ, ຮອງປະທານສະພາປະຊາຊົນແຂວງສາລະວັນ ໄດ້ລາຍງານສະພາບລວມຂອງແຂວງສາລະວັນໂດຍຫຍໍ້ ແລະ ລາຍງານວຽກງານໃນແຕ່ລະດ້ານຂອງສະພາປະຊາຊົນແຂວງສາລະວັນ; ຈາກນັ້ນ, ສະຫາຍ ນາງ ຫວຽນ ທິ ແອັງ ທິ ກໍໄດ້ສະແດງຄວາມຂອບໃຈຕໍ່ການຕ້ອນຮັບອັນອົບອຸ່ນ ແລະ ອຳນວຍຄວາມສະດວກດ້ານຕ່າງໆຕໍ່ການມາຢ້ຽມຢາມ ແລະ ແລກປ່ຽນບົດຮຽນເຊິ່ງກັນແລະກັນ ໃນຂົງເຂດສະພາປະຊາຊົນແຂວງ ພ້ອມໄດ້ລາຍງານສະພາບລວມຂອງນະຄອນດານັງໂດຍຫຍໍ້ ແລະ ລາຍງານການເຄື່ອນໄຫວວຽກງານຂອງສະພາປະຊາຊົນນະຄອນດານັງ ພ້ອມທັງໄດ້ປຶກສາຫາລື, ແລກປ່ຽນບົດຮຽນກ່ຽວກັບສະພາບການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງແຕ່ລະຝ່າຍຢ່າງມີບັນຍາກາດສ້າງສັນ.

ໂອກາດດຽວກັນນີ້, ສະພາປະຊາຊົນແຂວງສາລະວັນ ແລະ ສະພາປະຊາຊົນນະຄອນດານັງ ຍັງໄດ້ລົງນາມ ແລະ ເຊັນບົດບັນທຶກຄວາມຊົງຈຳຮ່ວມກັນ ໂດຍແມ່ນສະຫາຍ ສີເຮັ້ງ ທອມສິມບັດ ແລະ ສະຫາຍ ນາງ ຫວຽນ ທິ ແອັງ ທິ ເປັນຜູ້ລົງນາມ ເຊິ່ງຊ້ອງໜ້າຄະນະຜູ້ແທນທັງສອງຝ່າຍທີ່ເຂົ້າຮ່ວມ.

ຕອນບ່າຍຂອງວັນດຽວກັນ, ຄະນະຜູ້ແທນຈາກສະພາປະຊາຊົນນະຄອນດານັງ ຍັງເຄື່ອນໄຫວຢ້ຽມຢາມສູນພາສາຫວຽດນາມ ຢູ່ບ້ານວັດກາງ ແລະ ໄປທ່ຽວຊົມ, ກາບໄຫວ້ທາດໄຕປຣິດົກ ບ້ານວັດກາງ ແລະ ອື່ນໆອີກຈຳນວນໜຶ່ງ.

**(ດີລຳພົນ ພົມມະຈັນ)**



# ບັນຫາເຄັ່ງຮ້ອນຫຼາຍດ້ານ ທີ່ສະພາປະຊາຊົນນະຄອນຫຼວງວຽງຈັນ ເອົາໃຈໃສ່ໃນການແກ້ໄຂ

ໃນໄລຍະດຳເນີນກອງປະຊຸມສະໄໝສາມັນແຕ່ລະເທື່ອ ກົມສື່ມວນຊົນ ຄະນະເລຂາທິການສະພາແຫ່ງຊາດ ຮ່ວມກັບລາຍການຄົ້ນຫາມາເລົ່າ ໂທລະພາບແຫ່ງຊາດລາວ ໄດ້ມີການສຳພາດບັນດາທ່ານປະທານ-ຮອງປະທານສະພາປະຊາຊົນແຂວງ ໃນທົ່ວປະເທດ, ບັນດາທ່ານປະທານ-ຮອງປະທານກຳມາທິການຕ່າງໆຂອງສະພາແຫ່ງຊາດ ແລະ ແຂກຖືກເຊີນຈາກກະຊວງຕ່າງໆ. ສຳລັບກອງປະຊຸມສະໄໝສາມັນເທື່ອທີ 6 ສະພາແຫ່ງຊາດ ຊຸດທີ IX ທີ່ໄດ້ໄຂຂຶ້ນຢ່າງເປັນທາງການໃນອາທິດຜ່ານມາ ແລະ ທີມງານສຳພາດຂອງພວກເຮົາກໍໄດ້ເລີ່ມການສຳພາດທ່ານ ບຸນທາມ ພຸດທະວົງສາ ຮອງປະທານຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 1, ຮອງປະທານສະພາປະຊາຊົນນະຄອນຫຼວງວຽງຈັນ ເມື່ອວັນທີ 6 ພະຈິກນີ້ ເຊິ່ງທ່ານໄດ້ຍົກໃຫ້ເຫັນບັນຫາທີ່ພົ້ນເດັ່ນ ແລະ ເຄັ່ງຮ້ອນຂອງນະຄອນຫຼວງວຽງຈັນ, ວິທີການ ແລະ ທິດທາງຈຸດສຸມໃນການແກ້ໄຂບັນຫາດັ່ງກ່າວ ທ່ານໃຫ້ຮູ້ວ່າ:

ຜ່ານການເຄື່ອນໄຫວຕິດຕາມກວດກາຂອງຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 1 ສົມທົບກັບສະມາຊິກສະພາປະຊາຊົນນະຄອນຫຼວງ ໂດຍສະເພາະໃນເວລາເຄື່ອນໄຫວພົບປະຜູ້ມີສິດເລືອກຕັ້ງ ເຫັນວ່າບັນຫາຕົ້ນຕໍທີ່ຊາວນະຄອນຫຼວງວຽງຈັນໄດ້ສະເໜີຕໍ່ຜູ້ແທນມີ 3 ບັນຫາແມ່ນ:

**ບັນຫາທີໜຶ່ງ:** ດັ່ງທີ່ຮູ້ນຳກັນວ່າ ປະເທດເຮົາ ພວມປະສົບກັບບັນຫາວິກິດການຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ທີ່ສົ່ງຜົນກະທົບຕໍ່ທຸກພາກສ່ວນຂອງສັງຄົມ ໃນທາງກົງ ແລະ ທາງອ້ອມ ເຊິ່ງປັດຈຸບັນ ການແກ້ໄຂບັນຫາດັ່ງກ່າວຍັງບໍ່ທັນແຂງແຮງເທົ່າທີ່ຄວນ ເຫັນໄດ້ຈາກຄ່າເງິນກີບຍັງຜັນຜວນ ແລະ ສືບຕໍ່ອ່ອນຄ່າ, ປະຊາຊົນລາວບັນດາເຜົ່າຍັງຕ້ອງແບກຮັບຄ່າຄອງຊີບທີ່ເພີ່ມຂຶ້ນ ໃນສະພາບທີ່ລາຍຮັບມີເທົ່າເດີມ. ຕໍ່ກັບບັນຫາດັ່ງກ່າວ ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 1 ກໍຄື ສະພາປະຊາຊົນນະຄອນຫຼວງວຽງຈັນ ໄດ້ຄົ້ນຄວ້າປຶກສາຫາລື ແລະ ຕັ້ງບັນຫາໃຫ້ອົງການປົກຄອງນະຄອນຫຼວງ ລາຍງານກ່ຽວກັບແຜນການສ້າງແຫຼ່ງລາຍຮັບໃໝ່, ການສົ່ງເສີມ ແລະ ປົກປ້ອງການຜະລິດພາຍໃນ ເພື່ອລາຍງານຕໍ່ກອງປະຊຸມສະ



ໄໝສາມັນເທື່ອທີ 6 ຂອງສະພາປະຊາຊົນນະຄອນຫຼວງວຽງຈັນ ທີ່ຈະຈັດຂຶ້ນໃນເດືອນທັນວາທີ່ຈະມາເຖິງນີ້.

**ບັນຫາທີສອງ:** ການແກ້ໄຂບັນຫາຜົນກະທົບຕໍ່ປະຊາຊົນຈາກບັນດາໂຄງການລົງທຶນທີ່ຈັດຕັ້ງປະຕິບັດຢູ່ນະຄອນຫຼວງວຽງຈັນ ເປັນຕົ້ນແມ່ນໂຄງການທາງລົດໄຟລາວ-ຈີນ, ໂຄງການທ່າບົກ-ທ່ານາແລ້ງ ເຂດໂລຈິດສ໌ຕິກ, ໂຄງການປັບປຸງ ແລະ ສ້ອມແປງເສັ້ນທາງຫຼວງແຫ່ງຊາດ ເລກທີ 13 ເໜືອ ເຊິ່ງສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 1 ແລະ ສະມາຊິກສະພາປະຊາຊົນນະຄອນຫຼວງວຽງຈັນ ກໍໄດ້ເຄື່ອນໄຫວຕິດຕາມກວດກາ ເຫັນວ່າປັດຈຸບັນໂຄງການໄດ້ຈັດຕັ້ງປະຕິບັດໄປແລ້ວ ແຕ່ການຊົດເຊີຍ, ການດັດແກ້ໃບຕາດິນໃຫ້ປະຊາຊົນຍັງຊັກຊ້າບໍ່ທັນໄດ້ຮັບການແກ້ໄຂຢ່າງຂາດໂຕ ແລະ ຜົນກະທົບອື່ນທາງສະພາບແວດລ້ອມ.

**ບັນຫາທີສາມ:** ການອະນຸຍາດຂຸດຄົ້ນແຮ່ທາດຫຼາຍໂຄງການໃນນະຄອນຫຼວງວຽງຈັນ ຜ່ານການລົງຕິດຕາມກວດກາເຫັນວ່າມີຜົນກະທົບຕໍ່ການດຳລົງຊີວິດຂອງປະຊາຊົນ, ການໄລ່ລຽງທາງດ້ານຜົນປະໂຫຍດ ເຫັນວ່າບໍ່ດຸ່ນດ່ຽງກັນ ລະຫວ່າງເນື້ອທີ່ສຳປະທານ ແລະ ພັນທະຕ່າງໆທີ່ລັດໄດ້ຮັບ, ການປະເມີນສະພາບແວດລ້ອມ, ຜົນກະທົບໃນຕໍ່ໜ້າ ແລະ ຍາວນານ ຍັງຄາດຄະເນໄດ້ຍາກ ເປັນຕົ້ນແມ່ນບັນຫາດິນຍຸບທີ່ອາດເກີດຂຶ້ນໃນຕໍ່ໜ້າ. ສິ່ງສຳຄັນແມ່ນນະຄອນຫຼວງວຽງຈັນເປັນເມືອງຫຼວງຂອງປະເທດ, ເປັນສູນກາງທາງດ້ານການເມືອງ, ເສດຖະກິດ, ວັດທະນະທຳ, ເປັນທີ່ຕັ້ງສຳຄັນຂອງສະຖານທີ່ພັກ-ລັດ ເຊິ່ງສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 1 ໄດ້ຍົກຂຶ້ນຕໍ່ກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດໃນຄັ້ງນີ້.

ທ່ານ ບຸນທາມ ພຸດທະວົງສາ ຍັງໃຫ້ຮູ້ຕື່ມວ່າ: ໃນໄລຍະຜ່ານມາ ໄດ້ເອົາໃຈໃສ່ຕິດຕາມກວດກາທຸກພາກສ່ວນຂອງອົງການຈັດຕັ້ງ ພາຍໃນນະຄອນຫຼວງວຽງຈັນ ໃນການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ ເຫັນວ່າຄວາມເອົາໃຈໃສ່ໃນການຈັດຕັ້ງປະຕິບັດບາງວຽກງານຂອງພາກສ່ວນທີ່ກ່ຽວຂ້ອງຍັງບໍ່ທັນເຂັ້ມແຂງ, ການຊຸກຍູ້ສັງຄົມໃຫ້ມີສ່ວນຮ່ວມໃນການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດຍັງບໍ່ທັນເປັນຂະບວນການຟົດຟື້ນ. ສະນັ້ນ, ກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາປະຊາຊົນນະຄອນຫຼວງວຽງຈັນ ທີ່ຈະດຳເນີນຂຶ້ນໃນເດືອນທັນວານີ້ ຈຶ່ງໄດ້ກຳນົດຫົວຂໍ້ໃຫ້ອົງການປົກຄອງລາຍງານການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ ໃນໄລຍະແຕ່ ປີ 2021-2023 ເພື່ອໃຫ້ກອງປະຊຸມຮັບຊາບຕື່ມ ແລະ ຄົ້ນຄວ້າມາດຕະການຕ່າງໆ ເພື່ອໃຫ້ການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ໃຫ້ມີໝາກຜົນຍິ່ງຂຶ້ນ.

ໃນໂອກາດດຽວກັນນີ້, ໃນນາມເປັນຕົວແທນຂອງປະຊາຊົນ ທ່ານ ບຸນທາມ ພຸດທະວົງສາ ຍັງໄດ້ຕາງໜ້າສະມາຊິກສະພາສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 1 ກໍຄືສະມາຊິກສະພາປະຊາຊົນນະຄອນຫຼວງວຽງຈັນ ຂໍຝາກຢ້ຽມຢາມຖາມຂ່າວມາຍັງພໍ່ແມ່ປະຊາຊົນບັນດາເຜົ່າ ໂດຍສະເພາະຊາວນະຄອນຫຼວງວຽງຈັນ. ໃນສະພາບຄວາມຫຍຸ້ງຍາກທາງດ້ານເສດຖະກິດທີ່ປະເທດເຮົາພວມປະເຊີນຢູ່ເວົ້າລວມ, ເວົ້າສະເພາະແມ່ນຊາວນະຄອນຫຼວງວຽງຈັນ ຂໍໃຫ້ພໍ່ແມ່ປະຊາຊົນ, ພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ ມີຄວາມສາມັກຄີ, ອົດທົນຜ່ານຜ່າວິກິດການນີ້ໄປພ້ອມກັນ ແລະ ເຂົ້າຮ່ວມປະຕິບັດຕາມແນວທາງນະໂຍບາຍທີ່ພັກ-ລັດວາງອອກ ແລະ ສະເໜີໃຫ້ບັນດາອົງການຈັດຕັ້ງລັດ, ອົງການຈັດຕັ້ງສັງຄົມ ແລະ ພາກສ່ວນກ່ຽວຂ້ອງ ເອົາໃຈໃສ່ມີສ່ວນຮ່ວມໃນການຈັດຕັ້ງຜັນຂະຫຍາຍວາລະແຫ່ງຊາດວ່າດ້ວຍການແກ້ໄຂເສດຖະກິດ-ການເງິນ ແລະ ແກ້ໄຂບັນຫາຢາເສບຕິດຢ່າງເຂັ້ມແຂງ ແລະ ສະມາຊິກສະພາແຫ່ງຊາດ, ສະມາຊິກສະພານະຄອນຫຼວງວຽງຈັນ ກໍຈະສຸມໃສ່ຊຸກຍູ້ຕິດຕາມພາກສ່ວນກ່ຽວຂ້ອງ ແລະ ສຸມໃສ່ປະກອບຄຳເຫັນຕໍ່ບັນຫາຕ່າງໆທີ່ນຳເຂົ້າພິຈາລະນາໃນກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດໃນຄັ້ງນີ້ຢ່າງຕັ້ງໜ້າ ເພື່ອສະເໜີແນວທາງໃນການແກ້ໄຂ ເພື່ອໃຫ້ລັດຖະບານ, ບັນດາກະຊວງ ນຳໄປພິຈາລະນາຈັດຕັ້ງປະຕິບັດໃຫ້ສອດຄ່ອງກັບພາລະບົດບາດຂອງແຕ່ລະພາກສ່ວນ.

# ລາຍຮັບງົບປະມານເກີນແຜນ, ດຸນການຄ້າຕ່າງປະເທດເກີນດຸນ ແຕ່ດຸນຊຳລະສະສາງກັບຕ່າງປະເທດຊໍ້າພັດຂາດດຸນ

ທ່ານ ສຸວັນນີ ໄຊຊະນະ ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 11 ແຂວງບໍລິຄຳໄຊ ປະກອບຄຳເຫັນ ຕໍ່ວຽກງານການເງິນ ແລະ ວຽກງານທະນາຄານ ທີ່ລັດຖະບານລາຍງານໃນກອງປະຊຸມສະໄໝສາມັນ ເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ກອງປະຊຸມດັ່ງກ່າວ ພວມດຳເນີນໃນຕອນນີ້ ເພາະເປີດຂຶ້ນແຕ່ວັນທີ 31 ຕຸລາ - 21 ພະຈິກ 2023 ຈຶ່ງຈະສຳເລັດ ໂດຍທ່ານກ່າວວ່າ:

ເວົ້າລວມແມ່ນການປະຕິບັດ ແລະ ການກຳນົດນະໂຍບາຍ ການເງິນ ແລະ ການທະນາຄານ ຫຼື ວ່ານະໂຍບາຍເງິນຕາ ເມື່ອໄດ້ຮັບຟັງນະໂຍບາຍຂອງລັດຖະບານ ເຫັນໄດ້ວ່າບັນດານະໂຍບາຍ ແລະ ແຜນການຈັດຕັ້ງປະຕິບັດຕົວຈິງ ໃນຂົງເຂດຕ່າງໆໄດ້ຮັບໝາກຜົນຢ່າງຕັ້ງໜ້າ ໄດ້ມີມະຕິຄຳສັ່ງ ນິຕິກຳຕ່າງໆອອກມາຢ່າງຕໍ່ເນື່ອງ ທະນາຄານກໍໄດ້ນຳໃຊ້ເຄື່ອງມືທຸກຢ່າງທີ່ມີ ເປັນຕົ້ນແມ່ນການປັບອັດຕາດອກເບ້ຍພື້ນຖານ, ປັບອັດຕາດອກເບ້ຍສ່ວນເງິນແຮຝາກບັງຄັບ, ອອກຈຳໜ່າຍພັນທະບັດ 5 ຄັ້ງ, ຄຸ້ມຄອງອັດຕາແລກປ່ຽນ ແລະ ອື່ນໆ ການດຶງດູດເອົາກະແສເງິນຕາຈາກການສົ່ງອອກ ເຂົ້າສູ່ລະບົບທະນາຄານ ເມື່ອກ່ອນເຮົາສົມທະນາກັນພຽງແຕ່ 31%-32% ມາຮອດດຽວນີ້ໄດ້ 41% ແລະມີແຜນວ່າໃນທ້າຍປີ ຈະໃຫ້ໄດ້ 50% ແລະ ປີ 2024 ນີ້ ຈະມີຄາດໝາຍ 70% ເປັນມາດຕະການທີ່ມີຜົນສັກສິດແທ້ ແຕ່ໃນທີ່ນີ້ ຂ້າພະເຈົ້າ ກໍຢາກມີຄຳເຫັນຢູ່ບາງສ່ວນ ກ່ຽວກັບການຈັດຕັ້ງປະຕິບັດນະໂຍບາຍສິນເຊື່ອ ເພື່ອກະຕຸ້ນເສດຖະກິດຕາມຂໍ້ຕົກລົງ 93/ນຍ ນີ້. ໃນນີ້ມີ 2 ບ້ອງ 4.500 ຕື້ ແລະ 2.500 ຕື້ ເຊິ່ງທະນາຄານແຫ່ງ ສປປ ລາວ ກໍຄືລັດຖະບານ ຈະຕ້ອງໄດ້ຂາຍພັນທະບັດ ເພື່ອເອົາເງິນດັ່ງກ່າວນັ້ນໄປປ່ອຍໃນອັດຕາດອກເບ້ຍຕໍ່າ ໃນສ່ວນນີ້ ມີຕົ້ນທຶນຂອງລັດຖະບານຂອງທະນາຄານທີ່ຕ້ອງຮັບຜິດຊອບ ເພື່ອຊ່ວຍແບກຫາບ ໝາຍຄວາມວ່າ ຂາຍພັນທະບັດດ້ວຍດອກເບ້ຍສູງເພື່ອມາປ່ອຍດອກເບ້ຍ ເພື່ອຊຸກຍູ້ສົ່ງເສີມອັດຕາດອກເບ້ຍຕໍ່າ ປະມານ 3% ຕົວຢ່າງຄືແນວນັ້ນ ແລະ ມີດອກເບ້ຍຖົມຊຸມດ້ວຍ ສະນັ້ນ, ມັນເປັນຕົ້ນທຶນທີ່ສູງພໍສົມຄວນ ຂ້າພະເຈົ້າສະເໜີວ່າ ຈະຕ້ອງເປັນສິນເຊື່ອທີ່ຕ້ອງຮັບປະກັນຄຸນນະພາບ ແລະ ມີປະສິດທິຜົນແທ້ ບໍ່ເຮັດຄືແຕ່ກ່ອນ ກະຈາຍໄປເອົາອົກເອົາໃຈກັນ ສະເລ່ຍຄືທົ່ວໆໄປຄືແນວນັ້ນ ແລະ ຈະມີຜົນຕາມມາຄຸມເຄືອອີກຄືຜ່ານໆມາ ຈະມີໜີ້ສິນ ແລະ ບັນຫາຕ່າງໆ ເພາະວ່າກໍມີຫຼາຍກອງທຶນທີ່ລັດຖະບານໄດ້ທຸ້ມເທໃສ່ໃນໄລຍະຜ່ານມາ ແຕ່ກໍໜ້າເສຍດາຍຫຼາຍກອງທຶນປະສິດທິຜົນກໍຕໍ່າ ສູນເສຍໄປ ມີໜີ້ MPL ແລະ ອື່ນໆ ທີ່ນຳໃຊ້ບໍ່ຖືກເປົ້າໝາຍ, ບາງກໍລະນີກໍມີຜ່ານນາຍໜ້າ ຫຼື ອື່ນໆ ຜູ້ຢາກເຮັດແທ້ໆຊໍ້າພັດບໍ່ໄປຮອດ ຫຼື ອື່ນໆ ຂ້າພະເຈົ້າເຫັນວ່າ ສະເໜີໃຫ້ມີຄະນະຮັບຜິດຊອບຕິດຕາມຄຸ້ມຄອງຕັ້ງແຕ່ຂອດອະນຸມັດແຕ່ຫົວທີເປັນຕົ້ນໄປ



ຈາກພາກສ່ວນທີ່ກ່ຽວຂ້ອງ ມີທະນາຄານ, ມີການເງິນ, ມີຂະແໜງການທີ່ກ່ຽວຂ້ອງ ເພື່ອຮ່ວມກັນເປັນລວງດຽວກັນ ຂ້າພະເຈົ້າກໍຍັງຢາກສະເໜີວ່າຄວນຈະຕ້ອງໄດ້ມີການຕິດຕາມກວດກາ ຈາກສະພາປະຊາຊົນແຂວງ ເພື່ອໃຫ້ມີສອນຮ່ວມດ້ວຍໃນເງື່ອນໄຂດັ່ງກ່າວນີ້ ອັນນີ້ແມ່ນອັນທີໜຶ່ງ.

ກ່ຽວກັບນະໂຍບາຍການເງິນ ງົບປະມານ ຕາມຕົວເລກ 2-3 ປີມານີ້ ເຫັນວ່າບັນລຸງົບປະມານເກີນແຜນ ປີ 2022, ປີ 2023, ປີ 2024 ກໍໜ້າເພິ່ງພໍໃຈພໍສົມຄວນ ແຕ່ວ່າ ອັດຕາສ່ວນລາຍຮັບຕໍ່ GDP ນີ້ ຍັງຂ້ອນຂ້າງຕໍ່າ ຖ້າວ່າແມ່ນລາຍຮັບຢູ່ພາຍໃນກໍຍິ່ງຕໍ່າກວ່ານັ້ນ ປີ 2022 ນີ້ 15% ຕໍ່ GDP ເທົ່ານັ້ນ ປີ 2023 ນີ້ 9 ເດືອນ 14,5% ໝົດປີ ນີ້ອາດຈະຮອດ 16% ປີ 2024 ມີແຜນ 17% ຕໍ່ GDP ໂດຍທົ່ວໄປແລ້ວປະມານ 18%-22% ປະເທດອ້ອມຂ້າງຂອງພວກເຮົາ ລາຍຮັບດັ່ງກ່າວຈະໄດ້ຕາມແຜນ ຫຼື ລື່ນແຜນນີ້ ຖ້າວ່າໃນສະພາບເສດຖະກິດປົກກະຕິ ແມ່ນມີໄຊຊະນະ ແຕ່ໃນທີ່ນີ້ສະພາບເສດຖະກິດບໍ່ປົກກະຕິ ມີເງິນເຟີ້ສູງ ແລະ ອັດຕາແລກປ່ຽນ, ລາຄາສິນຄ້າ ຫຼື ອື່ນໆບີບຮັດ ເພາະສະນັ້ນ ຈຶ່ງເຫັນວ່າມັນເກີດຄວາມບໍ່ສົມສ່ວນໃນຕົວເລກມະຫາພາກທີ່ບໍ່ສົມດູນກັນ ລາຍຮັບງົບປະມານເກີນແຜນ, ດຸນການຄ້າຕ່າງປະເທດເກີນດຸນ ແຕ່ດຸນສໍາລະສະສາງກັບຕ່າງປະເທດຊໍ້າພັດຂາດດຸນ ພວກເຮົາບໍ່ມີເງິນພຽງພໍຊໍາລະກັບຕ່າງປະເທດ ອັນອື່ນພວກເຮົາຖືວ່າເກີນໆ ສະນັ້ນໃນຈຸດນີ້ ຂ້າພະເຈົ້າເຫັນວ່າໃນປີ 2024 ຈະຕ້ອງໄດ້ສຸມໃສ່ ວ່າເຮັດແນວໃດຈະຕ້ອງມີກົນໄກມາດຕະການຂຸດຄົ້ນລາຍຮັບໃຫ້ສູງສຸດມີອັນໃດແດ່ ຈຶ່ງຂໍສະເໜີບາງອັນແນວນີ້:

1. ສະໜັບສະໜູນທັດສະນະຂອງກະຊວງການເງິນ ປັບຄືນອາກອນມູນຄ່າເພີ່ມ ຈາກ 7% ມາເປັນ 10% ຄືເກົ່າ ເມື່ອກ່ອນໄດ້ປະຕິບັດແລ້ວ ເພື່ອປ່ຽນແທນລາຍຮັບຈາກພາສີອາກອນນຳເຂົ້າໃນເວລາປະຕິບັດ CEPT-AFTA ໄດ້ມີການວິເຄາະແລ້ວເອົາ 9% ຫຼື 11% ສຸດທ້າຍມາເອົາ 10% ແລະ ໄດ້ຈັດຕັ້ງປະຕິບັດໃນໄລຍະໜຶ່ງຜ່ານມາ ຕໍ່ມາວັນທີ 1 ເດືອນມັງກອນ 2022 ໄດ້ປ່ຽນແທນຈາກ 10% ມາເປັນ 7% ເວລານັ້ນສະພາບເສດຖະກິດຍັງປົກກະຕິ ຖືວ່າມີເຫດຜົນເພື່ອປັບ ແລະ ຊຸກຍູ້ດຶງດູດການລົງທຶນ ແລະ ປັບຫຼຸດອາກອນ, ອາກອນຊົມໃຊ້ ແລະ ອື່ນໆຫຼາຍໆອັນ ແຕ່ມາຮອດສະພາບທຸກມື້ນີ້ ມັນບໍ່ອະນຸຍາດຄືແນວນັ້ນແລ້ວ ເຫັນວ່າ ຄວນຫັນກັບໄປໃຊ້ຄືນ 10% ຄືຜ່ານມາ. ຢູ່ປະເທດສີລັງກາອາກອນມູນຄ່າເພີ່ມນີ້ໄດ້ເພີ່ມຈາກ 12% ເປັນ 15% ເພື່ອແກ້ໄຂວິກິດຂອງເຂົາເຈົ້າ ສີລັງກາ ປະກາດຫຼຸດຈຳກັດການນຳເຂົ້າ 300 ລາຍການສິນຄ້າ ເພື່ອບໍ່ໃຫ້ເງິນຕາຂອງເຂົາເຈົ້າຫຼັ່ງໄຫຼອອກຕ່າງປະເທດ ດ້ວຍມາດຕະການຕ່າງໆ ມາດຕະການພາສີ ແລະ ທີ່ບໍ່ແມ່ນພາສີ ຫຼືອື່ນໆ ໃນນີ້, ຕາມການປະເມີນການຄິດໄລ່ ຖ້າເຮົາກັບຄືນໄປໃຊ້ 10% ນີ້ ເຮົາຈະມີເງິນເຂົ້າມາທົດແທນປະມານ 300 ຕື້ຕໍ່ປີ ມັນຖືວ່າແມ່ນ 30% ຂອງລາຍຮັບອາກອນທັງໝົດຢູ່ປະເທດເຮົາ ມັນເປັນກ້ອນເງິນທີ່ມະຫາສານ ສະນັ້ນ, ຄວນທີ່ຈະຊ່ວຍກັນທັງພາກລັດ ແລະ ພາກຜູ້ປະກອບການ ເພື່ອສະໜັບສະໜູນໃນສ່ວນນີ້.

2. ຂ້າພະເຈົ້າຂໍສະເໜີຕື່ມວ່າ ການຈັດຕັ້ງປະຕິບັດບັນດາກົດໝາຍ ກ່ຽວກັບການຈັດຕັ້ງປະຕິບັດພັນທະຕ່າງໆນີ້ ຖ້າບໍ່ຈຳເປັນແທ້ ສະເໜີຕໍ່ລັດຖະບານ ບໍ່ຄວນພິຈາລະນາຜ່ອນຜັນ ບາງກໍລະນີທີ່ບໍ່ຈຳເປັນ ແລະ ໄດ້ມີການສະເໜີຕໍ່ສະພາແຫ່ງຊາດດ້ວຍຂໍຍົກເວັ້ນ, ຂໍຫຼຸດຜ່ອນ ບໍ່ປະຕິບັດບາງມາດຕາຂອງກົດໝາຍ ເພື່ອນະໂຍບາຍຕ່າງໆ ອັນນີ້ມັນຈະເປັນການສູນເສຍລາຍຮັບ ແລະ ເປັນການບໍ່ເຄົາລົບກົດໝາຍທີ່ພວກເຮົາມີ ຕົວຢ່າງ ລັດຖະບັນຍັດຂອງປະທານປະເທດ ຫາກໍອອກເດືອນສິງຫາ 2023 ກ່ຽວກັບອັດຕາພາສີຂາອອກ ມີຜົນສັກສິດຕັ້ງແຕ່ທີ 1 ຕຸລາ 2023 ວັນທີ 6 ຕຸລາ 2023 ມີບໍລິສັດສະເໜີແລ້ວ ຂໍຍົກເວັ້ນພາສີສົ່ງອອກ ແລະ ເສຍຄ່າຊັບພະຍາກອນ ຂໍເສຍຄືເກົ່າຍ້ອນອ້າງເຫດຜົນວ່າມີສັນຍາກັບຕ່າງປະເທດແລ້ວ ແນ່ນອນວ່າ ສະເໜີຕໍ່ລັດຖະບານທົບທວນຄືນກ່ຽວກັບການສະເໜີດັ່ງກ່າວ ຖ້າອະນຸຍາດ ຖ້າຜ່ອນຜັນໃຫ້ໂຄງການນີ້, ບໍລິສັດນີ້ ກໍຈະມີບໍລິສັດທີ 2 ແລະ 3 ຕໍ່ໆໄປ ແລະ ມີການສູນເສຍລາຍຮັບສ່ວນນີ້ ແລະ ບໍ່ເປັນການເຄົາລົບຕໍ່ລັດຖະບັນຍັດປະທານປະເທດ ທີ່ເຊັນເດືອນສິງຫາ ນໍ້າມຶກບໍ່ທັນແຫ້ງ ກໍມີການສະເໜີແລ້ວເພື່ອປ່ຽນແປງ ເພື່ອຫຼຸດຜ່ອນດັ່ງກ່າວ.

3. ສຸມທຸກພາກສ່ວນເພື່ອກວດກາຄືນບັນດາຫົວໜ່ວຍລາຍຮັບ ແຕ່ລະທ້ອງຖິ່ນມີຈັກຫົວໜ່ວຍແທ້ ຂ້າພະເຈົ້າເຫັນວ່າ ຖ້າກວດກາຄືນໝົດຈະເຫັນວ່າບາງຫົວໜ່ວຍບໍ່ທັນສາມາດເກັບໄດ້ ຍັງເທົ່າໃດ ມີຈັກຫົວໜ່ວຍ ຢູ່ໃນຂົງເຂດອາກອນເທົ່າໃດ, ພາສີເທົ່າໃດ, ຊັບສິນເທົ່າໃດ ຄ່າທຳນຽມຕ່າງໆຍັງເທົ່າໃດ ໃຫ້ມີການເຂົ້າຮ່ວມຂອງຫຼາຍພາກສ່ວນ ບໍ່ຖິ້ມໃສ່ກັນ ເພື່ອຈະຄົ້ນຄວ້າບັນຫານີ້ ແລ້ວເຮົາຈະເຫັນວ່າມີຫຼາຍປານໃດແທ້ ທີ່ເຮົາຍັງເກັບບໍ່ທັນໄດ້ ເພື່ອເອົາເຂົ້າມາຢູ່ໃນງົບປະມານດັ່ງກ່າວ ຖ້າວ່າເຮົາເຮັດໄດ້ຄືແນວນັ້ນພວກເຮົາຈະສາມາດເກັບໄດ້ເຖິງ 17%-18% ຕໍ່ GDP ເຮົາຈະມີເງິນໂຕນີ້ຊ່ວຍໜູນ; ເລຂາພັກບ້ານ ດຽວນີ້ມີແຕ່ 350.000 ກີບຕໍ່ເດືອນ, ແກ້ໄຂໜີ້ສິນ, ກອງທຶນປະກັນສຸຂະພາບ ແລະ ອື່ນໆທີ່ຕາມມາ.

**ຮຽບຮຽງໂດຍ:**
**ກົງໃຈ ແສງອຳພັນ**

# ສະພາປະຊາຊົນແຂວງຫຼວງນໍ້າທາ ເປີດກອງປະຊຸມຮ່ວມກັບອົງການການປົກຄອງແຂວງ

(ສພຊ) ເພື່ອປຶກສາຫາລື ແລະ ເປັນເອກະພາບກ່ຽວກັບເນື້ອໃນທີ່ຈະນຳເຂົ້າພິຈາລະນາ, ຮັບຮອງເອົາໃນກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາປະຊາຊົນແຂວງຊຸດທີ II ທີ່ຈະໄຂຂຶ້ນໃນຕໍ່ໜ້ານີ້; ສະພາປະຊາຊົນແຂວງຫຼວງນໍ້າທາ ໄດ້ເປີດກອງປະຊຸມຮ່ວມກັບອົງການປົກຄອງແຂວງຫຼວງນໍ້າທາ ເມື່ອເດືອນຕຸລາຜ່ານມາ ຢູ່ທີ່ຫ້ອງປະຊຸມຂອງສະພາປະຊາຊົນແຂວງຫຼວງນໍ້າທາ ໂດຍການເປັນປະທານຮ່ວມຂອງທ່ານ ຄຳຟອງ ອິນມານີ ປະທານສະພາປະຊາຊົນແຂວງ ແລະ ທ່ານ ອ່ອນຈັນ ຄຳພາວົງ ຮອງເຈົ້າແຂວງຫຼວງນໍ້າທາ, ມີຮອງຫົວໜ້າຫ້ອງວ່າການແຂວງ ພ້ອມດ້ວຍພະແນກການທີ່ກ່ຽວຂ້ອງເຂົ້າຮ່ວມທັງໝົດ 31 ທ່ານ ຍິງ 7 ທ່ານ.

ໃນກອງປະຊຸມ, ທ່ານ ຄຳຟອງ ອິນມານີ ໄດ້ກ່າວເປີດກອງປະຊຸມຢ່າງເປັນທາງການ ພ້ອມທັງສະເໜີຄວາມເປັນເອກະພາບກ່ຽວກັບງົບປະມານ, ເວລາ, ສະຖານທີ່ ແລະ ບັນດາເນື້ອໃນທີ່ຈະນຳເຂົ້າພິຈາລະນາ, ຮັບຮອງໃນກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາປະຊາຊົນແຂວງ ເຊິ່ງປະກອບມີບົດລາຍງານໂດຍສັງເຂບຂອງເຈົ້າແຂວງ ກ່ຽວກັບບັນຫາພົ້ນເດັ່ນ ໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດປະຈຳປີ 2023 ແລະ ທິດທາງແຜນການປະຈຳປີ 2024 ຂອງແຂວງຫຼວງນໍ້າທາ; ບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ປະຈຳປີ 2023 ແລະ ທິດທາງແຜນການ ປະຈຳປີ 2024 ຂອງອົງການປົກຄອງແຂວງ; ບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດແຜນງົບປະມານປະຈຳປີ 2023 ແລະ ທິດທາງແຜນການປະຈຳປີ 2024 ຂອງອົງການປົກຄອງແຂວງ; ບົດລາຍງານຂອງອົງການກວດກາລັດແຂວງ ກ່ຽວກັບການເຄື່ອນໄຫວວຽກງານປະຈຳປີ 2023, ແຜນການປະຈຳປີ 2024 ແລະ ຜົນການຕິດຕາມກວດກາຕາມຜົນຂອງການກວດສອບ ປີ



2021; ບົດລາຍງານຂອງອົງການກວດສອບປະຈຳພາກເໜືອ ກ່ຽວກັບການເຄື່ອນໄຫວວຽກງານ ປະຈຳປີ 2023, ແຜນການປະຈຳປີ 2024 ແລະ ຜົນການກວດສອບບົດສະຫຼຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານຂອງແຂວງຫຼວງນໍ້າທາ ປະຈຳປີ 2022;ບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານປະຈຳປີ 2023 ແລະ ແຜນການປະຈຳປີ 2024 ຂອງອົງການໄອຍະການປະຊາຊົນແຂວງ; ບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈຳປີ 2023 ແລະ ແຜນການປະຈຳປີ 2024 ຂອງສານປະຊາຊົນແຂວງ;ບົດລາຍງານກ່ຽວກັບການເຄື່ອນໄຫວວຽກງານ ປະຈຳປີ 2023 ແລະ ແຜນການປະຈຳປີ 2024 ຂອງສະພາປະຊາຊົນແຂວງ; ບົດລາຍງານກ່ຽວກັບການເຄື່ອນໄຫວວຽກງານ ປະຈຳປີ 2023 ແລະ ແຜນການ ປະຈຳປີ 2024 ຂອງສະພາປະຊາຊົນແຂວງ; ບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດສອງວາລະແຫ່ງຊາດ ປີ 2021-2023 ຂອງແຂວງຫຼວງນໍ້າທາ; ຮ່າງຂໍ້ຕົກລົງຂອງເຈົ້າແຂວງວ່າດ້ວຍການຄຸ້ມຄອງການຈັດງານ ແລະ ງານບຸນປະເພນີຕ່າງໆຢູ່ບັນດາເມືອງ; ບົດປະກອບຄຳເຫັນຂອງອົງການແນວລາວສ້າງຊາດແຂວງ ກ່ຽວກັບການປະຕິບັດໜ້າທີ່ຂອງສະພາປະຊາຊົນແຂວງ.

ພ້ອມນັ້ນ, ບັນດາທ່ານທີ່ເຂົ້າຮ່ວມກອງປະຊຸມ ໄດ້ພ້ອມກັນປະກອບຄຳເຫັນແລກປ່ຽນເພື່ອຄວາມເປັນເອກະພາບກັນ ເປັນຕົ້ນແມ່ນກອງປະຊຸມໄດ້ເຫັນດີໂດຍພື້ນຖານດຳເນີນກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາປະຊາຊົນແຂວງ ຊຸດທີ II ພ້ອມທັງມອບໃຫ້ບັນດາພາກສ່ວນທີ່ມີເນື້ອໃນທີ່ຈະນຳເຂົ້າພິຈາລະນາ, ຮັບຮອງເອົາໃນກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາປະຊາຊົນແຂວງ ຊຸດທີ II ເອົາໃຈໃສ່ກະກຽມ ແລະ ສົ່ງຮ່າງບົດລາຍງານຕາມຄວາມຮັບຜິດຊອບຂອງຕົນ ໃຫ້ສະພາປະຊາຊົນແຂວງຊ້າສຸດບໍ່ໃຫ້ກາຍວັນທີ 12 ທັນວາ 2023.

ຕອນທ້າຍປະທານກອງປະຊຸມ ໄດ້ເນັ້ນໜັກໃຫ້ບັນດາພາກສ່ວນກ່ຽວຂ້ອງເອົາໃຈໃສ່ປະຕິບັດໜ້າທີ່ຂອງຕົນດ້ວຍຄວາມຮັບຜິດຊອບສູງ ເປັນຕົ້ນແມ່ນຄະນະປະສານງານຂອງສະພາປະຊາຊົນແຂວງ ແລະ ຄະນະປະສານງານຂອງຫ້ອງວ່າການແຂວງ ຕ້ອງເປັນເຈົ້າການໃນການພົວພັນປະສານງານລະຫວ່າງສອງອົງການ ໃຫ້ມີຄວາມສອດຄ່ອງ, ກົມກຽວຫຼາຍຂຶ້ນ ເພື່ອເຮັດໃຫ້ການກະກຽມ ແລະ ດຳເນີນກອງປະຊຸມ ມີຄວາມສະດວກວ່ອງໄວ, ທັນເວລາ; ມອບໃຫ້ຫ້ອງວ່າການແຂວງ ເປັນເຈົ້າການນຳພາ-ຊີ້ນຳບັນດາພະແນກການທີ່ມີແຜນການສ້າງ ແລະ ປັບປຸງນິຕິກຳຕາມທີ່ກຳນົດໄວ້ໃນ ມະຕິກອງປະຊຸມຄັ້ງປະຖົມມະລຶກຂອງສະພາປະຊາຊົນແຂວງ ຊຸດທີ II ສະບັບເລກທີ 08/ສພຂ, ລົງວັນທີ 6 ກໍລະກົດ 2021 ເພື່ອຄົ້ນຄວ້າຄືນບັນດາຫົວຂໍ້ນິຕິກຳທີ່ເຫັນວ່າບໍ່ມີຄວາມຈຳເປັນ ແລະ ບໍ່ມີຄວາມພ້ອມ ເພື່ອສະເໜີຕໍ່ຄະນະປະຈຳສະພາປະຊາຊົນແຂວງ ພິຈາລະນາດັດແກ້ຕາມກົດໝາຍ ແນໃສ່ກະກຽມຄວາມພ້ອມດ້ານຕ່າງໆໃຫ້ແກ່ການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາປະຊາຊົນແຂວງເທື່ອທີ II ເພື່ອຮັບປະກັນໃຫ້ໄດ້ດຳເນີນຕາມກຳນົດເວລາ.

**(ນາງ ອຳພອນ ສີປະເສີດ)**

# ສະມາຊິກສະພາແຫ່ງຊາດ ເຂດ 7 ແຂວງໄຊຍະບູລີ ເຄື່ອນໄຫວຊຸກຍູ້ວຽກງານຢູ່ເມືອງທົ່ງມີໄຊ



(ສພຊ) ເມື່ອເດືອນຕຸລາຜ່ານມາ ຢູ່ສະໂມສອນເມືອງທົ່ງມີໄຊ ແຂວງໄຊຍະບູລີ, ທ່ານ ບຸນລ້ອມ ຊິມສີທາປັນຍາ ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 7, ຮອງປະທານສະມາຊິກສະພາປະຊາຊົນແຂວງໄຊຍະບູລີ ໄດ້ເຄື່ອນໄຫວຊຸກຍູ້ວຽກງານຢູ່ເມືອງທົ່ງມີໄຊ ໂດຍການຕ້ອນຮັບຂອງທ່ານ ກາວີ ເກດຄົມລີ ເຈົ້າເມືອງທົ່ງມີໄຊ ແຂວງໄຊຍະບູລີ; ມີບັນດາທ່ານຄະນະປະຈຳ, ກຳມະການພັກເມືອງ, ສະມາຊິກສະພາປະຊາຊົນແຂວງປະຈຳເມືອງ, ຫົວໜ້າ-ຮອງຫົວໜ້າຫ້ອງການ, ອົງການ, ກົມກອງເຂົ້າຮ່ວມ.

ທ່ານເຈົ້າເມືອງ ຕາງໜ້າອົງການປົກຄອງເມືອງ ໄດ້ກ່າວຕ້ອນຮັບ ພ້ອມທັງລາຍງານສະພາບໂດຍສັງເຂບ ເຊິ່ງທ່ານໄດ້ໃຫ້ຮູ້ວ່າ: ເມືອງທົ່ງມີໄຊ ມີເນື້ອທີ່ທັງໝົດ 895 ກິໂລຕາແມັດ, ປະກອບມີ 13 ບ້ານ, ມີ 165 ໜ່ວຍ, ມີ 2.060 ຄອບຄົວ, ມີພົນລະເມືອງ 9.672 ຄົນ ຍິງ 4.862 ຄົນ, ເຜົ່າລາວ ກວມ 98,69%, ອາຊີບຕົ້ນຕໍຂອງປະຊາຊົນແມ່ນເຮັດນາປູກເຂົ້າຕິດພັນກັບການປູກພືດ ແລະ ລ້ຽງສັດ. ຕະຫຼອດໄລຍະຜ່ານມາ ເມືອງທົ່ງມີໄຊ ໄດ້ຖືເອົາວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບກາຍເປັນຂອງທົ່ວປວງຊົນຮອບດ້ານ ເອົາໃຈໃສ່ຊີ້ນຳກຳລັງປະກອບອາວຸດເຄື່ອນໄຫວໃນຂອບເຂດຮັບຜິດຊອບຢ່າງເປັນລະບົບຕໍ່ເນື່ອງ, ສຸມໃສ່ຊຸກຍູ້ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບຢູ່ຮາກຖານໃຫ້ມີຄວາມໜັກແໜ້ນ-ເຂັ້ມແຂງ, ປາກົດການຫຍໍ້ທໍ້ຕ່າງໆທີ່ເກີດຂຶ້ນໄດ້ຮັບການແກ້ໄຂຢ່າງຖືກຕ້ອງ ແລະ ທັນເວລາ ມີຄວາມສະຫງົບໂດຍພື້ນຖານ; ວຽກງານອົງການຈັດຕັ້ງມະຫາຊົນ: ໄດ້ເອົາໃຈໃສ່ເຄື່ອນໄຫວຕາມສິດ, ໜ້າທີ່ ແລະ ພາລະບົດບາດຂອງຕົນຢ່າງຕັ້ງໜ້າ ເປັນຕົ້ນແມ່ນເອົາໃຈໃສ່ຈັດຕັ້ງປະຕິບັດຊຸກຍູ້ຂະບວນການແຂ່ງຂັນ 4 ບຸກຂອງຊາວໜຸ່ມ, ຂະບວນການແຂ່ງຂັນ 3 ດີ ຂອງສະຫະພັນແມ່ຍິງ ແລະ ຂະບວນການຈັດຕັ້ງປະຕິບັດຂໍ້ແຂ່ງຂັນ 5 ເປັນເຈົ້າຂອງກຳມະບານ ພ້ອມທັງເປີດກອງປະຊຸມໃຫຍ່ຂອງບັນດາຮາກຖານສຳເລັດໃນທົ່ວເມືອງ. ຈັດເກັບລາຍຮັບເຂົ້າງົບປະມານໃຫ້ລະອຽດ, ຖີ່ຖ້ວນ ຮັບປະກັນບໍ່ໃຫ້ມີການຮົ່ວໄຫຼ ໄລຍະຜ່ານມາໄດ້ຮັບຕົວເລກມອບເໜີາ 2.013,64 ລ້ານກີບ ປະຕິບັດໄດ້ 1.806,54 ລ້ານກີບ, ເທົ່າກັບ 89,72% ຂອງແຜນການປີ, ລາຍຈ່າຍປະຕິບັດໄດ້ 1.654,46 ລ້ານກີບ, ປະຕິບັດໄດ້ 82,16% ຂອງແຜນການປີ. ກະກຽມຂຶ້ນແຜນໂຄງການລົງທຶນຂອງລັດເພື່ອນຳສະເໜີຕໍ່ສະພາແຫ່ງຊາດພິຈາລະນາບັນຈຸເຂົ້າແຜນປີ, ການຜະລິດເປັນສິນຄ້າຂອງປະຊາຊົນ: ເອົາໃຈໃສ່ຊຸກຍູ້ສົ່ງເສີມໃຫ້ປະຊາຊົນຜະລິດເປັນສິນຄ້າໃຫ້ຫຼາຍໂດຍເລັ່ງໃສ່ການປູກຝັງ ແລະ ລ້ຽງສັດປະເພດຕ່າງໆ ເພື່ອສ້າງລາຍຮັບໃຫ້ແກ່ຄອບຄົວ; ຕິດຕາມ, ຊຸກຍູ້ການເກັບກູ້ມັນຕົ້ນປີ 2022 ເນື້ອທີ່ 1.368,40 ເຮັກຕາ, ສຳເລັດແລ້ວ 100%, ຜົນຜະລິດ 35.578,4 ໂຕນ, ຊຸກຍູ້ການເກັບກູ້ເຂົ້ານາແຊງເນື້ອທີ່ 10,89 ເຮັກຕາ ສຳເລັດແລ້ວ 100%, ຜົນຜະລິດ 38,11 ໂຕນ, ຈາກນັ້ນ ໄດ້ເອົາໃຈໃສ່ຊຸກຍູ້ສົ່ງເສີມປູກພືດລະດູແລ້ງເນື້ອທີ່ 230 ເຮັກຕາ ປະຕິບັດໄດ້ 201,49 ເຮັກຕາ ເກັບກູ້ສຳເລັດແລ້ວ 100%, ໃນນີ້ສາລີຫວານ, ຜັກກິນໃບ, ໝາກແຕງ,ຜັກບົ່ວ, ຜັກທຽມ, ຜັກກະລຳປີ ແລະ ອື່ນໆ, ຊຸກຍູ້ການປູກ ແລະ ບົວລະບັດພືດລະດູຝົນ ເຊັ່ນ: ມັນຕົ້ນ ເນື້ອທີ່ 2.856 ເຮັກຕາ, ຖົ່ວແດງ ເນື້ອທີ່ 34,95 ເຮັກຕາ, ຖົ່ວດິນ ເນື້ອທີ່ 24,99 ເຮັກຕາ, ສາລີແຂງເນື້ອທີ່ 37,85 ເຮັກຕາ, ໝາກເດືອຍ ເນື້ອທີ່ 1,3 ເຮັກຕາ, ຕິດຕາມຊຸກຍູ້ການປູກເຂົ້ານາປີໃນເນື້ອທີ່ແຜນການ 2.052 ເຮັກຕາ, ເນື້ອທີ່ປູກຕົວຈິງ 2.031,28 ເຮັກຕາ; ປັດຈຸບັນເຫັນວ່າເຂົ້ານາເປັນພະຍາດ ແລະ ແມງໄມ້ຄື: ເພ້ຍຈັກຈັ່ນ ຈຳນວນ 13 ບ້ານ, ມີຈຳນວນ 255 ຄອບຄົວ, ເນື້ອທີ່ຖືກຜົນກະທົບ 114,14 ເຮັກຕາ, ເນື້ອທີ່ຖືກເສຍຫາຍ 56,02 ເຮັກຕາ; ທົ່ວເມືອງມີສັດລ້ຽງທັງໝົດ 169.869 ໂຕ ໃນນີ້, ຄວາຍ 8.500 ໂຕ, ງົວ 7.450 ໂຕ, ໝູ 15.639 ໂຕ, ແບ້ 123 ໂຕ, ສັດປີກ 138.157 ໂຕ, ຊ້າງ 73 ໂຕ. ຈາກນັ້ນ, ໄດ້ລົງສັກຢາປ້ອງກັນພະຍາດເຕົ້າໂຮມເລືອດງົວ-ຄວາຍ, ປິ່ນປົວສັດເປັນພະຍາດ ແລະ ສັດເຈັບງົວ-ຄວາຍ, ສັດປີກ. ເຄື່ອນຍ້າຍສິນຄ້າອອກຕ່າງເມືອງລວມມູນຄ່າ 14.742 ລ້ານກີບ ປັບປຸງຕາໜ່າງເສັ້ນທາງຢູ່ພາຍໃນເມືອງ ເປັນຕົ້ນແມ່ນເສັ້ນທາງລະຫວ່າງບ້ານຫາເມືອງ ໄດ້ຮັບການປັບປຸງໃຫ້ດີຂຶ້ນນຳການຈັດຕັ້ງປະຕິບັດຄຸ້ມຄອງ, ການປົກປັກຮັກສາ, ການຟື້ນຟູບູລະນະຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ຊີວະນາໆພັນ, ປົກປັກຮັກສາແຫຼ່ງນ້ຳ, ປົກປັກຮັກສາຄຸ້ມຄອງປ່າ ແລະ ຟື້ນຟູປ່າໄມ້, ວຽກງານສຶກສາເອົາໃຈໃສ່ຍົກສູງຄຸນນະພາບຂອງວຽກງານການສຶກສາດ້ວຍການປັບປຸງຄຸນນະພາບການຮຽນ-ການສອນຂອງຄູອາຈານ ແລະ ນັກຮຽນຢ່າງໃກ້ຊິດ ແລະຕໍ່ເນື່ອງເພື່ອເຮັດໃຫ້ຄຸນນະພາບການສຶກສາ ນັບມື້ນັບດີຂຶ້ນ, ວຽກງານສາທາລະນະສຸກເອົາໃຈໃສ່ປັບປຸງຍົກລະດັບເຄື່ອງມືຮັບໃຊ້ດ້ານວິຊາການ, ປັບປຸງຂອດບໍລິການໃຫ້ສະດວກວ່ອງໄວ ນັບທັງປັບປຸງສະຖານທີ່ບໍລິການຄົນເຈັບໄປຕາມມາດຖານ 5 ດີ 1 ພໍໃຈ ໃຫ້ດີຂຶ້ນເທື່ອລະກ້າວ. ນອກນີ້ ໄດ້ເອົາໃຈໃສ່ປ້ອງກັນ, ຕ້ານ ແລະ ສະກັດກັ້ນການແຜ່ລະບາດຂອງພະຍາດ ຕາມລະດູການ ໂດຍສະເພາະແມ່ນພະຍາດໄຂ້ຍຸງລາຍ, ລົງເຄື່ອນໄຫວສັກຢາກັນພະຍາດ ໃຫ້ແກ່ແມ່ຍິງ ແລະ ເດັກນ້ອຍຕາມເກນອາຍຸເປົ້າໝາຍ ແລະ ກໍໄດ້ຖືເອົາການປ້ອງກັນເປັນບັນຫາສຳຄັນ, ວຽກງານຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ: ເປັນວຽກງານໜຶ່ງທີ່ເປັນກະບອກສຽງຂອງພັກ ໃນການໂຄສະນາເຜີຍແຜ່, ຊຸກຍູ້ ແລະ ຜັນຂະຫຍາຍແນວທາງຂອງພັກ, ລະບຽບກົດໝາຍຂອງລັດ ໃນໄລຍະຜ່ານມາ ກໍໄດ້ເຄື່ອນໄຫວເພື່ອຕອບສະໜອງຂໍ້ມູນຂ່າວສານໃຫ້ສັງຄົມຮັບຮູ້ຢ່າງທົ່ວເຖິງ, ຕິດຕາມກວດກາຮ້ານບັນເທີງພາຍໃນເມືອງ ໃຫ້ເຄື່ອນໄຫວຖືກຕ້ອງຕາມລະບຽບການ, ແຕ່ລະບ້ານກໍມີການກະຈາຍຂ່າວໃຫ້ພໍ່ແມ່ປະຊາຊົນຮັບຮູ້ຢ່າງທົ່ວເຖິງ.



ຈາກນັ້ນ, ຕາງໜ້າໃຫ້ຂົງເຂດເສດຖະກິດ, ແຜນການ ແລະ ການເງິນ, ຂົງເຂດວັດທະນະທຳ-ສັງຄົມ, ຂົງເຂດຍຸຕິທຳ ແລະ ປ້ອງກັນຊາດ ໄດ້ຜັດປ່ຽນກັນຂຶ້ນປະກອບຄຳຄິດຄຳເຫັນຕາມຄຳຖາມເຈາະຈີ້ມຂອງທ່ານປະທານ.

ໃນຕອນທ້າຍ, ຍັງໄດ້ຮັບຟັງການມີຄຳເຫັນຊີ້ນຳວຽກງານດ້ານຕ່າງໆຢູ່ພາຍໃນເມືອງ ຈາກທ່ານ ບຸນລ້ອມ ຊິມສີທາປັນຍາ ຕື່ມອີກ.

**(ອິນທີ ຊຽງສີຟ້າ)**

# ກຳມະບານຮາກຖານ ສພຂ ຫົວພັນ ສຳເລັດການປະເມີນ 5 ເປັນເຈົ້າ ປະຈຳປີ 2023




(ສພຊ) ກຳມະບານຮາກຖານສະພາປະຊາຊົນແຂວງຫົວພັນ ໄດ້ຈັດກອງປະຊຸມປະເມີນຜົນການຈັດຕັ້ງປະຕິບັດເນື້ອໃນຂໍ້ແຂ່ງຂັນ 5 ເປັນເຈົ້າ ປະຈຳປີ 2023 ຢູ່ທີ່ຫ້ອງປະຊຸມສະພາປະຊາຊົນແຂວງຫົວພັນ ເມື່ອວັນທີ 3 ພະຈິກ 2023 ໂດຍການເປັນປະທານຂອງສະຫາຍ ສຸກມີໄຊ ສິງບຸນເຮືອງ ຄະນະບໍລິຫານງານສະຫະພັນກຳມະບານແຂວງ, ປະທານກຳມະບານຮາກຖານສະພາປະຊາຊົນແຂວງ; ເຂົ້າຮ່ວມໂດຍສະຫາຍ ແທງ ວິໄລພອນ ຄະນະໜ່ວຍພັກສະພາປະຊາຊົນແຂວງ ພ້ອມດ້ວຍບັນດາສະມາຊິກກຳມະບານພາຍໃນຮາກຖານສະພາປະຊາຊົນແຂວງເຂົ້າຮ່ວມ.

ໃນວາລະດຳເນີນກອງປະຊຸມ ໄດ້ເຊື່ອມຊຶມເນື້ອໃນ 5 ເປັນເຈົ້າ ແລະ ຜ່ານຮ່າງບົດສະຫຼຸບການຈັດຕັ້ງປະຕິບັດເນື້ອໃນຂໍ້ແຂ່ງຂັນ 5 ເປັນເຈົ້າ ປະຈຳປີ 2023 ແລະ ທິດທາງແຜນການ ປີ 2024 ຂອງກຳມະບານຮາກຖານສະພາປະຊາຊົນແຂວງ ຈາກສະຫາຍ ນາງ ສີພຸດ ພຸດທະວົງ ຮອງປະທານກຳມະບານຮາກຖານ ເຊິ່ງໄດ້ຍົກໃຫ້ເຫັນດ້ານດີຜົນງານ ແລະ ດ້ານອ່ອນຂໍ້ຄົງຄ້າງ. ຈາກນັ້ນ, ບັນດາສະຫາຍສະມາຊິກໄດ້ພ້ອມກັນປະກອບຄຳຄິດເຫັນໃສ່ຮ່າງບົດສະຫຼຸບ ເພື່ອໃຫ້ມີເນື້ອໃນຄົບຖ້ວນສົມບູນ ແລະ ສາມາດຈັດຕັ້ງປະຕິບັດໄດ້; ພ້ອມກັນນີ້, ສະມາຊິກກຳມະບານທຸກສະຫາຍ ໄດ້ຜ່ານໃບປະເມີນສະມາຊິກກຳມະບານ 5 ເປັນເຈົ້າ ຂອງຕົນເອງ ພ້ອມທັງໃຫ້ຄະແນນຕົນເອງ ແລະ ໝູ່ຄະນະ ຖືກຕ້ອງຕາມກົດລະບຽບຂອງກຳມະບານລາວວາງອອກ; ພາຍໃນກຳມະບານຮາກຖານສະພາປະຊາຊົນແຂວງ ມີສະມາຊິກກຳມະບານທັງໝົດ 51 ສະຫາຍ ຍິງ 19 ສະຫາຍ ໃນນີ້, ປະເມີນຕົວຈິງ ມີ 48 ສະຫາຍ ຍິງ 19 ສະຫາຍ, ຜ່ານການປະເມີນຕີລາຄາໃຫ້ຄະແນນຕົວຈິງ ແມ່ນສາມາດບັນລຸຕາມຄາດໝາຍວາງໄວ້ ສະເລ່ຍຜົນການປະເມີນຈັດຢູ່ໃນລະດັບ 85% ຂຶ້ນໄປ, ສ່ວນປະເພດກາງ, ອ່ອນ ແມ່ນບໍ່ມີ.

ອີງຕາມມາດຖານ ແລະ ເງື່ອນໄຂ ເຫັນວ່າສາມາດສະເໜີໃຫ້ຂັ້ນເທິງພິຈາລະນາຮັບຮອງເອົາກຳມະບານຮາກຖານສະພາປະຊາຊົນແຂວງຫົວພັນເປັນກຳມະບານຮາກຖານ 5 ເປັນເຈົ້າ ປະຈຳປີ 2023.

ຕອນທ້າຍກອງປະຊຸມ, ຍັງໄດ້ຮັບຟັງການໂອ້ລົມຂອງສະຫາຍ ແທງ ວິໄລພອນ ເຊິ່ງສະຫາຍໄດ້ຍ້ອງຍໍຊົມເຊີຍຕໍ່ຜົນງານການເຄື່ອນໄຫວວຽກງານກຳມະບານຮາກຖານ ໃນໄລຍະ 1 ປີຜ່ານມາ. ພ້ອມນີ້, ສະຫາຍຍັງໄດ້ເນັ້ນໜັກໃຫ້ຄະນະກຳມະບານຮາກຖານ ເອົາໃຈໃສ່ສຶກສາອົບຮົມການເມືອງແນວຄິດໃຫ້ເປັນລະບົບຕໍ່ເນື່ອງດ້ວຍຫຼາຍຮູບການ, ເພື່ອປັບປຸງແບບແຜນການນຳພາ-ຊີ້ນຳ ແລະ ຮຽກຮ້ອງໃຫ້ສະມາຊິກກຳມະບານທີ່ເປັນພະນັກງານຫຼັກແຫຼ່ງນຳພາ-ຄຸ້ມຄອງຢູ່ແຕ່ລະຂະແໜງ ຕ້ອງເປັນແບບຢ່າງທີ່ດີເພື່ອໃຫ້ຜູ້ອື່ນໄດ້ຮຽນຮູ້ນຳຄືດັ່ງຄຳເວົ້າທີ່ວ່າ ຄວາມເປັນແບບຢ່າງທີ່ດີ ແມ່ນການນຳພາທີ່ດີ ທຸກສະຫາຍຕ້ອງໄດ້ເອົາໃຈໃສ່ປະຕິບັດຕາມຫຼັກການ, ລະບຽບການຂອງກຳມະບານລາວວາງອອກຢ່າງເຂັ້ມງວດ, ຮັກສາມູນເຊື້ອຄວາມສາມັກຄີ, ຍົກສູງຄວາມຮູ້, ຄວາມສາມາດ, ກຳແໜ້ນແນວທາງນະໂຍບາຍຂອງພັກ, ລະບຽບກົດໝາຍຂອງລັດ, ລະບຽບຂອງກຳມະບານລາວວາງອອກ ປະຕິບັດຕາມຫຼັກການລວມສູນປະຊາທິປະໄຕ, ແບ່ງວຽກໃຫ້ບຸກຄົນຮັບຜິດຊອບຢ່າງຈະແຈ້ງ, ເປັນເຈົ້າການຈັດຕັ້ງປະຕິບັດເນື້ອໃນ 5 ເປັນເຈົ້າ ແລະ ຈັດຕັ້ງປະຕິບັດທິດທາງແຜນການຂອງກຳມະບານຮາກຖານວາງອອກ ໃຫ້ມີຜົນສຳເລັດຕາມຈຸດປະສົງ ແລະ ແຜນການວາງໄວ້.

**(ເອີນ ແກ້ວບຸນມີ)**




# ກົດໝາຍ ວ່າດ້ວຍຄວາມປອດໄພຂອງເຂື່ອນ

ຕໍ່ຈາກສະບັບກ່ອນ

ອົງການຄຸ້ມຄອງວຽກງານຄວາມປອດໄພຂອງເຂື່ອນ ປະກອບດ້ວຍ:

1. ກະຊວງພະລັງງານ ແລະ ບໍ່ແຮ່;
2. ພະແນກພະລັງງານ ແລະ ບໍ່ແຮ່ຂັ້ນແຂວງ;
3. ຫ້ອງການພະລັງງານ ແລະ ບໍ່ແຮ່ຂັ້ນເມືອງ.

ໃນກໍລະນີຈຳເປັນ ອາດສ້າງຕັ້ງຄະນະກຳມະການສະເພາະກິດກ່ຽວກັບຄວາມປອດໄພຂອງເຂື່ອນຂັ້ນສູນກາງແລະຂັ້ນແຂວງຂຶ້ນກໍໄດ້.

**ມາດຕາ 61 ສິດ ແລະ ໜ້າທີ່ຂອງກະຊວງພະລັງງານ ແລະ ບໍ່ແຮ່**

ໃນການຄຸ້ມຄອງວຽກງານຄວາມປອດໄພຂອງເຂື່ອນໄຟຟ້າ ແລະ ເຂື່ອນຫາງແຮ່ ກະຊວງພະລັງງານ ແລະ ບໍ່ແຮ່ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຄົ້ນຄວ້າ ສ້າງ ຫຼື ປັບປຸງ ນະໂຍບາຍ, ແຜນຍຸດທະສາດ, ແຜນພັດທະນາ ແລະ ກົດໝາຍກ່ຽວກັບວຽກງານຄວາມປອດໄພຂອງເຂື່ອນ ແລ້ວນຳສະເໜີລັດຖະບານພິຈາລະນາ;
2. ຜັນຂະຫຍາຍນະໂຍບາຍ, ແຜນຍຸດທະສາດ, ແຜນພັດທະນາ ແລະ ກົດໝາຍກ່ຽວກັບຄວາມປອດໄພຂອງເຂື່ອນເປັນລະບຽບການ, ແຜນການ, ແຜນງານ, ໂຄງການ ແລະ ຈັດຕັ້ງປະຕິບັດ;
3. ໂຄສະນາ, ເຜີຍແຜ່ ແລະ ສຶກສາອົບຮົມ ນະໂຍບາຍ, ແຜນຍຸດທະສາດ, ແຜນພັດທະນາ ແລະ ກົດໝາຍ ກ່ຽວກັບຄວາມປອດໄພຂອງເຂື່ອນ;
4. ຊີ້ນຳ ແລະ ຕິດຕາມ ກວດກາ ການຈັດຕັ້ງປະຕິບັດກ່ຽວກັບຄວາມປອດໄພຂອງເຂື່ອນ ໃນຂອບເຂດທົ່ວປະເທດ;
5. ຮັບຮອງເອົາການແຕ່ງຕັ້ງຫົວໜ້າວິສະວະກອນ ຕາມການສະເໜີຂອງຜູ້ພັດທະນາເຂື່ອນ ສຳລັບເຂື່ອນຂະໜາດໃຫຍ່;
6. ຊີ້ນຳ ການສຳຫຼວດ ເກັບກຳຂໍ້ມູນ, ການຂຶ້ນສະຖິຕິກ່ຽວກັບຄວາມປອດໄພຂອງເຂື່ອນໃນຂອບເຂດທົ່ວປະເທດ ລວມທັງສ້າງຖານຂໍ້ມູນຄວາມປອດໄພຂອງເຂື່ອນ;
7. ຄົ້ນຄວ້າກ່ຽວກັບ ການຕໍ່ອາຍຸ, ການໂຈະ ຫຼື ການຖອນໃບອະນຸຍາດ ການດຳເນີນທຸລະກິດຂອງຜູ້ພັດທະນາເຂື່ອນຂະໜາດໃຫຍ່;
8. ແຈ້ງເຕືອນ ເພື່ອໃຫ້ຜູ້ພັດທະນາເຂື່ອນປັບປຸງ ຫຼື ແກ້ໄຂບັນຫາທີ່ພົວພັນກັບການຄວາມປອດໄພຂອງເຂື່ອນ ໃນກໍລະນີເຫັນວ່າບັນຫາດັ່ງກ່າວຈະສົ່ງຜົນເສຍຫາຍຕໍ່ລັດຖະບານ ຫຼື ຄວາມປອດໄພດ້ານຊີວິດ, ສຸຂະພາບ ແລະ ຊັບສິນຂອງປະຊາຊົນ;
9. ສ້າງ, ບຳລຸງ, ຍົກລະດັບ, ຄຸ້ມຄອງ ແລະ ນຳໃຊ້ບຸກຄະລາກອນ ກ່ຽວກັບວຽກງານຄວາມປອດໄພຂອງເຂື່ອນ;
10. ປະສານສົມທົບກັບຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ໃນການຄຸ້ມຄອງຄວາມປອດໄພຂອງເຂື່ອນ;
11. ພົວພັນ ຮ່ວມມືກັບສາກົນ ກ່ຽວກັບວຽກງານຄວາມປອດໄພຂອງເຂື່ອນ ແລະ ການຊອກແຫຼ່ງທຶນ ເພື່ອພັດທະນາວຽກງານຄວາມປອດໄພຂອງເຂື່ອນ;
12. ສະຫຼຸບ, ລາຍງານ ຜົນຂອງການຈັດຕັ້ງປະຕິບັດວຽກງານຄວາມປອດໄພຂອງເຂື່ອນ ໃຫ້ລັດຖະບານ ຢ່າງເປັນປົກກະຕິ;
13. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 62 ສິດ ແລະ ໜ້າທີ່ຂອງພະແນກພະລັງງານ ແລະ ບໍ່ແຮ່ຂັ້ນແຂວງ**

ໃນການຄຸ້ມຄອງວຽກງານຄວາມປອດໄພຂອງເຂື່ອນໄຟຟ້າ ແລະ ເຂື່ອນຫາງແຮ່ ພະແນກພະລັງງານ ແລະ ບໍ່ແຮ່ຂັ້ນແຂວງ ມີສິດ ແລະ ໜ້າທີ່ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຜັນຂະຫຍາຍ ນະໂຍບາຍ, ແຜນຍຸດທະສາດ, ແຜນພັດທະນາ ແລະ ກົດໝາຍ ກ່ຽວກັບຄວາມປອດໄພຂອງເຂື່ອນເປັນລະບຽບການ, ແຜນການ, ແຜນງານ, ໂຄງການ ແລະ ຈັດຕັ້ງປະຕິບັດ;
2. ໂຄສະນາ ເຜີຍແຜ່ ແລະ ສຶກສາອົບຮົມ ນະໂຍບາຍ, ແຜນຍຸດທະສາດ, ແຜນພັດທະນາ ແລະ ກົດໝາຍ ກ່ຽວກັບຄວາມປອດໄພຂອງເຂື່ອນ;
3. ຊີ້ນຳ ແລະ ຕິດຕາມ ກວດກາ ການຈັດຕັ້ງປະຕິບັດກ່ຽວກັບຄວາມປອດໄພຂອງເຂື່ອນ;
4. ຮັບຮອງເອົາການແຕ່ງຕັ້ງຫົວໜ້າວິສະວະກອນ ຕາມການສະເໜີຂອງຜູ້ພັດທະນາເຂື່ອນຂະໜາດນ້ອຍ;
5. ຄົ້ນຄວ້າກ່ຽວກັບ ການຕໍ່ອາຍຸ, ການໂຈະ ຫຼື ການຖອນໃບອະນຸຍາດ ການດຳເນີນທຸລະກິດຂອງຜູ້ພັດທະນາເຂື່ອນຂະໜາດນ້ອຍ;
6. ຊີ້ນຳ ການສຳຫຼວດ ເກັບກຳຂໍ້ມູນ, ການຂຶ້ນສະຖິຕິກ່ຽວກັບຄວາມປອດໄພຂອງເຂື່ອນ ແລ້ວລາຍງານໃຫ້ກະຊວງພະລັງງານ ແລະ ບໍ່ແຮ່ ລວມທັງສ້າງຖານຂໍ້ມູນຄວາມປອດໄພຂອງເຂື່ອນ;
7. ຄົ້ນຄວ້າ, ໃຫ້ຄຳແນະນຳ ກ່ຽວກັບການຈັດຕັ້ງປະຕິບັດວຽກງານຄວາມປອດໄພຂອງເຂື່ອນ ສຳລັບເຂື່ອນຂະໜາດນ້ອຍ;
8. ສຶກສາ ຄົ້ນຄວ້າ ແລະ ໃຫ້ຄຳເຫັນດ້ານວິຊາການ ກ່ຽວກັບວຽກງານຄວາມປອດໄພຂອງເຂື່ອນຂະໜາດນ້ອຍ;

ອ່ານຕໍ່ສະບັບໜ້າ

## ສສຊ ປະກອບ...

(ຕໍ່ຈາກໜ້າ 1)

ງານຜົນການກວດກາຕາມການກວດສອບ ປີ 2021; ບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ກາງສະໄໝ 5 ປີ (2021-2025) ແລະ ທິດທາງແຜນການທ້າຍສະໄໝ ຮອດປີ 2025, ການຈັດຕັ້ງປະຕິບັດແຜນການປະຈຳປີ 2024 ຂອງອົງການກວດສອບແຫ່ງລັດ; ບົດລາຍງານຜົນການກວດສອບບົດສະຫຼຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ປະຈຳປີ 2022; ຈາກນັ້ນ, ຜູ້ຕາງໜ້າຄະນະປະຈຳສະພາແຫ່ງຊາດ ໄດ້ປະກອບຄຳເຫັນຕໍ່ບົດລາຍງານຂອງອົງການກວດກາແຫ່ງລັດ ແລະ ອົງການກວດສອບແຫ່ງລັດ.

ຫຼັງຈາກນັ້ນ, ປະທານກອງປະຊຸມ ກໍໄດ້ເຈາະຈີ້ມ ແລະ ໃຫ້ທິດຊີ້ນຳໃນການຄົ້ນຄ້ວາ ແລະ ປະກອບຄຳຄິດຄຳເຫັນ; ພ້ອມນັ້ນ, ບັນດາທ່ານສະມາຊິກສະພາແຫ່ງຊາດ ກໍໄດ້ສຸມສະຕິປັນຍາປະກອບຄຳຄິດຄຳເຫັນຢ່າງກົງໄປກົງມາ ຕໍ່ບັນດາບົດລາຍງານດັ່ງກ່າວ.

**(ກົງທະນູຄຳ ພິພັດເສລີ)**

## ປະຊາຊົນ...

(ຕໍ່ຈາກໜ້າ 1)

ໃຫ້ມັນທັນ ແລະ ປະກາດໃຊ້ໃນວັນທີ 1 ມັງກອນ 2024 ສິ່ງທີ່ພວກຂ້າພະເຈົ້າເປັນຫ່ວງຕາມທີ່ປະຊາຊົນໄດ້ສະເໜີດັ່ງນີ້:

ໃນການສັງລວມຂອງທ່ານລັດຖະມົນຕີ ແຕ່ເພິ່ນບໍ່ມີເວລາຈະເວົ້າຫຼາຍ ເພາະເວລາຈຳກັດ ແຕ່ວ່າຢູ່ໃນການສະຫຼຸບຂອງເພິ່ນນີ້ມີ 3 ຮ່ອງລາຍຮັບ ແລະ ລາຍຈ່າຍທີ່ວ່າຍັງເປັນຫ່ວງ ຢູ່ອັນທີ 1 ແມ່ນລາຍຮັບຈາກຜົນການກວດສອບເພິ່ນແກ້ໄຂໄປແລ້ວ ແຕ່ວ່າຍັງບໍ່ໄດ້ສະຫຼຸບເຂົ້າຢູ່ປີ 2023 ມະຕິເລກທີ 63 ຂອງສະພາແຫ່ງຊາດ ບອກວ່າຜົນການກວດສອບໃນປີ 2021 ເງິນທີ່ກວດເຫັນ ເພີ່ມ 120 ຕື້ ຕ້ອງໄດ້ພະຍາຍາມເກັບກູ້ເອົາ ແລະ ສະຫຼຸບຢູ່ໃນງົບປະມານນີ້ແຕ່ບໍ່ທັນເຫັນບັນຫາທີ 2 ແມ່ນການປະກອບສ່ວນຂອງສັງຄົມ ປີ 2021, 2022 ການສະຫຼຸບຂາດຕົວເຫັນແລ້ວ ແຕ່ວ່າການສະຫຼຸບຂອງ 2023 ຍັງບໍ່ເຫັນຕົວເລກ ປະຊາຊົນກໍເປັນຫ່ວງຫຼາຍ ເພາະອີງຕາມມາດຕາ 19 ຂອງກົດໝາຍງົບປະມານ ແຫຼ່ງລາຍຮັບມີ 4 ແຫຼ່ງ ແລະ ແຫຼ່ງທີ 4 ການປະກອບສ່ວນຂອງສັງຄົມນີ້ຍັງບໍ່ເຫັນອາດຈະແມ່ນຫຼົງລືມ ຫຼື ແນວໃດເນາະ ກໍຂໍຄຳຊີ້ແຈງ ເພາະວ່າປີ 2022 ທີ່ພວກທ່ານສະຫຼຸບຂາດຕົວເກັບເງິນຈາກການປະກອບສ່ວນຂອງສັງຄົມໄດ້ 107 ລ້ານ ພວກທ່ານກໍຂຽນໃສ່ແຕ່ປີ 2023 ປາກົດວ່າບໍ່ທັນໄດ້ຂຽນໃສ່ ອາດຈະແມ່ນທ້ອງຖິ່ນບໍ່ລາຍງານ ຫຼື ແນວໃດ, ບັນຫາທີ 3 ແມ່ນກອງທຶນ ດຽວນີ້ມີກອງທຶນລັດ 16 ກອງທຶນ ຂ້າພະເຈົ້າຂໍອະນຸຍາດກອງທຶນທາງ, ກອງທຶນຄວບຄຸມການບິນ, ກອງທຶນປົກປັກຮັກສາສິ່ງແວດລ້ອມ, ກອງທຶນສົ່ງເສີມ SME, ກອງທຶນປົກປັກຮັກສາປ່າໄມ້, ກອງທຶນເພື່ອນຮ່ວມງານເຄອາ 1, ກອງທຶນນ້ຳມັນ, ກອງທຶນຄຸ້ມຄອງໄພພິບັດ, ກອງທຶນສັງຄົມສົງເຄາະ, ກອງທຶນສົ່ງເສີມ ແລະ ພັດທະນາພະລັງງານ, ກອງທຶນພັດທະນາວິທະຍາສາດ ແລະ ເຕັກໂນໂລຊີ, ກອງທຶນປະກັນສຸຂະພາບແຫ່ງຊາດ, ກອງທຶນຄວບຄຸມຢາສູບ, ກອງທຶນການທ່ອງທ່ຽວ, ກອງທຶນມໍລະດົກແຫ່ງຊາດ, ກອງທຶນຄວບຄຸມສະກັດກັ້ນຕ້ານຢາເສບຕິດ, ໃນ 16 ກອງທຶນ ປາກົດວ່າມີແຕ່ 4 ກອງທຶນໄດ້ສັງລວມເຂົ້າຄົບຖ້ວນໃນງົບປະມານແຫ່ງລັດ ເປັນຕົ້ນກອງທຶນທາງ, ກອງທຶນສຸຂະພາບ, ກອງທຶນຄຸ້ມຄອງວິທະຍາສາດແຕ່ກອງທຶນອື່ນໆ ປາກົດວ່າຍັງລອຍນອນຢູ່ ທ່ານປະທານຍັງບໍ່ໄດ້ສັງລວມຄົບຖ້ວນຕາມມາດຕາ 6 ວ່າດ້ວຍງົບປະມານແຫ່ງລັດ ບໍ່ອະນຸຍາດໃຫ້ມີການເຄື່ອນໄຫວລາຍຮັບລາຍຈ່າຍຢູ່ນອກງົບປະມານແຫ່ງລັດ ໃນກອງທຶນນີ້ກໍຕ້ອງປະຕິບັດຕາມມາດຕາ 8 ຂອງກົດໝາຍງົບປະມານແຫ່ງລັດທີ່ເວົ້າວ່າ ກອງທຶນທຸກແຫຼ່ງລາຍຮັບລາຍ-ຈ່າຍຂອງກອງທຶນລັດຕ້ອງສັງລວມເປັນເອກະສານຊ້ອນທ້າຍຕິດຄັດກັບງົບປະມານແຫ່ງລັດປະຈຳປີ ແລະ ຕ້ອງສະຫຼຸບສັງລວມເປັນປະຈຳເດືອນ, ປະຈຳງວດ ແລະ ປະຈຳປີ ແລະ ບົດສະຫຼຸບຂາດຕົວ ກໍຕ້ອງເຮັດເປັນປົກກະຕິລາຍງານຕໍ່ກະຊວງການເງິນ ແລະ ອົງການກວດສອບແຫ່ງລັດ ອັນນີ້ກໍຕ້ອງໄດ້ເອົາໃຈໃສ່ແທ້ໆ ໃນຄວາມເປັນຫ່ວງຂອງປະຊາຊົນ ບັນຫາທີ 2 ທີ່ປະຊາຊົນຍັງເປັນຫ່ວງຫຼາຍເລື່ອງເສັ້ນທາງນີ້ ສະມາຊິກສະພາແຫ່ງຊາດ ເຂດເລືອກຕັ້ງທີ 18 ເດີນທາງມານະຄອນຫຼວງວຽງຈັນ ແຕ່ກີ້ນີ້ໃຊ້ເວລາແຕ່ 3 ເຖິງ 3 ຊົ່ວໂມງເຄິ່ງ ດຽວນີ້ 6 ຊົ່ວໂມງ ບາງຄັ້ງເຖິງ 8 ຊົ່ວໂມງ ແລະ ຊິເຮັດຈັ່ງໃດ ບັນຫາຂອງມັນກໍແມ່ນກອງທຶນທາງນີ້ແຫຼະ ໃນການບູລະນະເສັ້ນທາງ ອັນນີ້ເປັນຫ່ວງທີ່ສຸດມັນຈະທັນບໍ ປີ 2024 ນີ້ ແຕ່ງົບປະມານປີ 2023 ການຈັດແບ່ງງົບປະມານກະຊວງການເງິນອະນຸມັດໃຫ້ແລ້ວ 700 ຕື້ ຮອດກະຊວງແຜນການຕ້ອງຈັດແບ່ງສົມທົບກັບກະຊວງໂຍທາທິການ ແລະ ຂົນສົ່ງ ຮອດວັນທີ 19 ເດືອນ 9 ນີ້ເອງ ທ່ານຮອງປະທານຄະນະປະຈຳສະພາແຫ່ງຊາດ ຜູ້ຊີ້ນຳຍັງໄດ້ເອີ້ນພາກສ່ວນຕ່າງໆ ມາປະຊຸມກັນເລື່ອງກອງທຶນທາງ ຈົນຮອດເດືອນ 9 ເດືອນ 10 ແລະ ຊິເຮັດຈັ່ງໃດອັນນີ້ຂ້າພະເຈົ້າກໍເປັນຫ່ວງ ເພາະມັນພົວພັນກັບຫຼາຍພາກສ່ວນ ສະນັ້ນ, ຂ້າພະເຈົ້າກໍຄິດວ່າຄວາມເປັນຫ່ວງຂອງປະຊາຊົນພວກທ່ານຮູ້ດີ ນອກຈາກບັນຫາເຕັກນິກຄຸນນະພາບຕ່າງໆບໍ່ໄດ້ຄຸນນະພາບ ແລະ ເລື່ອງການຈັດສັນທຶນນີ້ປະຊາຊົນກໍເປັນຫ່ວງຫຼາຍ ສະນັ້ນ, ສະເໜີວ່າເງິນ 700 ຕື້ ຊິບໍ່ພຽງພໍ ພວກເຮົາຈະຕ້ອງໄດ້ຄິດຄືນໃໝ່ວ່າຊິເຮັດແນວໃດ ເພາະດຳລັດ 130/ລບ ກ່ຽວກັບກອງທຶນທາງກໍໄດ້ສະບຸແລ້ວວ່າກອງທຶນທາງມີ 6 ແຫຼ່ງທຶນ ອັນທີ 1 ແມ່ນຄ່າທຳນຽມນຳໃຊ້ນ້ຳມັນ 520 ກີບ/ລິດ ປີ 1 ບໍ່ຕ່ຳກວ່າ 1.200 ລ້ານລິດ ກໍຍັງກວດເຫັນຜິດດ່ຽງ ຄືທາງອົງການກວດສອບອາດຈະລາຍງານ ກໍບໍ່ຕ່ຳກວ່າ 1 ລ້ານກວ່າລິດ ແລະ ເກັບເງິນມັນໄດ້ພຽງພໍບໍ່ຄົບຖ້ວນບໍ່ເລື່ອງທີ 2 ຄ່າທຳນຽມລົດຜ່ານແດນ, ທີ 3 ຄ່າທຳນຽມທາງປະຈຳປີ ແຫຼ່ງທີ 4 ຄ່າບໍລິການຜ່ານຂົວທາງແຫຼ່ງທີ 5 ຄ່າປະມູນທະບຽນປ້າຍລົດຕ່າງໆປ້າຍງາມ ຫຼື ບໍ່ງາມຕ່າງໆ ແລະ ຜູ້ລະເມີດກົດໝາຍກ່ຽວກັບຈະລາຈອນທາງບົກຕ່າງໆ ອັນນີ້ກໍຕ້ອງສັງລວມເຂົ້າມາເງິນ 700 ຕື້ ບໍ່ພຽງພໍ ເພາະວ່າຄ່າເງິນມັນກໍຕົກ ອັນນີ້ກໍຕ້ອງໄດ້ຄິດໃໝ່ວ່າຊິເຮັດຈັ່ງໃດ ເພາະວ່າປະຊາຊົນຈົ່ມຫຼາຍ ເພາະນີ້ແມ່ນບັນຫາທີ່ປະຊາຊົນເປັນຫ່ວງວ່າແຫຼ່ງລາຍຮັບ ແລະ ການສັງລວມບ້ວງທຶນຕ່າງໆ ຈະທັນສະຫຼຸບເຂົ້າໃນແຜນ 2024 ໄດ້ທັນ ຫຼື ບໍ່ ເປັນຫ່ວງແທ້ໆ; ສະນັ້ນ, ພວກເຮົາຈະຕ້ອງໄດ້ຊຸກຍູ້ລັດຖະບານຢ່າງຈິງຈັງ ແລະ ຢູ່ທ້ອງຖິ່ນກໍເຊັ່ນດຽວກັນ.

**ຮຽບຮຽງໂດຍ:**
**ກົງໃຈ ແສງອຳພັນ**




# ປາກບໍ່ກົງກັບໃຈ

# ດົ້ນກົບເມກ



ເມື່ອໃດກໍຕາມ ຖ້າຄົນໃດໜຶ່ງເກີດພາວະປາກບໍ່ກົງກັບໃຈແລ້ວ ພຶດຕິກຳອອກມາກໍຍິ່ງຕ່າງຈາກຄຳເວົ້າທີ່ໄດ້ເວົ້າອອກມາ ປາກບໍ່ກົງກັບໃຈ ຄົນບູຮານວ່າ ປາກພະໃຈມານ, ປາກວ່າຕາຂະຫຍິບ,ປາກຫວານໃຈສົ້ມ ສິ່ງທີ່ເຮັດໃຫ້ໃຈບໍ່ກົງກັບປາກ, ພຶດຕິກຳບໍ່ກົງກັບຄຳເວົ້າ ມີຫຼາຍສາເຫດ ເຊິ່ງສາເຫດຫຼັກແມ່ນຜົນປະໂຫຍດ, ຄວາມໂລບ ການເຫັນແກ່ພັກພວກຍາດພີ່ນ້ອງ ຕົກລັກສະນະອະຄະຕິເຂົ້າຄອບງຳຄວາມຄິດຈິດໃຈ.

ຜູ້ຂຽນເຂົ້າໃຈວ່າ: ທ່ານຜູ້ອ່ານອາດພົບເຫັນຫຼາຍກໍລະນີທີ່ຄົນເຮົາປາກບໍ່ກົງກັບໃຈ, ບາງຄົນປະຫວັດຜ່ານມາ ໃຊ້ຊີວິດຊື່ສັດທ່ຽງຕົງ ຍຸດຕິທຳ ແຕ່ພໍຮອດຄາວມີອຳນາດປາລະມີພັດປ່ຽນເປັນຄົນລະຄົນ ນີ້ບໍທີ່ຊາວໂລກເຂົາວ່າ ອຳນາດປາລະມີ ເຮັດໃຫ້ຄົນດີໆ ກາຍເປັນຜີກໍໄດ້, ຜົນປະໂຫຍດເຮັດໃຫ້ຄົນ ກາຍເປັນຍັກເປັນມານ ບັນຫາແກ້ຍາກ ຫຼື ຫຼາຍຄັ້ງແກ້ບໍ່ຕົກ ຍ້ອນຖືກອະຄະຕິ 4 ຄອບງຳ ເຮົາຈຶ່ງຕ້ອງໄດ້ຮູ້ວ່າ ອະຄະຕິ ຄືທາງທີ່ບໍ່ຄວນເຮັດ, ບໍ່ຄວນປະພຶດ ຫຼື ແບບຢ່າງທີ່ບໍ່ຄວນປະພຶດ ເພາະມັນລຳອຽງ ເຂົ້າຂ້າງຄົນຜິດມີ 4 ປະການ: (1) ສັນທາຄະຕິ ລຳອຽງເພາະຮັກ, ເກີດສະໜິດສະໜົມ ເຂົ້າຂ້າງລຳອຽງຈົນເຮັດໃຫ້ການຕັດສິນໃຈຜິດພາດ ລະເມີດລະບຽບວິໄນເຫັນແກ່ພວກ (2) ໂທສະຄະຕິ ລຳອຽງເພາະຊັງເຖິງວ່າເຂົາຖືກເຂົາເກັ່ງກວ່າກໍຊ່າງ ເພາະຂ້ອຍຊັງເຈົ້າຈຶ່ງບໍ່ໃຫ້ຜ່ານ, ບໍ່ເລື່ອນບໍ່ສົ່ງເສີມ ນີ້ກໍຜິດລະບຽບໜ້າວຽກ(3)ພະຍາຄະຕິ ລຳອຽງ ເພາະຢ້ານ ຍົກຕົວຢ່າງ ພີ່ນ້ອງເຂົາ, ພໍ່ແມ່ເຂົາມີອຳນາດສູງກວ່າ ມີອິດທິພົນກວ່າ ຢ້ານກົວ ຈຶ່ງຍອມໃຫ້ເຂົາຜ່ານ... (4) ໂມຫາຄະຕິ ລຳອຽງ ເພາະຫຼົງຂາດປັນຍາ, ເວົ້າໃຫ້ສັ້ນຄືໂງ່ ບໍ່ຮູ້ຈັກຕັດສິນອັນໃດຖືກ-ຜິດ.

ສັງລວມເລື່ອງອະຄະຕິ: ນີ້ເວົ້າເນັ້ນສະເພາະຜູ້ເປັນຫົວໜ້າທຸກຄົນ ຕ້ອງມີຄຸນສົມບັດຖືຫຼັກການປະຕິບັດ ເວັ້ນບໍ່ໃຫ້ອະຄະຕິຄອບງຳ, ຫົວໜ້າກໍຕ້ອງເປັນແບບຢ່າງ, ປາກກົງກັບໃຈ ການປະພຶດຈຶ່ງອອກມາສອດຄ່ອງກັບຄຳເວົ້າ...

**ສະເໜີແລກປ່ຽນ**

# ເຄົ້າກຳເນີດພາສາລາວ

**ໂດຍ: Sengfa Hola**

"ໄດ້ຍິນເຂົາເວົ້າວ່າ ພາສາລາວມີເຄົ້າກຳເນີດມາຈາກພາສາປາລີ-ສັນສະກິດ ແມ່ນແທ້ຫວາ, ລຸງຄຳ?"

"ໃຜວ່າ? ພາສາລາວກະມາຈາກພາສາລາວເດີມ ທີ່ມີເຄົ້າກຳເນີດມາຈາກພາສາຕະກຸນໄຕຕວ່າ!"

"ແມ່ນຫວາ? ຫຼານຍັງບໍ່ເຂົ້າໃຈຄັກປານໃດ. ອະທິບາຍສູ່ຫຼານຟັງຄັກໆເບິ່ງດູ໋, ລຸງ!"

"ໄດ້ຕວ່າ! ຕັ້ງໃຈຟັງດີໆເດີ!"

ໃນໄລຍະຜ່ານມາ ພວກເຮົາມັກຫຼົງໄປວ່າ ກົກເຄົ້າຂອງພາສາລາວແມ່ນມາຈາກພາສາປາລີ -ສັນສະກິດ ກໍຍ້ອນໃນເວລາເຮົາຮຽນໄວຍາກອນລາວພາກວະຈີວິພາກໃນເອກະສານຈະສະເໜີກ່ຽວກັບຄຳເຄົ້າ ເຊິ່ງໄດ້ແບ່ງອອກເປັນຄຳເຄົ້າລາວເດີມ, ຄຳເຄົ້າລາວທີ່ໄດ້ມາຈາກພາສາປາລີ-ສັນສະກິດ ແລະ ຄຳເຄົ້າທີ່ຢືມມາຈາກພາສາອື່ນໆ.

ຈາກຈຸດນີ້ ຈຶ່ງພາໃຫ້ພວກເຮົາຫຼົງກັນລະຫວ່າງຄຳວ່າ "ຄຳເຄົ້າລາວ" ແລະ "ພາສາລາວ". ຈາກບ່ອນນີ້ ຈຶ່ງເຮັດໃຫ້ພວກເຮົາຈຳນວນໜຶ່ງຫຼົງຈາກອະລິທີ່ວ່າ "ຄຳເຄົ້າລາວທີ່ມາຈາກພາສາປາລີ-ສັນສະກິດ" ມາເປັນປະໂຫຍກ "ກົກເຄົ້າພາສາລາວມາຈາກພາສາປາລີ-ສັນສະກິດ" ເຊິ່ງຖືວ່າເປັນຄວາມເວົ້າທີ່ຜິດພາດ.

ພວກເຮົາຕ້ອງເຂົ້າໃຈວ່າ ພາສາລາວ ແລະ ພາສາປາລີ-ສັນສະກິດ ແມ່ນຢູ່ໃນຄົນລະຕະກຸນພາສາ. ພາສາລາວນອນຢູ່ໃນຕະກູນພາສາໄຕ-ກະໄດ ເຊິ່ງເປັນພາສາຄຳໂດດ, ສ່ວນພາສາປາລີ-ສັນສະກິດ ສັງກັດຢູ່ໃນຕະກຸນພາສາອິນໂດ-ເອີຣົບ ເຊິ່ງເປັນພາສາຜັນປ່ຽນຄຳ ຫຼືພາສາວິພັດ-ປັດໄຈ ດັ່ງດຽວກັບພາສາຝຣັ່ງ-ອັງກິດ-ເຢຍລະມັນ-ຣັດເຊຍ ເວົ້າງ່າຍໆກໍແມ່ນພາສາທີ່ມີການແຈກຄຳກິລິຍາ (Conjugaison)... ລະບົບສຽງ ແລະ ຫຼັກໄວຍາກອນກໍແຕກຕ່າງຢ່າງຂາດຂັ້ນ.

ພາສາປາລີ-ສັນສະກິດມາກ່ຽວພັນກັບພາສາລາວ ກໍມີພຽງແຕ່ຄຳສັບເທົ່ານັ້ນ ໝາຍຄວາມວ່າ ຊາວລາວເຮົາໄດ້ຢືມເອົາຄຳສັບຈາກພາສາປາລີ-ສັນສະກິດມາເພີ່ມໃສ່ຄັງສາງຄຳສັບຂອງພາສາລາວ ຄືດັ່ງພວກເຮົາຢືມເອົາຄຳສັບພາສາຝຣັ່ງ-ອັງກິດ ມາເພີ່ມໃສ່ພາສາພວກເຮົາໃນປັດຈຸບັນ ແຕ່ການຢືມນັ້ນ ບໍ່ແມ່ນເຮົາຈະເອົາມາໃຊ້ ແລະ ອອກສຽງຄືກັນກັບຄຳເດີມຂອງພາສາເຫຼົ່ານັ້ນອ້ອຍຕ້ອຍ ເຮົາໄດ້ມີການປັບປ່ຽນໃຫ້ສອດຄ່ອງກັບສຽງສຳນຽງຂອງລາວເຮົາ ແລະ ບາງເທື່ອກໍມີການແປງຄຳໃຫ້ມີລັກສະນະໃກ້ຄຽງກັບສຽງພາສາລາວເດີມ ເຊັ່ນ Nagara (ນະຄະຣະ) ເຮົາກໍປ່ຽນມາເປັນ ນະຄອນ, Tantri (ຕັນຕຣີ) ເຮົາກໍປ່ຽນມາເປັນ ດົນຕີ, Padesa (ປະເດສະ) ເຮົາກໍປ່ຽນມາເປັນ ປະເທດ ດັ່ງນີ້ເປັນຕົ້ນ. ພ້ອມດຽວກັນນັ້ນ ກໍໄດ້ຢືມວິທີສ້າງຄຳຈາກພາສາປາລີ-ສັນສະກິດມານຳໃຊ້ ເຊັ່ນ ສະໜາດ, ສິນທິ ເປັນຕົ້ນ.

ດັ່ງນັ້ນ ຖ້າພວກເຮົາເວົ້າວ່າ "ພາສາລາວມີຄຳເຄົ້າທີ່ມາຈາກພາສາປາລີ-ສັນສະກິດ ເປັນຈຳນວນຫຼວງຫຼາຍ" ຖືວ່າຖືກຕ້ອງ.



# ຂຽນຄຳລາວໃຫ້ຖືກ

#ດູແສງ

| ອັກສອນສູງ | ອັກສອນຕ່ຳ |
|---|---|
| ຂະນະນີ້ | ຄະນະຜູ້ແທນ |
| ຂັດຂ້ອງ | ຄັດຄ້ານ |
| ຂັບລົດ | ຄັບແຄບ |
| ຫົວຂ່າ | ຄຸນຄ່າ |
| ກົ້ນຂາບ | ປາກຄາບ |
| ຂາດເງິນ | ຄາດນາ |
| ໝາກຂ່າງ | ໂຕຄ່າງ |
| ນາບຂູ່ | ໜຶ່ງຄູ່ |
| ແຂ່ງຂັນ | ແຄ່ງຂາ |




# ວິທີເຮັດວຽກ

**ພາກທີ 4**

**ມາລະຍາດ ແລະ ຄຸນສົມບັດຂອງນັກປະຕິວັດ (ຕໍ່)**

ເວົ້າສະເພາະພັກ, ພັກໃດຫາກເຊື່ອງອຳຂໍ້ບົກພ່ອງຂອງຕົນ, ພັກນັ້ນ ກໍເປັນພັກທີ່ຖືວ່າເສຍແລ້ວ. ພັກໃດມີຄວາມກ້າຫານຮັບຂໍ້ບົກພ່ອງຂອງຕົນ, ຊີ້ອອກໃຫ້ເຫັນວ່າຂໍ້ບົກພ່ອງຂອງຕົນນັ້ນມັນເກີດມາຈາກໃສ, ກວດເບິ່ງໃຫ້ຄັກເຖິງສະພາບທີ່ພາໃຫ້ເກີດຂໍ້ບົກພ່ອງອັນນັ້ນ ແລ້ວຊອກທຸກວິທີ ເພື່ອແກ້ໄຂປ່ຽນແປງ, ດັ່ງນັ້ນຈຶ່ງແມ່ນພັກທີ່ກ້າວໜ້າທີ່ກ້າຫານ, ທີ່ຄັກແນ່ເດັດຂາດຈະເລີນເຕີບໂຕຂຶ້ນເລື້ອຍໆ ແລະ ຈະເປັນພັກທີ່ມີໄຊຊະນະຢູ່ເລື້ອຍໆ.

ພັກຕ້ອງຮູ້ຈັກຂໍ້ດີ ແລະ ຂໍ້ບົກພ່ອງຂອງຕົນ ເພື່ອອົບຮົມສັ່ງສອນສະມາຊິກຂອງພັກ ແລະ ອົບຮົມສັ່ງສອນປະຊາຊົນ ໃຫ້ຫຼີກເວັ້ນຂໍ້ບົກພ່ອງ ແລະ ເພີ່ມທະວີຂໍ້ດີທີ່ໄດ້ເຫັນມາແລ້ວ. ຜູ້ທີ່ຢ້ານການຕຳໜິ ກໍແປວ່າມີນິດໄສອາດຍາ ແປວ່າອວດວ່າຕົນດີອວດວ່າໂຕຖືກ, ເປັນຄືແມວຍ້ອງຫາງຂອງຕົນເອງວ່າຍາວງາມ.

ການຕຳໜິກັນ ບໍ່ແມ່ນເພື່ອໂຈມຕີກັນ, ບໍ່ແມ່ນເພື່ອຕິຕຽນແລ້ວເວົ້າຊົ່ວໃສ່ກັນ, ບໍ່ແມ່ນເພື່ອດ່າປ້ອຍກັນ, ແມ່ນຊີ້ບ່ອນຜິດໃຫ້ກັນເຫັນ ແລ້ວພ້ອມກັນຊອກວິທີແກ້ໄຂປ່ຽນແປງ, ເພື່ອຊ່ວຍກັນປະຖິ້ມຂໍ້ບົກພ່ອງຜິດພາດ, ເຮັດແຕ່ຂໍ້ດີ ແລະ ຊ່ວຍກັນກ້າວໜ້າເປັນຜູ້ດີຂຶ້ນເລື້ອຍໆ.

**ຊ) ພະຍາດປະຈົບປະແຈງ:**

ຍັງມີຄົນຈຳນວນໜຶ່ງ ເມື່ອເວົ້າຕໍ່ໜ້າໃຜກໍດີໝົດ, ລັບຫຼັງຊໍ້າພັດເວົ້າວ່າໃຜກໍຊົ່ວໝົດ ຢູ່ຕໍ່ໜ້າຜູ້ໃດ ຮູ້ວ່າເຂົາຊົ່ວ ກໍຍັງໄປຍ້ອງວ່າເຂົາດີ, ຜູ້ໃດດຶງໄປເຮັດຜິດ ຫຼື ເຮັດຖືກກໍໄປນຳໝົດ, ອ້າງທິດສະດີວ່າຕົກໝູ່ແຮ້ງເປັນແຮ້ງ ຕົກໝູ່ກາເປັນກາ, ບໍ່ກ້າຕິຕຽນສິ່ງທີ່ຜິດ ແລະ ບໍ່ກ້າຍ້ອງສິ່ງທີ່ຖືກ.

ຄົນຊະນິດນັ້ນເປັນຫຍ້າຄາກາງແກ່ວລົ້ມນຳໝົດທຸກລົມ,ເປັນນັກສວຍໂອກາດ, ເປັນນົກສູງຫົວ, ມີວາດສະໜາເປັນແຕ່ລູກນ້ອງຂອງຄົນອື່ນ, ອາໄສເພິ່ງແຕ່ຄົນອື່ນ, ບໍ່ສາມາດເປັນຫົວໜ້າຄົນໄດ້.

ອ່ານຕໍ່ສະບັບໜ້າ...



## ສຸກສະບາຍທາຍໂລດ

# 6 ພຶດຕິກຳທີ່ເປັນໄພງຽບ

**ໂດຍ: ສາວແອ່ນ**



ພະນັກງານທີ່ເຮັດວຽກໃນຫ້ອງການຫຼາຍທ່ານ ບໍ່ສາມາດປະຕິເສດໄດ້ວ່າ ຕ້ອງເຮັດວຽກໜັກເປັນປະຈຳຕະຫຼອດປີ ເຊິ່ງບາງຄັ້ງ ພຶດຕິກຳທີ່ເຮັດໃນຫ້ອງການ ໄດ້ສິ່ງຜົນກະທົບບໍ່ດີຫຼາຍຢ່າງຕໍ່ສຸຂະພາບ; ໃນຄໍລຳສຸກສະບາຍທາຍໂລດາສະບັບນີ້, ເຮົາໄດ້ລວມເອົາ 6 ພຶດຕິກຳທີ່ຖືວ່າເປັນໄພງຽບຂົ່ມຂູ່ສຸຂະພາບພະນັກງານຫ້ອງການ ອັນເປັນສາເຫດໃຫ້ເກີດພະຍາດຕ່າງໆ ມາໃຫ້ທ່ານຜູ້ອ່ານໄດ້ຮູ້ຈັກ ແລະ ສຶກສານຳກັນ ເຊິ່ງມີດັ່ງຕໍ່ໄປນີ້:

**1. ນອນເດິກ:** ຕ້ອງເຮັດວຽກໜັກເປັນປົກກະຕິ ແລະ ຕ້ອງຕື່ນເຊົ້າ ເພື່ອໄປເຮັດວຽກໃຫ້ທັນເວລາ ແຕ່ການນອນເດິກກາຍເປັນພຶດຕິກຳທີ່ເຮັດເປັນປະຈຳ ເຊິ່ງຈະພາໃຫ້ພັກຜ່ອນບໍ່ພຽງພໍ ເຮັດໃຫ້ສະມະທິສັ້ນ ແລະ ຍັງເຮັດໃຫ້ລະບົບຕ່າງໆໃນຮ່າງກາຍ ເຮັດວຽກໄດ້ບໍ່ເຕັມທີ່.

**2. ກິນອາຫານບໍ່ຖືກເວລາ:** ການກິນອາຫານບໍ່ຖືກເວລາ, ກິນອາຫານຢ່າງຟ້າວຟັ່ງ ແລະ ກິນບໍ່ພຽງພໍ ຫຼື ອາດຈະເກີນຄວາມຕ້ອງການຂອງຮ່າງກາຍ ເປັນອີກໜຶ່ງພຶດຕິກຳທີ່ພະນັກງານຫ້ອງການມັກຈະເຮັດ ຈຶ່ງພາໃຫ້ກະເພາະເຮັດວຽກໄດ້ບໍ່ປົກກະຕິ.

**3. ຕິດຈໍມືຖື:** ຢູ່ໜ້າຈໍຄອມພິວເຕີ ຫຼື ຈໍມືຖືຫຼາຍເກີນໄປ ມັນເປັນໄພຂົ່ມຂູ່ງຽບ ທີ່ພາໃຫ້ເກີດການເຈັບຫົວ ຫຼື ເຮັດໃຫ້ຕາວຸ້ນເສື່ອມສະພາບ ແລະ ຍັງສາມາດສົ່ງຜົນໃຫ້ນິ້ວມືລັອກນຳອີກ.

**4. ພາຍຖົງໜັກ:** ພຶດຕິກຳນີ້ ສາມາດເຮັດໃຫ້ເກີດການປວດບ່າ, ເຈັບຄໍ ແລະ ສາມາດລາມໄປສູ່ການເຈັບຫົວ ແລະ ເຈັບຫຼັງ ເຊິ່ງເປັນສາເຫດຂອງການຍຸບ ແລະ ການເສື່ອມຂອງກະດູກສັນຫຼັງ ຈົນເກີດເປັນຄວາມສ່ຽງທີ່ເຮັດໃຫ້ກະດູກທັບເສັ້ນປະສາດ ລວມທັງເຮັດໃຫ້ເກີດອາການແຂນຂາມຶນຊາ ແລະ ອ່ອນເພຍ.

**5. ນັ່ງຜິດທ່າ:** ອາດຈະເປັນຍ້ອນນິໄສ ຫຼື ຍ້ອນຮູ້ສຶກສະດວກສະບາຍກັບທ່ານັ່ງທີ່ບໍ່ຖືກຕ້ອງ ແຕ່ຖ້ານັ່ງຜິດທ່າເປັນເວລາດົນໆ ຈະເຮັດໃຫ້ເກີດອາການປວດບ່າ ແລະ ຫຼັງ ແລະ ຍັງເຮັດໃຫ້ເກີດຄວາມເມື່ອຍລ້າໃນການເຮັດວຽກໂດຍບໍ່ຮູ້ໂຕ ຖືເປັນພຶດຕິກຳທີ່ເຮັດໃຫ້ເກີດຄວາມທຸກທໍລະມານຫຼາຍໃນຊີວິດ.

**6. ກິນຈຸບຈິບໝົດມື້:** ຫຼາຍທ່ານເລືອກທີ່ຈະແກ້ຄວາມຢາກນອນ ໂດຍການກິນອາຫານຈຸບຈິບ ຫຼື ບາງຄົນກໍກິນໜ້ອຍໜຶ່ງ ແລະ ກິນແບບນັ້ນຢູ່ໝົດມື້ ເຊິ່ງພຶດຕິກຳນີ້ ຖືວ່າເປັນການເພີ່ມນ້ຳໜັກໃຫ້ກັບຮ່າງກາຍໂດຍບໍ່ຮູ້ຕົວ ເນື່ອງຈາກເກີດການສະສົມຂອງໄຂມັນ.

ສຳລັບທ່ານໃດທີ່ຮູ້ສຶກວ່າຕົນມີພຶດຕິກຳຕ່າງໆທີ່ກ່າວມາຂ້າງເທິງນັ້ນ ກໍຖືວ່າກຳລັງຖືກໄພຂົ່ມຂູ່ງຽບ ທີ່ອາດມີຜົນກະທົບທາງລົບຕໍ່ຮ່າງກາຍແລ້ວ. ສະນັ້ນ, ຢ່າລືມຮັກຕົນເອງໃຫ້ຫຼາຍ ໂດຍເລີ່ມຈາກການປັບປ່ຽນພຶດຕິກຳທັງ 6 ຢ່າງນີ້ກ່ອນ, ຈາກນັ້ນຄ່ອຍໆຫັນມາກິນອາຫານທີ່ດີຕໍ່ສຸຂະພາບ ແລະ ໃຫ້ເວລາຕົນເອງ ເພື່ອອອກກຳລັງກາຍ ເຊື່ອແນ່ວ່າຈະຊ່ວຍໃຫ້ສຸຂະພາບຂອງທ່ານ ດີຂຶ້ນຢ່າງແນ່ນອນ.

**ຂໍ້ມູນຈາກ:**
**www.sanook.com**



## ຫົກຫາຍ ສະບາຍ

*(ເລື່ອງເບົາໆ ເອົ້າແບບກັນເອງ ບໍ່ເຄັ່ງພິທີການ)*

# ສາວຈົ້ມ

❋ ***ກອງ**ປະຊຸມສະໄໝສາມັນ**ເທື່ອທີ 6** ຂອງສະພາແຫ່ງຊາດ **ຊຸດທີ IX** ເລີ່ມເຂົ້າອາທິດທີສອງ **ພອນຄຶກຄື້ນ**ປານເຮືອຊ່ວງຕີລ້າງບ້ານອງ **ສສຊ ມີຄ່າເທັນ**ເພື່ອປົກປ້ອງຜົນປະໂຫຍດປອງປະຊາ ໂດຍສະເພາະການພັດທະນາ ເພີ່ນໄດ້ຈິງຈັງເອົ້າ ເລື່ອງເຂົ້າສານອາຫານແຫ້ງ ຂອງແພງທັງສາເຫດ ເຮັດແນວໃດປະຊາລາວຊີໄດ້ ມີສຸກພ້ອມພັດທະນາ **ອົ້ມເຊີຍ!***

❋ ***ຕະຫຼອດ**ໄລຍະເວລາ 16 ວັນລັດຖະການ ທີ່ດຳເນີນກອງປະຊຸມສະໄໝສາມັນ ເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX (156) ເພີ່ນເອົ້າ **ສາຍດ່ວນ**ຂອງສະພາ ໃຫ້ທ່ານອາໂຫຼມາ ສົ່ງສານຂໍ້ມູນເອົ້າ **ເອົາບັນຫາຄາຊ້ອງ** ສະໜອງໄປຍັງຄະນະ ເພື່ອປຶກສາຊອກຄົ້ນ **ທາທາງແກ້ຊ່ວຍກັນ** ທ່ານເອີຍ! **(ອີເມວ: Nalao.156@gmail.com; App:lao na).***




## ລູກຊະໄພ້

**ໂດຍ: ໂອທອງ ຄຳອິນຊູ**

❋ ອັນນີ້ ຂຽນຖືກແລ້ວ
ສະກົດຕາມຄຳລາວ
ໄວຍາກອນອີງອ້າງ
ພາສາລາວແມ່ນຂ້ອຍ

ໃຜຢ່າມາຖຽງ
ແມ່ນຕາມສຽງເວົ້າ
ຢືນຢັນໂດຍກຽດ
ຂຽນໄດ້ແນ່ນອນ

❋ ແຕ່ກໍ ມີເພື່ອນຜູ້
ເພື່ອນວ່າ ຂຽນໂລເລ
ສະໃພ້ ຕາມເຄີຍໃຊ້
ຢ່າໄດ້ຂຽນຜິດພ້ຽນ

ຖຽງຢ່າງຈິງຈັງ
ບອກແປງຄຳນີ້
ມັນເປັນຄຳຖືກ
ຕາມຕັ້ງແຕ່ໃຈ

❋ ຂ້ອຍຖຽງເລີຍວ່າຂ້ອຍ
ຖືກຕ້ອງຕາມຄວາມໝາຍ
ບໍ່ໄດ້ ໂລເລລໍ້
ຂໍຢືນຢັນອີກຄັ້ງ

ຂຽນຖືກຕົວຈິງ
ແມ່ນຢຳຄຳນີ້
ຂຽນຕາມໃຈຊອບ
ຊຸມເຈົ້າຢ່າຖຽງ

❋ ຂ້ອຍໝາຍເຖິງລູກຜູ້
ແຕ່ລະວັນວົນວາຍ
ນັດແຕ່ກັນໄປຫຼິ້ນ
ເສຍເງິນມາຊະໄພ້

ເຫີນຫ່າງການງານ
ແຕ່ນຳວົງໄພ້
ການພະນັນແນວເສື່ອມ
ໃຈຮ້າຍກວ່າຜີ ຫັ້ນນາ.




## ຊວນຍິ້ມ

# ແອ່ນຕຸ້ງ

**ສະເໜ່ສາວມັກ**

ຊາຍຂີ້ໝາກເຫຼືອງຄົນໜຶ່ງ ຍ່າງເຂົ້າໂຮງແອບກຳລັງກາຍ, ພໍເຂົ້າໄປ ລາວກໍສັງເກດເຫັນສາວແຊັກຊີຄົນໜຶ່ງ, ລາວຈຶ່ງຍ່າງໄປຫາຄູເຝິກ ແລ້ວຖາມວ່າ:

\+ ໃຫ້ຂ້ອຍໃຊ້ເຄື່ອງໃດ ຈຶ່ງຊິເຮັດໃຫ້ສາວນັ້ນມັກ?

\- ໃຊ້ຕູ້ ATM ຢູ່ທາງນອກພຸ້ນ ແລ້ວຖອນເງິນອອກມາຫຼາຍໆ

\+ ?!



## ຄະຕິເຕືອນໃຈ

# ດອກຫຍ້າ

ວາຈານັ້ນ ຈາດີກໍມີໝູ່
ຈາເພາະຄວາມຄິດປູ້ ມີຊູ້ກໍໜ່າຍຊັງ




# ວິວັດທະນາການ ຂອງຄຳວ່າ "ທ້າວ"

"ທ້າວ" ແມ່ນຄຳນຳໜ້າຊື່ຂອງເພດຊາຍ ທີ່ມີວິວັດຄວາມເປັນມາອັນຍາວນານ. "ທ້າວ" ປາກົດເຫັນໃຊ້ທຳອິດຢູ່ໃນພື້ນຂຸນບູລົມ ເຊິ່ງເປັນຄຳນຳໜ້າຊື່ຂອງກະສັດ ດັ່ງ:

"ຂຸນບູລົມລາຊາທິລາດມີພະລາຊະໂອລົດປະສູດຈາກພະນາງ ຍົມມະລາ ເອກອັກຄະມະເຫສີ ແລະພະນາງເອັດແດງ ເທວີຊ້າຍ ທີ່ມີພະນາມຜາກົດຢູ່ 7 ອົງ: 1. ຂຸນລໍ 2. ທ້າວຜາລານ 3. ທ້າວຈູລົງ 4. ທ້າວຄຳຜົງ 5. ທ້າວອິນ 6. ທ້າວກົມ 7. ທ້າວເຈືອງ"

ຈາກລາຍຊື່ພະລາຊະໂອລົດຂອງຂຸນບູລົມ ນອກຈາກຂຸນລໍແລ້ວ ກໍລ້ວນແຕ່ໃຊ້ຄຳວ່າ ທ້າວ ນຳໜ້າຊື່ ເຊິ່ງສະແດງວ່າ ຄຳນຳໜ້າຊື່ຂອງກະສັດສະໄໝນັ້ນ ມີທັງ "ຂຸນ" ແລະ "ທ້າວ".

ໃນໜັງສືພື້ນຂຸນບູລົມ ຍັງບັນທຶກອີກວ່າ ຕໍ່ຈາກຂຸນລໍລົງມາ ມີລຳດັບກະສັດດັ່ງນີ້:

1. ຂຸນຊວາ 2. ຂຸນຍີ່ປາ 3. ຂຸນລູລີ 4. ທ້າວລອງ 5. ທ້າວລີ 6. ທ້າວຟ້າຍານ 7. ທ້າວຟ້າພານ 8. ທ້າວຟ້າກ່ຳ 9. ທ້າວອຸ້ນອງ 10. ທ້າວພອງລົມ 11. ເຈົ້າຟ້າໂງ່ມ ຫຼືຄຳຜົງ 12. ເຈົ້າຟ້າງຸ້ມ ຫຼືທ້າວຜີຟ້າ. ຈາກລາຍຊື່ກະສັດທັງ 12 ອົງນັ້ນ ປາກົດມີຄຳນຳໜ້າຊື່ **"ທ້າວ"** ເປັນສ່ວນຫຼາຍ.

ຈົນມາຮອດສະໄໝສະຕະວັດທີ 14 ຄຳນຳໜ້າຊື່ຂອງກະສັດ **"ທ້າວ"** ກໍປ່ຽນມາເປັນ "ເຈົ້າ" ດັ່ງໃນພົງສາວະດານລາວ ສະບັບມະຫາສີລາ ວີລະວົງ ໄດ້ກ່າວວ່າ: "ເຖິງ ຄສ 1356 ເຈົ້າຟ້າງຸ້ມຊົງຍົກທັບຫຼວງມາຕີວຽງຈັນ... ທ້າວໄຕເຈົ້າເມືອງດ່ານຊ້າຍທຳການຕໍ່ຕ້ານ..." ຈາກຂໍ້ຄວາມຕອນນີ້ ກໍສະແດງໃຫ້ເຫັນວ່າ ຄວາມໝາຍຂອງຄຳວ່າ "ທ້າວ" ໄດ້ຫຼຸດຕ່ຳລົງຈາກຄຳນຳໜ້າຊື່ກະສັດມາເປັນຄຳນຳໜ້າຊື່ເຈົ້າເມືອງ ຫຼືຄຳນຳໜ້າຊື່ຂອງລູກຊາຍຂອງກະສັດ ເຊັ່ນໃນສະໄໝເຈົ້າສາມແສນໄທ ມີພະລາຊະໂອລົດ 5 ພະອົງ: 1. ທ້າວລ້ານຄຳແດງ 2. ທ້າວວິໄຊ 3. ທ້າວຄຳເຕັມຊ້າ 4. ທ້າວວັງບຸລີ 5. ທ້າວກ້ອນຄຳ.

ຈົນຮອດສະຕະວັດທີ 17 ສະໄໝພະເຈົ້າສຸລິຍະວົງສາທຳມິກະລາດ. "ທ້າວ" ໄດ້ຫຼຸດຄວາມໝາຍຈາກຄຳນຳໜ້າຊື່ໂອລົດຂອງກະສັດ ໂດຍມີຄຳວ່າ "ເຈົ້າ" ມາແທນທີ່ ດັ່ງ: ເຈົ້າລາຊະບຸດ ເຊິ່ງເປັນພະລາຊະໂອລົດອົງດຽວຂອງພະເຈົ້າສຸລິຍະວົງສາ. ແລະ "ທ້າວ" ຍັງຮັກສາຄວາມໝາຍເປັນຄຳນຳໜ້າຊື່ຂອງເຈົ້າເມືອງ ເຊັ່ນ "ທ້າວປາງຄຳ" ເຈົ້າເມືອງໜອງບົວລຳພູ ເຊິ່ງເປັນຍອດກະວີ ຜູ້ແຕ່ງ "ໜັງສືສັງສິນໄຊ" ໃນສະໄໝອານາຈັກລ້ານຊ້າງຮຸ່ງເຮືອງ.

ຈົນມາຮອດສະໄໝອານາຈັກລ້ານຊ້າງຕົກເປັນປະເທດສະລາດຂອງສະຫຍາມ, ຄຳວ່າ "ທ້າວ" ນອກຈາກຈະເປັນຄຳນຳໜ້າຊື່ບາງເຈົ້າເມືອງ ແຕ່ພ້ອມກັນນັ້ນກໍຫຼຸດຄວາມໝາຍມາເປັນຄຳນຳໜ້າຊື່ຂອງນາຍກອງ ເຊັ່ນ "...ທ້າວຈູມມະນີ ສຸວັນນະກູດ ກັບທ້າວຄຳພູນ ສຸວັນນະກູດ ເປັນນາຍກອງ ຄວບຄຸມພົນລະພັກຊາວເມືອງຮ້ອຍເອັດ..."

ຈົນມາຮອດສະໄໝທີ່ລາວເຮົາຕົກເປັນເມືອງຂຶ້ນຂອງຝຣັ່ງ, ໃນຊຸມປີ 1920 ກໍໄດ້ເອົາຄຳວ່າ "ທ້າວ" ມາເປັນຄຳນຳໜ້າຊື່ຜູ້ຊາຍທົ່ວໄປ ເຊັ່ນ ສະໄໝກ່ອນນິຍົມໃຊ້ຊື່ເປັນຄຳພະຍາງດຽວ: ທ້າວສີ, ທ້າວຄຳ, ທ້າວອອນ, ທ້າວກ່ຳ; ມາສະໄໝປັດຈຸບັນກໍນິຍົມໃສ່ຊື່ທີ່ມີສອງພະຍາງຂຶ້ນໄປ: ທ້າວຄຳດີ, ທ້າວທອງດຳ, ທ້າວແສງຕາເວັນ, ທ້າວສຸລິຍະເດດ...

ເຖິງຄຳວ່າ "ທ້າວ" ຈະຫຼຸດຄວາມໝາຍໃຫ້ຕ່ຳລົງຈາກຄຳນຳໜ້າຊື່ຂອງກະສັດ ລົງມາສູ່ຄຳນຳໜ້າຊື່ຂອງປະຊາຊົນເພດຊາຍທົ່ວໄປບໍ່ວ່ານ້ອຍຫຼືໃຫຍ່ ແຕ່ຫຼາຍຄົນກໍມີຄວາມພູມໃຈໃນການໃຊ້ຄຳນຳໜ້ານີ້ ເຊັ່ນ:

ໃນຄະນະລາວອິດສະຫຼະໃນປີ 1945 ມີຈຳນວນໜຶ່ງກໍໄດ້ໃຊ້ "ທ້າວ" ຂຶ້ນເປັນຄຳນຳໜ້າຊື່ຂອງຕົນ ດັ່ງ: ທ້າວກະຕ່າຍ, ທ້າວຫຍຸຍ, ທ້າວທຳ, ທ້າວບົງ, ທ້າວພອນ ພົມລາດ, ທ້າວຄຳໃບ ພີລາພັນເດດ, ທ້າວເກື້ອງ ປະທຸມຊາດ, ທ້າວບົວຈັນ ອິນທະວົງ ເປັນຕົ້ນ.

ພ້ອມດຽວກັນນັ້ນ ຢູ່ໃນຄະນະກຳມະການອັນນະຄະດີ ປີ 1953 ກໍມີກຳມະການຈຳນວນໜຶ່ງໃສ່ຄຳນຳໜ້າ "ທ້າວ" ຢູ່ຕໍ່ໜ້າຊື່ຂອງຕົນ ເຊັ່ນ ທ້າວເກື້ອງ ປະທຸມຊາດ, ທ້າວໜູທັກ ສິດທິມໍລະດາ, ທ້າວເກນ ເປັນຕົ້ນ.

ຢູ່ໃນບົດວັນນະກຳຕ່າງໆກໍປາກົດເຫັນຜູ້ແຕ່ງໃສ່ຄຳນຳໜ້າຊື່ "ທ້າວ" ນັບແຕ່ສະຕະວັດທີ 17 ເປັນຕົ້ນມາ ເຖິງປັດຈຸບັນ ເຊັ່ນ ທ້າວປາງຄຳ (ໜັງສືສັງສິນໄຊ), ທ້າວເກນ (ໜອງຜີເຜດ), ທ້າວສີສະຫຼຽວ ສະແຫວງສຶກສາ (ທ້າວກໍ່າເປ), ທ້າວກາບແກ້ວ ທຳມະວົງ (ປະຫວັດຊົນຊາດລາວ 5.000 ປີ).

ມາຮອດປັດຈຸບັນພວກເຮົາເພດຊາຍທຸກຄົນແມ່ນມີຄວາມພູມໃຈທີ່ມີຄຳນຳໜ້າຊື່ວ່າ "ທ້າວ" ເຊິ່ງຕິດຢູ່ໃນໃບລາຍເກີດ, ບັດປະຈຳຕົວ, ໃບຂັບຂີ່, ໃບຢັ້ງຢືນທີ່ຢູ່ ແລະເອກະສານຕ່າງໆ. ເວລາໄປໂຮງຮຽນແຕ່ປະຖົມເຖິງມະຫາວິທະຍາໄລ, ຄູ-ອາຈານກໍເອີ້ນຄຳວ່າ "ທ້າວ" ນຳໜ້າຊື່. ເວລາໄປໂຮງໝໍກອດພະຍາດ ທ່ານໝໍກໍມັກຈະເອີ້ນ "ທ້າວ" ນຳໜ້າຊື່ຢູ່ສະເໝີ. (ແຕ່ດຽວນີ້ ຜູ້ໃດສິອ່ວເຖົ້າແລ້ວ ບາງເທື່ອເພິ່ນກໍໃສ່ຄຳນຳໜ້າຊື່ວ່າ ລຸງ"! ໃຫ້)

# ສະມັດຊາໃຫຍ່ UN ລົງມະຕິຮຽກຮ້ອງຢຸດຍິງຢູ່ກາຊາ



ກອງປະຊຸມສະມັດຊາໃຫຍ່ແຫ່ງສະຫະປະຊາຊາດ ຢູ່ນະຄອນນິວຢອກຂອງອາເມຣິກາ ມີມະຕິສຳຄັນ ກ່ຽວກັບວິກິດການສູ້ຮົບຢູ່ເຂດກາຊາ ໂດຍຮຽກຮ້ອງໃຫ້ມີ "ການຢຸດຍິງເພື່ອມະນຸດສະທຳ" ໃນທັນທີ ເພື່ອນຳໄປສູ່ການຢຸດຕິການສູ້ຮົບ ແລະ ເປີດທາງສຳລັບການຊ່ວຍເຫຼືອ ແລະ ຄຸ້ມຄອງຊີວິດພົນລະເຮືອນ ແລະ ເຈົ້າໜ້າທີ່ດ້ານມະນຸດສະທຳໃນກາຊາ.

ໂດຍ 193 ປະເທດສະມາຊິກອົງການສະຫະປະຊາຊາດ (UN) ມີມະຕິຈະແຈ້ງດ້ວຍຄະແນນສຽງສະໜັບສະໜູນ 121 ຕໍ່ 14 ສຽງ ແລະ ງົດອອກສຽງ 44 ສຽງ.

ຮ່າງມະຕິດັ່ງກ່າວເຊິ່ງສະເໜີໂດຍປະເທດອາຣັບ ບໍ່ມີຜົນຜູກມັດຕາມກົດໝາຍ, ແຕ່ຖືເປັນການສະທ້ອນຄວາມກັງວົນຂອງທົ່ວໂລກທີ່ມີຕໍ່ສະຖານະການຢູ່ເຂດກາຊາ.

ຂະນະທີ່ກ່ອນການລົງມະຕິ, ກອງປະຊຸມໄດ້ປະຕິເສດຮ່າງມະຕິສະບັບແກ້ໄຂທີ່ສະເໜີໂດຍການາດາ ແລະ ອາເມຣິກາ ເຊິ່ງຕ້ອງການໃຫ້ປະນາມການໂຈມຕີກໍ່ການຮ້າຍຂອງກຸ່ມຮາມັດຕໍ່ອິດສະຣາແອນໃນວັນທີ 7 ຕຸລາ ແລະ ຮຽກຮ້ອງໃຫ້ຮາມັດ ປ່ອຍຕົວປະກັນທີ່ຖືກຈັບໄປທັນທີ.

# ມົງໂກນ ຈຳກັດການນຳເຂົ້າລົດເພື່ອຫຼຸດບັນຫາການຈາລະຈອນແອອັດ



ຕາມການລາຍງານຂ່າວໃນວັນທີ 30 ຕຸລາ 2023 ໃຫ້ຮູ້ວ່າ: ທ່ານ ຄິສກີ ໄນມາຕາ ເຈົ້າຄອງນະຄອນຫຼວງອູລານບາຕໍ ໄດ້ແຈ້ງໃຫ້ຊາບວ່າ: ມົງໂກລີ ຈະຈຳກັດການນຳເຂົ້າລົດເພື່ອຫຼຸດຜ່ອນບັນຫາລົດຕິດໃນນະຄອນຫຼວງ.

ທ່ານ ຄິສກີ ໄນມາຕາ ກ່າວວ່າ: ບັນຫາການຈາລະຈອນແອອັດແມ່ນບັນຫາໜຶ່ງທີ່ສິ່ງສຽງດັງລົບກວນຊາວເມືອງອູລານບາຕໍ ທີ່ສຸດ, ມີການຄາດຄະເນວ່າ ຊາວເມືອງອູລານບາຕໍ ຕ້ອງເສຍເວລາເຖິງ 717 ຊົ່ວໂມງ ຫຼື ເກືອບວ່າໜຶ່ງເດືອນຕໍ່ປີທີ່ລົດຕິດໃນທ້ອງທາງ.

ບັນຫາການຈາລະຈອນຍັງບໍ່ສາມາດແກ້ໄຂໄດ້ຖ້າຫາກວ່າຍັງບໍ່ຈຳກັດການນຳເຂົ້າລົດ. ສະນັ້ນ, ພວກເຮົາຈຶ່ງມີແຜນການຈຳກັດການນຳເຂົ້າລົດ ແລະ ມີຄວາມເຂັ້ມງວດໃນການເຮັດຝ່າຍລົດໃໝ່. ເປັນເວລາຫຼາຍປີມາແລ້ວ, ບັນຫາການຈາລະຈອນແອອັດໄດ້ກາຍເປັນບັນຫາໜັກໜ່ວງທີ່ສຸດສຳລັບຊາວເມືອງອູລານບາຕໍ. ຊາວເມືອງອູລານບາຕໍແຫ່ງນີ້ມີປະມານ 5 ແສນຄົນ, ແຕ່ປັດຈຸບັນເມືອງແຫ່ງນີ້ໄດ້ກາຍເປັນທີ່ຢູ່ອາໄສຂອງຄົນປະມານເຄິ່ງໜຶ່ງຂອງພົນລະເມືອງຂອງປະເທດທັງໝົດ 3,4 ລ້ານຄົນ.

ປັດຈຸບັນໃນນະຄອນຫຼວງອູລານບາຕໍ ມີລົດທີ່ຈົດທະບຽນແລ້ວ 720.000 ຄັນ. ເຈົ້າຄອງນະຄອນຫຼວງກ່າວວ່າ: ຈຳນວນລົດໃນນະຄອນຫຼວງອູລານບາຕໍ ໄດ້ເພີ່ມຂຶ້ນໂດຍສະເລ່ຍແມ່ນ 50.000 ຄັນຕໍ່ປີ.




ເພິ່ນວ່າ: ຄົນທີ່ຢູ່ຄຽງຂ້າງເຮົາໄດ້ຕະຫຼອດຊີວິດ ກໍຄືແມ່ຜູ້ໃຫ້ກຳເນີດເຮົາ, ຄົນທີ່ຮັກເຮົາຊົ່ວນິລັນດອນ ກໍຍັງເປັນແມ່ຂອງເຮົາ ແລະ ຄົນທີ່ທົນຮັບໃຊ້ເຮົາຕະຫຼອດຊີວິດ ໂດຍບໍ່ຫວັງຄ່າຈ້າງ ກໍຄືແມ່ຄົນດຽວຂອງເຮົານັ້ນເອງ.

## ເບິ່ງໄວ້ ໄດ້ບົດຮຽນ

❖ ວິເສດ ສະແຫວງສຶກສາ

# ການເສຍສະລະ ເພື່ອເພື່ອນມະນຸດດ້ວຍກັນ 1

ພົບກັນເປັນປະຈຳ ກັບຄຳລຳ "ເບິ່ງໄວ້ ໄດ້ບົດຮຽນ" ທີ່ເຮັດໜ້າທີ່ກັ່ນຕອງເອົາເລື່ອງເດັດໆຈາກຕ່າງປະເທດໃນຂົງເຂດນິຕິກຳ, ນະໂຍບາຍ ກໍຄືມາດຕະການຕ່າງໆໃນການຄຸ້ມຄອງລັດ-ຄຸ້ມຄອງສັງຄົມ ມາເວົ້າໃຫ້ຟັງ ເພາະເຫັນວ່າບາງເລື່ອງກໍຄວນເກັບໄວ້ເປັນບົດຮຽນ. ສຳລັບເລື່ອງທີ່ຊິເວົ້າໃຫ້ຟັງທຳອິດປະຈຳວັນນີ້ ກໍຄືແນວຄວາມຄິດດີໆ **ອົງການສະຫະປະຊາຊາດ (ສປຊ)** ທີ່ສະເໜີອອກມາໃນຕົ້ນປີ 2016, ຕອນທີ່ທ່ານ ບັນກີມູນ (ຈາກ ສ ເກົາຫຼີ) ຍັງເປັນເລຂາທິການໃຫຍ່ຂອງອົງການດັ່ງກ່າວ. ແນວຄວາມຄິດທີ່ວ່ານັ້ນກໍຄືຂໍ້ສະເໜີໃຫ້ເກັບພາສີແບບສະໝັກໃຈຈາກກິດຈະການບັນເທີງເຊັ່ນ: ການຂາຍປີ້ເຂົ້າຊົມຄອນເສີດ, ງານມະຫະກຳການບັນເທີງອື່ນໆ, ງານແຂ່ງຂັນກິລາ ລາມໄປຮອດການເກັບພາສີຄ່າປີ້ຍົນ. ຂໍຢໍ້າອີກເທື່ອໜຶ່ງວ່າ ພາສີນີ້ແມ່ນເກັບດ້ວຍຄວາມສະໝັກໃຈ ບໍ່ໄດ້ບັງຄັບ ຫຼື ລົງໂທດຫຍັງໝົດ. ສາເຫດທີ່ພາໃຫ້ເກີດແນວຄວາມຄິດດີໆນີ້ ກໍເພາະວ່າໃນຍຸກທ່ານບັນກີມູນ ເປັນເລຂາທິການໃຫ່ຍນັ້ນ, ທາງອົງການຕ້ອງການເງິນຈຳນວນ 40.000 ລ້ານໂດລາສະຫະລັດ (ຫຼື 40 ຕື້ໂດລາ) ເພື່ອໃຊ້ຈ່າຍແກ້ໄຂບັນຫາຄວາມທຸກຍາກໃນທົ່ວໂລກ ແຕ່ເງິນທີ່ທາງອົງການມີຕົວຈິງສຳລັບການໃຊ້ຈ່າຍໃນດ້ານ ພັດມີພຽງ 25.000 ລ້ານໂດລາເທົ່ານັ້ນ. ນັບແຕ່ປີ 2000 ຫາປີ 2016, ຈຳນວນຄົນທຸກຍາກໃນໂລກໄດ້ເພີ່ມຂຶ້ນ 12 ເທົ່າຕົວ. ໃນປີ 2000 ຈຳນວນເງິນສູງສຸດທີ່ຕ້ອງການນຳໃຊ້ເພື່ອບັນເທົາຄວາມທຸກຍາກມີພຽງ 2000 ລ້ານໂດລາກໍພຽງພໍ. ໃນປັດຈຸບັນ ເປັນທີ່ຕ້ອງການເພື່ອຊ່ວຍດ້ານນີ້ ແນ່ນອນກໍຄົງເພີ່ມບໍ່ຈັກວ່າເທົ່າໃດທົບ. ອີງໃສ່ບັນຫາຄວາມທຸກຍາກທີ່ເກີດຈາກການຂັດແຍ່ງທາງກຳລັງທະຫານ, ພະຍາດລະບາດ ແລະ ຈາກໄພພິບັດທາງທຳມະຊາດ.

ການສະເໜີເກັບພາສີແບບສະໝັກໃຈນີ້ ເປັນແນວຄິດລິເລີ່ມທີ່ດີແຕ່ການປະຕິບັດໃຫ້ເປັນຈິງນັ້ນ ມັນພັດຍາກ ປານແກ່ໄມ້ທາງປາຍ. ຍ້ອນວ່າຂໍ້ສະເໜີນີ້ອອກມາປຸບ, ທ່ານ ນາງ ຄຣິດສະຕາລີນາ ຈໍຈີເອວາ ກໍຂານຮັບປັບໂລດ, ເພາະມັນເປັນວຽກຂອງເພິ່ນໃນຖານະເປັນຮອງປະທານຄະນະກຳມະການເອີຣົບດ້ານງົບປະມານ (ໃນເວລານັ້ນ) ທ່ານ ນາງ ຄຣິດສະຕາລີນາ ພ້ອມດ້ວຍຄະນະໄດ້ເຮັດວຽກຢ່າງຂຸ້ນຂ້ຽວ ເພື່ອຜັນຂະຫຍາຍຂໍ້ສະເໜີດັ່ງກ່າວ ໂດຍຂຶ້ນແຜນເຮັດທົດລອງຢູ່ເອີຣົບກ່ອນ, ແຕ່ແລ້ວຂໍ້ສະເໜີດີໆດັ່ງກ່າວກໍປະເຊີນກັບກະແສຂັດຄ້ານຢ່າງແຂງແຮງຈາກຫຼາຍປະເທດວ່າ ເປັນແນວຄິດຝັນກາງເວັນທີ່ເປັນໄປບໍ່ໄດ້. ບັນດາປະເທດທີ່ຂັດຄ້ານນັ້ນລວມມີທັງປະເທດອຸດສາຫະກຳຮັ່ງມີ ແລະ ປະເທດທີ່ພັດທະນາຂັ້ນແຖວໜ້າຂອງໂລກ. ເວົ້າໄດ້ວ່າ ແນວຄິດນີ້ຖືກປະລາໄຊ ກ່ອນລົງມືປະຕິບັດຊໍ້າ ແຕ່ມັນກໍໄດ້ສົ່ງສັນຍານທີ່ດີໃຫ້ບັນດາປະເທດຮັ່ງມີ ກໍຄືເຫຼົ່າມະຫາເສດຖີ ເຫັນເຖິງຄວາມຈຳເປັນທີ່ຈະຕ້ອງບີແບ່ງຄວາມລວຍຂອງພວກຕົນ ເພື່ອຊ່ວຍເພື່ອນຮ່ວມໂລກທີ່ຍັງທຸກຍາກຫິວໂຫຍຢູ່. ຈາກແນວຄວາມຄິດດີໆໃນຍຸກຂອງທ່ານ ບັນກີມູນ ເປັນເລຂາທິການໃຫ່ຍ ສປຊ ກໍມີຂ່າວຕໍ່ໆມາວ່າຫຼາຍປະເທດໄດ້ຄົ້ນຄວ້າລະບຽບການກໍຄືກົດໝາຍເກັບພາສີສູງຂຶ້ນໃນຂະແໜງ "ເສດຖະກິດຟຸ່ມເຟືອຍ", ມີບາງປະເທດກໍນຳບັນຫາ "ພາສີເສດຖີ" ເຂົ້າສະພາເພື່ອໃຫ້ ສສຊ ປັບຂຶ້ນພາສີຈາກຄົນຮັ່ງເຊັ່ນ ຢູ່ມຽນມາ ໃນເມື່ອກ່ອນ ແລະ ຫຼາຍໆປະເທດໃນເຂດທະເລ ບານຕິກ.

ເລື່ອງທີສອງທີ່ຂໍເວົ້າໃຫ້ຟັງປິດທ້າຍ ກໍແມ່ນເລື່ອງເສຍສະຫຼະເຊັ່ນກັນ ແຕ່ເປັນການອຸທິດ ອະໄວຍະວະຂອງຕົນ ເພື່ອກອບກູ້ເອົາຊີວິດຄົນອື່ນ. ຂ່າວທີ່ອອກມາຈາກ **ສປ ຈີນ** ເມື່ອປະມານ 5 ປີຜ່ານມານີ້ ບອກວ່າຈຳນວນຄົນທີ່ລົງທະບຽນຂໍມອບອະໄວຍະວະຂອງຕົນໃຫ້ຜູ້ອື່ນທີ່ຕ້ອງການເມື່ອຕົນເສຍຊີວິດລົງມີ 4.080 ຄົນ ໃນປີ 2015, ເພີ່ມຂຶ້ນເປັນ 4.207 ຄົນ ໃນປີ 2016 ແລະ ເພີ່ມຂຶ້ນຫຼາຍກວ່າ 5000 ຄົນໃນປີ 2017. ສ່ວນຜູ້ທີ່ຍັງມີຊີວິດຢູ່ ແຕ່ຕົກລົງມອບອະໄວຍະວະໃດໜຶ່ງ ເພື່ອປູກຖ່າຍໃຫ້ສະມາຊິກຄອບຄົວນັ້ນ ມີເຖິງ 7000 ຄົນໃນທ້າຍປີ 2017. ສະຖິຕິທີ່ອ້າງມານີ້ອາວເກົ່າ ແຕ່ກໍເປັນແວ່ນແຍງທີ່ດີກ່ຽວກັບຈິດໃຈມະນຸດສະທຳ. ປະເທດທີ່ມີອັດຕາການບໍລິຈາກອະໄວຍະວະຫຼາຍທີ່ສຸດໃນໂລກແມ່ນແອັດສະປາຍ (ສະເປນ)ຄື ກວມເອົາ 35% ຕໍ່ປະຊາກອນໃນແຕ່ລະ 1 ລ້ານຄົນ.

## ຮຽນພາສາ ຜ່ານສຽງຫົວ



# ໃບນາມ

*# ບ່າວກະບື*

ສົມສີ ກັບສີລາ, ສອງສ່ຽວທີ່ແຍກຈາກກັນບໍ່ໄດ້ ໃຊ້ເວລາດື່ມຮ່ວມກັບທຸກໆຕອນແລງ. ແລ້ວສຸດທ້າຍມາ, ສີລາ ພັດຖືກສົ່ງໄປເຮັດວຽກຢູ່ແຂວງພາກໃຕ້. ທີ່ວຽງຈັນ, ເພື່ອຮັກສາຄວາມຊົງຈຳກ່ຽວກັບເພື່ອນໃຫ້ມີຊີວິດຊີວາ, ສົມສີເທຍັ້ນເບຍໃສ່ທັງສອງຈອກຢູ່ສະເໝີ ແລ້ວປ່ຽນດື່ມຈອກນັ້ນຈອກນີ້ ເມື່ອມີຜູ້ຖາມວ່າ ເປັນຫຍັງເຂົາຈຶ່ງເຮັດແນວນັ້ນ, ເຂົາຊີ້ແຈງວ່າ: "ຈອກນັ້ນແມ່ນຂອງສີລາ, ຈອກນີ້ແມ່ນຂອງເຮົາ. ເຮົາດື່ມຈາກແຕ່ລະຈອກ ໃນນາມສ່ຽວສີລາ ແລະ ເພື່ອເຮົາເອງ". ແຕ່ແລ້ວ ຢູ່ບໍ່ຢູ່, ແລງວັນໜຶ່ງ ມີຄົນເຫັນສົມສີນັ່ງຢູ່ຄົນດຽວກັບຈອກເບຍພຽງຈອກດຽວຕັ້ງຢູ່ເທິງໂຕະ. ເມື່ອມີຄົນຖາມເຂົາວ່າມີຫຍັງເກີດຂຶ້ນ. ເຂົາຕອບວ່າ: "ຄືຈັ່ງຊີ້... ເຮົາເຊົາດື່ມເບຍແລ້ວ ແຕ່ສ່ຽວສີລາມັນບໍ່ເຊົາ. ດັ່ງນັ້ນ, ເຮົາຈຶ່ງເອົາຈອກເຮົາໄປມ້ຽນ ແລະ ດື່ມໃນນາມສ່ຽວສີລາຜູ້ດຽວ."

# ON BEHALF OF...

*# BAOKBU*

Somsy and Sila were inseparable friends and spent their evening drinking together. Finally Sila was sent to work in a southern province. In Vientiane, to keep his friend's memory alive Somsy always filled two glasses with beer and drank from each alternately. When somebody asked him why he did so, he explained: "That glass is Sila's, this one is mine. So I drink from each one on behalf of Sila and the other for myself" Suddenly one evening Somsy was seen alone with only one glass on his table. He was asked what had happened He replied, "you see, I have given up drinking beer but Sila has not. So I have put away my glass and drink only on behalf of my friend... Sila"

## ອ່ານມ່ວນ ຊວນຍິ້ມ




ທາງຍ່າງສາທາລະນະ ເປັນບ່ອນຫາລາຍໄດ້ພິເສດ

● ໂດຍ : ພູຜາ

ທະນາຄານພັດທະນາລາວ
LDB Bank

ບໍລິສັດ ຫຼວງພະບາງ ພາວເວີ ຈຳກັດ
LUANG PRABANG POWER COMPANY LIMITED

ບໍລິສັດ ກຸ່ມດວງຈະເລີນ ພັດທະນາກໍ່ສ້າງ ຈຳກັດຜູ້ດຽວ
DDC Group Sole Co.,Ltd
Douang Chaleurn Development Construction Group Sole Co.,Ltd

**ຜູ້ຊີ້ນຳ :** ທ່ານ ສົງຄຳ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ :** ທ່ານ ສີສຸພັນ ແສງສະຫວັນ; ທ່ານ ວິເສດ ສະແຫວງສຶກສາ; ທ່ານ ທອງດາ ສຸພາສິດ; ທ່ານ ຄຳຫວັນ ດາລາວົງ

**ຄະນະບັນນາທິການ :** ທ່ານ ປອ. ພົດສະໄໝ ບຸນວິໄລ ຫົວໜ້າ ບກ; ທ່ານ ອັນທະວີ ວົງພະຈັນ ຮອງ; ທ່ານ ເປຄຳ ລໍຄຳສອນ ຮອງ

**ກອງບັນນາທິການ :** ນາງ ກົງໃຈ ແສງອຳພັນ; ນາງ ສຸພາວັນ ຫອມສະນິດ; ນາງ ປາກາລັກ ພົມມີໄຊ

**ອອກແບບ - ຈັດໜ້າ :** ນາງ ນິດຕາ ຄຸນປາກດີ